ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ແຜນດຳເນີນງານແຫ່ງຊາດ

## ເພື່ອແມ່ ແລະ ເດັກ

### 5 ປີ ຄັ້ງທີ III 2021–2025

ນະຄອນຫຼວງວຽງຈັນ

24 ພຶດສະພາ 2021



ຮູບໜ້າປົກ: *©UNICEFLaos*

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ແຜນດຳເນີນງານແຫ່ງຊາດ

## ເພື່ອແມ່ ແລະ ເດັກ

## 5 ປີ ຄັ້ງທີ III 2021–2025

ຄະນະກຳມາທິການແຫ່ງຊາດ
ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່-ເດັກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ ເລກທີ 578 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 28.9.2021

# ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ແຜນດຳເນີນງານແຫ່ງຊາດ ເພື່ອແມ່ ແລະ ເດັກ 5 ປີ ຄັ້ງທີ III (2021-2025)

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ຈີກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ສະບັບເລກທີ 05/ສພຊ, ລົງວັນທີ 27 ທັນວາ 2006;
- ອີງຕາມ ມະຕິກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ພຶດສະພາ ສະບັບເລກທີ 03/ລບ, ລົງວັນທີ 25 ພຶດສະພາ 2021;
- ອີງຕາມ ໜັງສືສະເໜີ ຂອງຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່ເດັກ, ສະບັບເລກທີ 113/ຄຊກມດ, ລົງວັນທີ 08 ກໍລະກົດ 2021.

### ນາຍົກລັດຖະມົນຕີ ອອກດຳລັດ:

ມາດຕາ 1 ຮັບຮອງ ແລະ ປະກາດໃຊ້ ແຜນດຳເນີນງານແຫ່ງຊາດ ເພື່ອແມ່ ແລະ ເດັກ 5 ປີ ຄັ້ງທີ III (2021-2025).

ມາດຕາ 2 ມອບໃຫ້ຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ເປັນເຈົ້າການປະສານສົມທົບກັບ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ອື່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ແຜນດຳເນີນງານດັ່ງກ່າວ ໃຫ້ປະກົດຜົນເປັນຈິງ.

ມາດຕາ 3 ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ເພື່ອຈັດຕັ້ງປະຕິບັດດຳລັດສະບັບນີ້ໃຫ້ໄດ້ຮັບຜົນດີ.

ມາດຕາ 4 ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ພັນຄຳ ວິພາວັນ

# ສາລະບານ

**ພາກທີ I: ສະຫຼຸບຕີລາຄາ ຜົນການຈັດຕັ້ງປະຕິບັດແຜນດຳເນີນງານແຫ່ງຊາດວຽກງານແມ່ ແລະ ເດັກ 5 ປີ ຄັ້ງທີ II (2016-2020)......3**

1. ສະພາບແວດລ້ອມຂອງການຈັດຕັ້ງປະຕິບັດແຜນດຳເນີນງານແຫ່ງຊາດວຽກງານແມ່ ແລະ ເດັກ 2016-2020 ......3

1.1 ສະພາບແວດລ້ອມສາກົນ ແລະ ພາກພື້ນ ......3

1.2 ສະພາບແວດລ້ອມພາຍໃນປະເທດ ......4

2. ຜົນສຳເລັດຂອງການຈັດຕັ້ງປະຕິບັດແຜນດຳເນີນງານແຫ່ງຊາດວຽກງານແມ່ ແລະ ເດັກ 2016-2020 ......4

2.1 ສະພາບລວມ ......4

2.2 ຄວາມຄືບໜ້າ ແລະ ຜົນສຳເລັດຂອງແຜນງານ......5

1 ແຜນງານ ການທົບທວນບັນດານະໂຍບາຍ ແລະ ນິຕິກຳ......5

2 ແຜນງານ ການຈັດຕັ້ງປະຕິບັດພັນທະສາກົນ ແລະ ພາກພື້ນ......6

3 ແຜນງານ ກ່ຽວກັບການປົກປ້ອງສິດຂອງແມ່ຍິງ ແລະ ເດັກ......9

1) ການຈົດທະບຽນການເກີດ(ການແຈ້ງເກີດ)......9

2) ການຮັກສາສຸຂະພາບ ແລະ ໂພຊະນາການ ......9

3) ການສຶກສາ ແລະ ກິລາ......11

4) ການປົກປ້ອງເດັກ......13

5) ການມີສ່ວນຮ່ວມຂອງເດັກ......18

4 ແຜນງານໂຄສະນາ, ປຸກຈິດສຳນຶກ ແລະ ຂະບວນການ ......19

3. ສະຫຼຸບ: ສິ່ງທ້າທາຍ ແລະ ບົດຮຽນທີ່ຖອດຖອນໄດ້......22

3.1 ຂໍ້ຈຳກັດ ແລະ ສິ່ງທ້າທາຍ...... 22

3.2 ບົດຮຽນທີ່ຖອດຖອນໄດ້...... 24

**ພາກທີ II: ແຜນດຳເນີນງານແຫ່ງຊາດ ເພື່ອແມ່ແລະເດັກ ຄັ້ງທີ III (2021-2025) ......25**

1. ເງື່ອນໄຂສະພາບແວດລ້ອມໃນການຈັດຕັ້ງປະຕິບັດ: ໂອກາດ ແລະ ສິ່ງທ້າທາຍ ......25

1.1 ສະພາບແວດລ້ອມພາກພື້ນ ແລະ ສາກົນ...... 25

1.2 ສະພາບແວດລ້ອມພາຍໃນປະເທດ ...... 26

2. ແຜນດຳເນີນງານແຫ່ງຊາດ ເພື່ອແມ່ແລະເດັກ ຄັ້ງທີ່ III (2021-2025)......26

2.1 ຈຸດປະສົງລວມ ...... 26

2.2 ທິດທາງ ແລະ ໜ້າທີ່ລວມ ...... 26

2.3 ແຜນງານ ...... 27

2.4 ແຜນວຽກຈຸດສຸມຂອງແຜນດຳເນີນງານແຫ່ງຊາດ ເພື່ອແມ່ແລະເດັກ ຄັ້ງທີ (2021-2025) ...... 27

2.4.1 ແຜນງານທີ 1: ສົ່ງເສີມ, ປົກປ້ອງ ແລະ ສ້າງໂອກາດທີ່ເທົ່າທຽມກັນແກ່ເດັກ ແລະ ເສີມຂະຫຍາຍຄວາມເປັນຢູ່ທີ່ດີຂອງເດັກ .. 27

2.4.1.1 ແຜນວຽກຈຸດສຸມທີ 1.1: ການສົ່ງເສີມສິດໃນການຢູ່ລອດ ...... 27

2.4.1.2 ແຜນວຽກຈຸດສຸມທີ 1.2: ສົ່ງເສີມສິດໃນການໄດ້ຮັບການສຶກສາ ແລະ ການພັດທະນາ........ 30
2.4.1.3 ແຜນວຽກຈຸດສຸມທີ 1.3: ການປົກປ້ອງເດັກ........ 32
2.4.1.4 ແຜນວຽກຈຸດສຸມທີ 1.4: ການມີສ່ວນຮ່ວມຂອງເດັກ........ 35
2.4.1.5 ແຜນວຽກຈຸດສຸມທີ 1.5: ສ້າງສະພາບແວດລ້ອມທີ່ເປັນມິດກັບເດັກ........ 36
2.4.2 ແຜນງານທີ 2: ການໂຄສະນາເຜີຍແຜ່, ປູກຈິດສຳນຶກ, ສ້າງຖານຂໍ້ມູນ ແລະ ສຶກສາຄົ້ນຄວ້າ........ 37
2.4.2.1 ແຜນວຽກຈຸດສຸມທີ 2.1: ການການໂຄສະນາເຜີຍແຜ່ ແລະ ການປູກຈິດສຳນຶກ........ 37
2.4.2.2 ແຜນວຽກຈຸດສຸມທີ 2.2: ສ້າງຖານຂໍ້ມູນ ແລະ ການສຶກສາ/ຄົ້ນຄວ້າຕ່າງໆ........ 39
2.4.3 ແຜນງານທີ 3: ທົບທວນນະໂຍບາຍ - ນິຕິກຳ ແລະ ການຈັດຕັ້ງປະຕິບັດພັນທະຕໍ່ສາກົນ ແລະ ພາກພື້ນ........ 41
2.4.3.1 ແຜນວຽກຈຸດສຸມທີ 3.1: ທົບທວນນະໂຍບາຍ - ນິຕິກຳ ພາຍໃນ ເພື່ອໃຫ້ສອດຄ່ອງກັບນິຕິກຳສາກົນ ທີ່ ສປປ ລາວ ເປັນພາຄີ.41
2.4.3.2 ແຜນວຽກຈຸດສຸມທີ 3.2: ການຈັດຕັ້ງປະຕິບັດພັນທະສາກົນ........ 42
2.4.3.3 ແຜນວຽກຈຸດສຸມທີ 3.3: ການຈັດຕັ້ງປະຕິບັດພັນທະອາຊຽນ........ 43
2.4.3.4 ແຜນວຽກຈຸດສຸມທີ 3.4: ການຮ່ວມມືກັບບັນດາປະເທດໃນພາກພື້ນອາຊີ-ປາຊີຟິກ........ 44
2.4.4 ແຜນງານທີ 4: ສ້າງຄວາມເຂັ້ມແຂງໃຫ້ກົງຈັກການຈັດຕັ້ງ ແລະ ບຸກຄະລາກອນທີ່ເຮັດວຽກສິດທິເດັກ........ 45
2.4.4.1 ແຜນວຽກຈຸດສຸມທີ 4.1: ສ້າງຄວາມເຂັ້ມແຂງ ໃຫ້ກົງຈັກການຈັດຕັ້ງ ຂອງຄະນະກຳມະການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຢູ່ແຕ່ລະຂັ້ນ........ 45
2.4.4.2 ແຜນວຽກຈຸດສຸມທີ 4.2: ປັບປຸງກົນໄກການປະສານງານ ພາກສ່ວນຕ່າງໆທີ່ເຮັດວຽກສິດທິເດັກ........46
2.4.4.3 ແຜນວຽກຈຸດສຸມທີ 4.3: ບຸກຄະລາກອນທີ່ເຮັດວຽກສິດທິເດັກ........ 46
2.4.5 ແຜນງານທີ 5: ຫລຸດຜ່ອນຈຳນວນເດັກທີ່ທຸກຍາກ ແລະ ດ້ອຍໂອກາດໃນຫຼາຍໆດ້ານ ຫຼື ເດັກທີ່ຢູ່ໃນຄົວເຮືອນທຸກຍາກ ຢູ່ ສປປ ລາວ 47
2.4.5.1 ແຜນວຽກຈຸດສຸມທີ 5.1. ສ້າງຄວາມອາດສາມາດໃຫ້ແກ່ລັດຖະບານ ແລະ ອຳນາດການປົກຄອງທຸກຂັ້ນ ເພື່ອຫຼຸດຜ່ອນຄວາມທຸກຍາກຂອງເດັກໃນທຸກໆດ້ານ........ 47
2.4.5.2 ແຜນວຽກຈຸດສຸມທີ 5.2: ປັບປຸງກົນໄກການປະສານງານ ແລະ ລະບົບປົກປ້ອງສັງຄົມເພື່ອແມ່ ແລະ ເດັກ ຢູ່ ສປປ ລາວ........ 48
**ພາກທີ III: ກົນໄກການຈັດຕັ້ງປະຕິບັດ ແຜນດຳເນີນງານແຫ່ງຊາດ ເພື່ອແມ່ແລະເດັກ 5 ປີ ຄັ້ງທີ III (2021-2025)........ 49**
1. ແຫຼ່ງງົບປະມານ........ 49
2. ກົນໄກການຈັດຕັ້ງປະຕິບັດ........ 50
2.1 ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ........ 50
2.2 ຄະນະກຳມະການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຂັ້ນກະຊວງ/ຂະແໜງການ ແລະ ທ້ອງຖິ່ນ........ 50
2.3 ບັນດາຂະແໜງການ ແລະ ອົງການຂັ້ນສູນກາງ ແລະ ທ້ອງຖິ່ນ........ 50
3. ການຕິດຕາມ, ການຕີລາຄາ ແລະ ການລາຍງານ........ 52
ຂອບເຂດຜົນໄດ້ຮັບ........ 53

# ພາກທີ I

## ສະຫຼຸບຕີລາຄາ ຜົນການຈັດຕັ້ງປະຕິບັດແຜນດຳເນີນງານແຫ່ງຊາດວຽກງານແມ່ ແລະ ເດັກ 5 ປີ ຄັ້ງທີ II (2016-2020)

## 1. ສະພາບແວດລ້ອມຂອງການຈັດຕັ້ງປະຕິບັດແຜນດຳເນີນງານແຫ່ງຊາດວຽກງານແມ່ ແລະ ເດັກ 2016-2020.

### 1.1. ສະພາບແວດລ້ອມສາກົນ ແລະ ພາກພື້ນ

ບົດແນະນຳທົ່ວໄປຂອງອົງການສະຫະປະຊາຊາດ ສຳລັບການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍສິດທິເດັກ ໄດ້ໃຫ້ຄຳແນະນຳໃນລະດັບສາກົນ ກ່ຽວກັບການຈັດສັນງົບປະມານຂອງລັດຖະບານສຳລັບວຽກງານ ກ່ຽວກັບເດັກ, ການຈັດຕັ້ງປະຕິບັດວຽກງານສິດທິເດັກໃນໄລຍະຂ້າມຜ່ານກ້າວເຂົ້າສູ່ໄວໜຸ່ມ, ສະພາບເດັກຂ້າງຖະໜົນ, ການປົກປ້ອງສິດຂອງແຮງງານເຄື່ອນຍ້າຍ ແລະ ສະມາຊິກຄອບຄົວຂອງເຂົາເຈົ້າ, ແລະ ສິດທິຂອງເດັກໃນຂະບວນຍຸຕິທຳ. ລັດຖະບານ ສປປ ລາວ ໄດ້ວາງກົນໄກເພື່ອປັບປຸງສະພາບການ ແລະ ແກ້ໄຂບັນຫາກ່ຽວກັບເດັກ ເຊັ່ນ: ບັນຫາເດັກຂາດສິດເສລີພາບ, ການປົກປ້ອງສິດທິຂອງເດັກທີ່ເກີດຈາກການອຸ້ມບຸນ, ແລະ ຄວາມຜິດທາງອາຍາຂອງແມ່ຍິງ ທີ່ມີສາເຫດມາຈາກການຫູລູກທີ່ມີອາຍຸຄັນຕ່ຳກວ່າ 20 ອາທິດ ແລະ ການຫູລູກທີ່ມີອາຍຸຄັນຫຼາຍກວ່າ 20 ອາທິດ: ຊຶ່ງແຕ່ລະບັນຫານັ້ນ ລ້ວນແຕ່ເປັນບັນຫາສຳຄັນ.

ຢູ່ໃນພາກພື້ນອາຊີ-ປາຊີຟິກ, ວຽກງານສິດທິເດັກ ແມ່ນສຸມໃສ່ 3 ຂົງເຂດຕົ້ນຕໍ ຄື: (i) ການປົກປ້ອງທາງສັງຄົມ, (ii) ການຕ້ານການໃຊ້ຄວາມຮຸນແຮງຕໍ່ເດັກ ແລະ (iii) ການບໍລິການຮັກສາສຸຂະພາບແບບຄົບວົງຈອນ. ສະເພາະໃນຂົງເຂດ ອາຊຽນ (ASEAN), ບັນດາປະເທດສະມາຊິກ ແມ່ນໄດ້ເອົາໃຈໃສ່ໃນການສະໜັບສະໜູນວຽກງານສົ່ງເສີມ ແລະ ປົກປ້ອງສິດທິເດັກ, ການຈັດຕັ້ງປະຕິບັດສົນທິສັນຍາ, ຖະແຫຼງການ ແລະ ບັນດາກົດໝາຍທີ່ກ່ຽວຂ້ອງກັບສິດທິເດັກ ແລະ ການປະຕິບັດຫຼັກການຜົນປະໂຫຍດທີ່ດີທີ່ສຸດຂອງເດັກ. ຊຶ່ງການສະໜັບສະໜູນເຫຼົ່ານີ້ແມ່ນແນໃສ່ການລົບລ້າງການໃຊ້ຄວາມຮຸນແຮງຕໍ່ເດັກ, ການຕ້ານການຄ້າມະນຸດ, ໂດຍສະເພາະແມ່ນການຄ້າແມ່ຍິງ ແລະ ເດັກຍິງ, ການປົກປ້ອງສິດຂອງຜູ້ອົບພະຍົບທີ່ເປັນເດັກ, ເດັກທີ່ອອກແຮງງານ ແລະ ການປົກປ້ອງເດັກຈາກທຸກຮູບແບບການເອົາລັດເອົາປຽບ ຫຼື ຂູດຮີດ ແລະ ລ່ວງລະເມີດ, ລວມທັງການລ່ວງລະເມີດທາງອິນເຕີເນັດ.

## 1.2. ສະພາບແວດລ້ອມພາຍໃນປະເທດ

ສປປ ລາວ ເປັນປະເທດລາຍຮັບປານກາງຕໍ່າ, ດ້ານເສດຖະກິດ ແມ່ນອີງໃສ່ຂະແໜງຊັບພະຍາກອນທໍາມະຊາດເປັນຫຼັກ. ໃນປີ 2018, ລາຍຮັບແຫ່ງຊາດສະເລ່ຍຕໍ່ຫົວຄົນແມ່ນ 2,450 ໂດລາສະຫະລັດ, ຊຶ່ງເປັນຄັ້ງທໍາອິດທີ່ ສປປ ລາວ ສາມາດບັນລຸໄດ້ເງື່ອນໄຂຂອງການຫຼຸດພົ້ນອອກຈາກສະຖານະພາບການເປັນປະເທດດ້ອຍພັດທະນາ. ເພື່ອໃຫ້ປະເທດຫລຸດພົ້ນຈາກບັນຊີປະເທດດ້ອຍພັດທະນາໄດ້ຢ່າງເປັນທາງການໃນປີ 2024, ຈະຕ້ອງຮັກສາໃຫ້ໄດ້ຄວາມຄືບໜ້າຂອງດັດຊະນີຊັບພະຍາກອນມະນຸດ ແລະ ດັດຊະນະນີຄວາມບອບບາງດ້ານເສດຖະກິດ ຈະຕ້ອງໃຫ້ຫລຸດລົງຕໍ່າກວ່າມາດຖານທີ່ກໍານົດ. ສປປ ລາວ ໄດ້ເອົາໃຈໃສ່ສົ່ງເສີມ ແລະ ປົກປ້ອງສິດທິເດັກ ພ້ອມທັງໃຫ້ຄວາມສໍາຄັນໃນການເບິ່ງແຍງ ແລະ ພັດທະນາເດັກ, ດ້ວຍການສົ່ງເສີມສິດທິເດັກ ແລະ ສະໜັບສະໜູນທຸກການດໍາເນີນງານເພື່ອລຶບລ້າງທຸກຮູບການຈໍາແນກຕໍ່ເດັກ ຕະຫຼອດມາ. ຍິ່ງໄປກວ່ານັ້ນ, ລັດຖະບານຍັງໄດ້ດໍາເນີນມາດຕະການ ປ້ອງກັນ ແລະ ລົງໂທດການຄ້າຂາຍເດັກ ແລະ ການຄ້າປະເວນີເດັກ, ສິ່ງລາມົກອະນາຈານທີ່ກ່ຽວກັບເດັກ, ລວມທັງການໃຊ້ຄວາມຮຸນແຮງຕໍ່ເດັກ. ອີກດ້ານໜຶ່ງ, ສປປ ລາວ ຍັງປະເຊີນກັບຫຼາຍສິ່ງທ້າທາຍ ກ່ຽວກັບການຮັບຮູ້ ຫຼື ຄໍານຶງເຖິງສິດທິຂອງເດັກເຊັ່ນ: ບັນຫາການຈົດທະບຽນການເກີດ ໂດຍສະເພາະແມ່ນຢູ່ເຂດຫ່າງໄກສອກຫຼີກ, ເຂດທຸກຍາກ, ບັນຫາໃນທຸກໆດ້ານ, ບັນຫາເດັກຂາດສານອາຫານ, ອັດຕາການເຂົ້າຮຽນກ່ອນໄວຮຽນ ຕໍ່າ ແລະ ອັດຕາການຮຽນຈົບຊັ້ນ ກໍຕໍ່າ, ລວມທັງຄຸນນະພາບຂອງການສຶກສາກໍຕໍ່າ.

# 2. ຜົນສໍາເລັດຂອງການຈັດຕັ້ງປະຕິບັດ ແຜນດໍາເນີນງານແຫ່ງຊາດ ວຽກງານແມ່ ແລະເດັກ 2016-2020

## 2.1. ສະພາບລວມ

ລັດຖະບານ ສປປ ລາວ ໄດ້ເອົາໃຈໃສ່ຕໍ່ການສົ່ງເສີມສິດທິຂອງເດັກ ແລະ ການປັບປຸງຄຸນນະພາບຊີວິດຂອງເຂົາເຈົ້າ, ໂດຍສະເພາະແມ່ນ ສົ່ງເສີມໃຫ້ແມ່ ແລະ ເດັກທຸກຄົນ ເຂົ້າເຖິງໂພຊະນາການ ແລະ ການບໍລິການສຸຂະພາບທີ່ດີ, ການປົກປ້ອງເດັກ, ນໍ້າສະອາດ, ສຸຂະອະນາໄມທີ່ປອດໄພ, ມີທີ່ພັກອາໄສທີ່ພຽງພໍ, ການພັດທະນາຂອງເດັກກ່ອນໄວຮຽນ, ລວມທັງການເຂົ້າເຖິງການສຶກສາ ແລະ ຂໍ້ມູນຂ່າວສານ.

ໂດຍລວມແລ້ວ, ລັດຖະບານ ມີຄວາມຄືບໜ້າໃນການຫລຸດຜ່ອນອັດຕາການຕາຍຂອງແມ່, ເດັກອ່ອນ ແລະ ເດັກລຸ່ມ 5 ປີ. ການເຂົ້າເຖິງການສຶກສາກ່ອນໄວຮຽນ (ECE) ກໍເພີ່ມຂຶ້ນຢ່າງເຫັນໄດ້ຈະແຈ້ງຕະຫຼອດໄລຍະ 5 ປີທີ່ຜ່ານມາ. ສປປ ລາວ ສາມາດບັນລຸໄດ້ອັດຕາເຂົ້າຮຽນຊັ້ນປະຖົມຢ່າງທົ່ວເຖິງ ແລະ ອັດຕາເຂົ້າຮຽນຊັ້ນມັດທະຍົມ ກໍມີທ່າອ່ຽງເພີ່ມຂຶ້ນ. ພ້ອມດຽວກັນນັ້ນ, ກໍຍັງມີຄວາມຄືບໜ້າໃນວຽກງານການຕ້ານການຂາດສານອາຫານຂອງແມ່ ແລະ ເດັກ. ສປປ ລາວ ໄດ້ປັບປຸງການເຂົ້າເຖິງແຫຼ່ງນໍ້າສະອາດ ແລະ ສິ່ງອໍານວຍຄວາມສະດວກດ້ານສຸຂະອະນາໄມຂັ້ນພື້ນຖານ. ເຖິງວ່າຍັງມີຫຼາຍບັນຫາທີ່ຈະຕ້ອງໄດ້ຮັບການປັບປຸງໃຫ້ດີຂຶ້ນ ເພື່ອປັບປຸງຄຸນນະພາບ ແລະ ຜົນໄດ້ຮັບຂອງການສຶກສາ, ແຕ່ສິ່ງທີ່ພົ້ນເດັ່ນກໍຄື ບັນຫາອັດຕາເຂົ້າຮຽນຊັ້ນມັດທະຍົມສຶກສາທີ່ຍັງຕໍ່າ ແລະ ການປະລະການຮຽນຊັ້ນມັດທະຍົມສຶກສາຍັງສູງ ຈຶ່ງເປັນສິ່ງທ້າທາຍຕໍ່ການບັນລຸຄາດໝາຍດ້ານອັດຕາການຮຽນຈົບຊັ້ນທີ່ສູງ ທີ່ໄດ້ກໍານົດໄວ້ໃນເປົ້າໝາຍການພັດທະນາແບບຍືນຍົງເປົ້າໝາຍທີ 4. ຫຼາຍອົງປະກອບຂອງລະບົບການປົກປ້ອງທາງສັງຄົມແມ່ນໄດ້ຖືກວາງອອກ, ແຕ່ ສປປ ລາວ ຍັງມີຄວາມຮຽກຮ້ອງຕ້ອງການອັນຈໍາເປັນທີ່ຈະຕ້ອງມີລະບົບປົກປ້ອງເດັກທີ່ເຂັ້ມແຂງຢ່າງເປັນລະບົບຄົບຊຸດເພື່ອປົກປ້ອງເດັກທີ່ມີຄວາມສ່ຽງ. ເດັກອາຍຸຕໍ່າກວ່າ 18 ປີ ສ່ວນໃຫຍ່ແມ່ນຖືກກີດກັ້ນ ຫຼື ຖືກຈໍາກັດໃນຫຼາຍໆດ້ານ ແລະ ຖືກກີດກັ້ນໃນລະດັບສູງ. ຈາກການຄາດຄະເນເຫັນວ່າ ມີປະມານ 70% ຂອງເດັກທັງໝົດ ແມ່ນມີຄວາມທຸກຍາກກຂາດເຂີນຢ່າງໜ້ອຍສອງດ້ານ ແລະ ປະມານ 50% ແມ່ນທຸກຍາກຂາດເຂີນ ຢ່າງໜ້ອຍສາມດ້ານໃນເວລາດຽວກັນ ບໍ່ວ່າຈະເປັນດ້ານໂພຊະນາການ, ດ້ານສຸຂະພາບ, ດ້ານການສຶກສາ, ການພັດທະນາເດັກກ່ອນໄວຮຽນ (ECD), ການປົກປ້ອງເດັກ, ນໍ້າສະອາດ, ສຸຂະອະນາໄມ, ທີ່ພັກອາໄສ ແລະ ຂໍ້ມູນຂ່າວສານ. ອັດຕາການເກີດລູກໃນໄວໜຸ່ມ ຫຼື ເຍົາວະຊົນຍັງຢູ່ໃນລະດັບສູງ ທຽບກັບບັນດາປະເທດໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ (ASEAN).

ສປປ ລາວ ໄດ້ໃຫ້ສັດຕະຍາບັນໃນການສົ່ງເສີມການມີສ່ວນຮ່ວມຂອງເດັກ ແລະ ຊາວໜຸ່ມ ຊຶ່ງໄດ້ຖືກນໍາໄປຈັດຕັ້ງປະຕິບັດຜ່ານຫຼັກການສິດທິເດັກ ໂດຍການຄໍານຶງເຖິງເດັກ ພ້ອມທັງພິຈາລະນາ ໃນທຸກໆດ້ານທີ່ມີຜົນຕໍ່ຄວາມກິນດີຢູ່ດີຂອງເຂົາເຈົ້າ. ເດັກໄດ້ເຂົ້າຮ່ວມຂະບວນການສ້າງບົດລາຍງານຂອງລັດພາຄີ ກ່ຽວກັບການຈັດຕັ້ງປະຕິບັດສອງອານຸສັນຍາເພີ່ມເຕີມຂອງສົນທິສັນຍາ ວ່າດ້ວຍສິດທິເດັກ ກ່ຽວກັບການເຂົ້າຮ່ວມຂອງເດັກໃນການປະທະກັນດ້ວຍກໍາລັງປະກອບອາວຸດ ແລະ ອານຸສັນຍາກ່ຽວກັບການຄ້າຂາຍເດັກ, ການຄ້າປະເວນີເດັກ ແລະ ສິ່ງລາມົກອະນາຈານ ກ່ຽວກັບເດັກ. ເດັກຈາກທຸກແຂວງໃນຂອບເຂດທົ່ວປະເທດ ໄດ້ມີສ່ວນຮ່ວມໃນຂະບວນການປຶກສາຫາລືບັນຫາຕ່າງໆເຫຼົ່ານີ້.

ບັນດາກິດຈະກໍາໃນການປົກປ້ອງເດັກ ລວມມີການສ້າງບົດແນະນໍາ ແລະ ຄູ່ມືການຈັດຕັ້ງປະຕິບັດ ດັ່ງຕໍ່ໄປນີ້: ການຮ່ວມມືຂອງຫຼາຍຂະແໜງການ ໃນຂົງເຂດວຽກງານບູລິມະສິດ ເພື່ອຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ເດັກ; ເຊື່ອມສານ ຄູ່ມືກ່ຽວກັບຂະບວນການຍຸຕິທໍາຂອງເດັກ ແລະ ເຍົາວະຊົນ ເຂົ້າໃນຫຼັກສູດຂອງໂຮງຮຽນຕໍາຫຼວດ ແລະ ໂຮງຮຽນຕ່າງໆ;

ຄູ່ມືການຕິດຕາມການດຳເນີນຄະດີ ແລະ ຄູ່ມືການດຳເນີນຄະດີ/ຂະບວນການຍຸຕິທຳເດັກ ແລະ ເຍົາວະຊົນ ທີ່ໄດ້ເຊື່ອມສານເຂົ້າໃນຫຼັກສູດຂອງສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມສຳລັບພະນັກງານໄອຍະການ.

## 2.2. ຄວາມຄືບໜ້າ ແລະ ຜົນສຳເລັດຂອງແຜນງານ

### 1. ແຜນງານການທົບທວນບັນດານະໂຍບາຍ ແລະ ນິຕິກຳ

ລັດຖະບານ ສປປ ລາວ ຍາມໃດກໍ່ໃຫ້ຄວາມສຳຄັນຕໍ່ແມ່ຍິງ ແລະ ເດັກ ຊຶ່ງສະແດງອອກຜ່ານການຈັດຕັ້ງປະຕິບັດສົນທິສັນຍາ ວ່າດ້ວຍສິດທິເດັກ ແລະ ບັນດາອານຸສັນຍາເພີ່ມເຕີມ ຢ່າງຕັ້ງໜ້າ. ປະເທດເຮົາໄດ້ຮັບຮອງ ແລະ ປະກາດໃຊ້ຫຼາຍເຄື່ອງມືດ້ານນິຕິກຳ ຫຼື ກົດໝາຍທີ່ພົວພັນເຖິງເດັກ ເພື່ອປົກປ້ອງ ແລະ ຍົກລະດັບຄວາມເປັນຢູ່ຂອງແມ່ຍິງ ແລະ ເດັກໃຫ້ດີຂຶ້ນ. ຊຶ່ງບັນດານິຕິກຳທີ່ພົ້ນເດັ່ນມີຄືດັ່ງລຸ່ມນີ້:

| **ບັນດາກົດໝາຍ ແລະ ນິຕິກຳ** | **ດຳລັດ** |
| --- | --- |
| • ກົດໝາຍ ວ່າດ້ວຍສື່ມວນຊົນ (ສະບັບປັບປຸງ) ປີ 2016<br>• ກົດໝາຍ ວ່າດ້ວຍທະບຽນຄອບຄົວ (ສະບັບປັບປຸງ) ປີ 2018<br>• ປະມວນກົດໝາຍອາຍາ ປີ 2017<br>• ກົດໝາຍ ວ່າດ້ວຍການໃຫ້ວັກຊີນກັນພະຍາດ ປີ 2018<br>• ກົດໝາຍ ວ່າດ້ວຍຄົນພິການ ປີ 2019<br>• ກົດໝາຍ ວ່າດ້ວຍການປະກັນສຸຂະພາບ ປີ 2019<br>• ກົດໝາຍ ວ່າດ້ວຍອາຊີວະສຶກສາ (ສະບັບປັບປຸງ) ປີ 2019<br>• ກົດໝາຍ ວ່າດ້ວຍການປະກັນສັງຄົມ (ສະບັບປັບປຸງ) ປີ 2018<br>• ກົດໝາຍ ວ່າດ້ວຍການດຳເນີນຄະດີອາຍາ (ສະບັບປັບປຸງ) ປີ 2017<br>• ກົດໝາຍ ວ່າດ້ວຍສັນຊາດລາວ (ສະບັບປັບປຸງ) 2017<br>• ກົດໝາຍ ວ່າດ້ວຍຄະນະຊາວໜຸ່ມປະຊາຊົນປະຕິວັດລາວ (ສະບັບປັບປຸງ) ປີ 2017 | • ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງບ້ານຊ່ວຍເຫຼືອເດັກນ້ອຍເອັສໂອເອັສ ລາວ, ສະບັບເລກທີ 205/ນຍ, ລົງວັນທີ 4 ກໍລະກົດ 2017<br>• ດຳລັດ ວ່າດ້ວຍເບ້ຍລ້ຽງນັກຮຽນຜູ້ທຸກຍາກ ແລະ ດ້ອຍໂອກາດ ໃນສາຍສາມັນສຶກສາ, ສະບັບເລກທີ 385/ລບ, ລົງວັນທີ 15 ທັນວາ 2017<br>• ດຳລັດ ວ່າດ້ວຍການບັນເທີງ, ສະບັບເລກທີ 315/ລບ, ລົງວັນທີ 2 ຕຸລາ 2017<br>• ດຳລັດວ່າດ້ວຍກອງທຶນການທ່ອງທ່ຽວ, ສະບັບເລກທີ 119/ລບ, ລົງວັນທີ 10 ເມສາ 2017<br>• ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ, ສະບັບເລກທີ, 110/ນຍ, ລົງວັນທີ 29 ມີນາ 2017 |

ນອກຈາກນີ້, ຍັງໄດ້ອອກຂໍ້ຕົກລົງ ວ່າດ້ວຍວ່າດ້ວຍການກຳນົດວຽກທີ່ເປັນອັນຕະລາຍ (ຊຶ່ງໄດ້ກຳນົດ ແລະ ມີຜົນບັງຄັບໃຊ້ນັບແຕ່ປີ 2016 ເປັນຕົ້ນມາ) ທີ່ຫ້າມນຳໃຊ້ແຮງງານໄວໜຸ່ມ (ທີ່ມີອາຍຸລະຫວ່າງ 12-14 ປີ), ບົດບັນຍັດວ່າດ້ວຍການກຳນົດວຽກເບົາ/ການຈ້າງງານສຳລັບແຮງງານທີ່ເປັນໄວໜຸ່ມ (ອາຍຸ 12-14 ປີ); ປີ 2017 ກໍໄດ້ອອກຂໍ້ຕົກລົງວ່າດ້ວຍການສ້າງຕັ້ງເຄືອຂ່າຍປົກປ້ອງເດັກ, ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວກຸ່ມໂຮງຮຽນປະຖົມ ຊຶ່ງໄດ້ກຳນົດອອກໃນປີ 2016, ແລະຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຄຸ້ມຄອງຫໍພັກໂຮງຮຽນມັດທະຍົມ ທີ່ໄດ້ກຳນົດໄວ້ໃນປີ 2016. ພ້ອມດຽວກັນນັ້ນ, ໂດຍຜ່ານການສະໜັບສະໜູນດ້ານຍຸດທະສາດ, ໃນປີ 2019 ກໍໄດ້ມີດຳລັດ (ສະບັບເລກທີ 475/ນຍ, ລົງວັນທີ 18 ມີນາ 2019) ວ່າດ້ວຍການຈັດຕັ້ງປະຕິບັດບົດແນະນຳກ່ຽວກັບສົນທິສັນຍາ ວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (CEDAW) ແລະສົນທິສັນຍາ ວ່າດ້ວຍສິດທິເດັກ.

## 2. ແຜນງານການຈັດຕັ້ງປະຕິບັດພັນທະສາກົນ ແລະ ພາກພື້ນ

ສປປ ລາວ ໄດ້ເອົາໃຈໃສ່ຕໍ່ການປະຕິບັດພັນທະສາກົນໃນວຽກສິດທິເດັກ, ໂດຍສະເພາະແມ່ນການສົ່ງບົດລາຍງານແຫ່ງຊາດ ປະຈຳໄລຍະທີ 3-6 ກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາ ວ່າດ້ວຍສິດທິເດັກໃນປີ 2017 ແລະ ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດອານຸສັນຍາເພີ່ມເຕີມ ກ່ຽວກັບການເຂົ້າຮ່ວມຂອງເດັກໃນການປະທະກັນດ້ວຍກຳລັງປະກອບອາວຸດ ແລະ ອານຸສັນຍາເພີ່ມເຕີມ ກ່ຽວກັບການຄ້າຂາຍເດັກ, ການຄ້າປະເວນີເດັກ ແລະ ສິ່ງລາມົກອະນາຈານກ່ຽວກັບເດັກ. ນອກຈາກນັ້ນ, ຄະນະຜູ້ແທນຂັ້ນສູງ ກໍ່ໄດ້ສຳເລັດການເຂົ້າຮ່ວມພິຈາລະນາບົດລາຍງານ ຮ່ວມກັບຄະນະກຳມາ ການສິດທິເດັກ ຂອງສະຫະປະຊາຊາດ ຄັ້ງທີ 79, ທີ່ເຈນີວາ, ປະເທດສະວິດເຊີແລນ ໃນເດືອນພະຈິກ ປີ 2018, ພາຍຫຼັງທີ່ຄະນະກຳມະການ ສິດທິເດັກ ຂອງສະຫະປະຊາຊາດ ໄດ້ທົບທວນບົດລາຍງານແຫ່ງຊາດ ຂອງ ສປປ ລາວ ກໍໄດ້ມີຂໍ້ສະເໜີແນະ 44 ຂໍ້ ສຳລັບ ສປປ ລາວ ເພື່ອນຳໄປພິຈາລະນາຈັດຕັ້ງປະຕິບັດ ແລະ ສົ່ງບົດລາຍງານດັ່ງກ່າວໃຫ້ ຄະນະກຳມະການ ສິດທິເດັກ ຂອງສະຫະປະຊາຊາດ ໃນປີ 2023.

ສປປ ລາວ ໄດ້ສືບຕໍ່ເຊື່ອມສານບັນດາກົດໝາຍ, ນະໂຍບາຍ ແລະ ແຜນງານລະດັບຊາດ ໃຫ້ສອດຄ່ອງກັບພັນທະ ຫຼື ຂໍ້ຜູກພັນດ້ານສິດທິມະນຸດທີ່ໃຫ້ໄວ້ກັບສາກົນ, ແຕ່ໃນພາກປະຕິບັດຕົວຈິງເຫັນວ່າ ບາງພັນທະ ຫຼື ຄຳ ໝັ້ນສັນຍາ ຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ. ຊຶ່ງ ສປປ ລາວ ໄດ້ເຂົ້າຮ່ວມເປັນພາຄີ ໃນ 7 ສົນທິສັນຍາດ້ານສິດທິມະນຸດ ຈາກທັງໝົດ 9 ສົນທິສັນຍາ, 2 ອານຸສັນຍາເພີ່ມເຕີມ ຈາກທັງໝົດ 4 ອານຸສັນຍາ ແລະ ໃນ 9 ສົນທິສັນຍານັ້ນແມ່ນບໍ່ມີ ສົນທິສັນຍາ ກ່ຽວກັບການຮ້ອງທຸກ ຫຼື ຮ້ອງຟ້ອງ.

ນອກຈາກລະບົບທີ່ອີງໃສ່ສົນທິສັນຍາດ້ານສິດທິມະນຸດແລ້ວ, ສປປ ລາວ ຍັງຮັບຮອງເອົາລະບອບການທົບທວນຄືນໃນລະດັບສາກົນເປັນແຕ່ລະໄລຍະ (UPR), ຊຶ່ງເປັນການທົບທວນຄືນທຸກໆ 5 ປີ ກ່ຽວກັບສະພາບການຈັດຕັ້ງປະຕິບັດດ້ານສິດທິມະນຸດ ຢູ່ແຕ່ລະປະເທດ ຫຼື ລັດທີ່ເປັນສະມາຊິກຂອງອົງການສະຫະປະຊາຊາດ. ຊຶ່ງການທົບທວນຄືນຄັ້ງຫຼ້າສຸດຂອງ ສປປ ລາວ ແມ່ນມີຂຶ້ນ



ໃນປີ 2020. ໂດຍການປະສານສົມທົບກັບບັນດາກະຊວງ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ, ໃນປີ 2017 ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ໄດ້ເຮັດວຽກຮ່ວມກັບຜູ້ລາຍງານພິເສດດ້ານສິດທິມະນຸດ ຂອງອົງການສະຫະປະຊາຊາດ ຮັບຜິດຊອບດ້ານ ການຄ້າຂາຍເດັກ, ຄ້າປະເວນີເດັກ ແລະ ສິ່ງລາມົກອານາຈານ ກ່ຽວກັບເດັກ.

ໃນລະດັບພາກພື້ນ, ສປປ ລາວ ແມ່ນໄດ້ເຄື່ອນໄຫວວຽກງານສິດທິເດັກໃນກອບຂອງ ຄະນະກຳມາທິການອາຊຽນ ເພື່ອສົ່ງເສີມ ແລະ ປົກປ້ອງ ສິດທິຂອງແມ່ຍິງ ແລະ ເດັກ (ASEAN Commission on the Promotion and Protection of the Right of Women and Children) ເຊິ່ງໄດ້ສ້າງບັນດານິຕິກຳ ແລະ ກົນໄກເພື່ອຮັບປະກັນວ່າເດັກ ໃນພາກພື້ນອາຊຽນຈະໄດ້ຮັບສິດ ແລະ ຜົນປະໂຫຍດອັນສູງສຸດຂອງພວກເຂົາເດັກເດັກ ເຊັ່ນ:

- ສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ນ ແມ່ຍິງ ແລະ ເດັກ;
- ຖະແຫຼງການອາຊຽນ ວ່າດ້ວຍການປົກປ້ອງເດັກຈາກທຸກຮູບການໃນການສະແຫວງຫາຜົນປະໂຫຍດ ແລະ ການຂູດຮີດທາງເພດເດັກຜ່ານສື່ອອນລາຍ;
- ຖະແຫຼງການອາຊຽນ ກ່ຽວກັບສິດທິຂອງເດັກ ໃນການເຄື່ອນຍ້າຍ;
- ຖະແຫຼງການອາຊຽນ ກ່ຽວກັບການປ້ອງກັນ ແລະ ລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ;
- ຖະແຫຼງການນິວເດນລີ ວ່າດ້ວຍການພັດທະນາເດັກ, ການພັດທະນາໄວໜຸ່ມ ແລະ ການພັດທະນາຕົວເມືອງທີ່ເປັນມິດຕໍ່ເດັກ.

ເນື່ອງໃນໂອກາດສະເຫຼີມສະຫຼອງສົນທິສັນຍາ ວ່າດ້ວຍສິດທິເດັກ ຄົບຮອບ 30 ປີ (CRC @ 30), ສປປ ລາວ ກໍໄດ້ຮ່ວມສະເຫຼີມສະຫຼອງວັນສາກົນດັ່ງກ່າວ ຊຶ່ງໄດ້ຈັດກອງປະຊຸມປຶກສາຫາລືກັບບັນດາຜູ້ຕາງໜ້າເດັກ, ຜູ້ຕາງໜ້າຈາກບັນດາແຂວງ, ຜູ້ຕາງໜ້າຈາກພາກເອກະຊົນ, ບັນດາອົງການຈັດຕັ້ງທາງສັງຄົມ, ບັນດາຄູ່ຮ່ວມພັດທະນາ ແລະ ຜູ້ຕາງໜ້າຈາກຂະແໜງການຕ່າງໆທີ່ກ່ຽວຂ້ອງ ເພື່ອຍົກສູງສະຕິ ແລະ ຄວາມຮັບຮູ້ຕໍ່ກັບບັນຫາຕ່າງໆ ທີ່ເດັກໃນ ສປປ ລາວ ພວມປະເຊີນ, ຊຶ່ງລັດຖະບານ ໄດ້ໃຫ້ຄວາມໝາຍໝັ້ນວ່າ ຈະແກ້ໄຂບັນຫາຄວາມທຸກຍາກຂາດເຂີນດ້ານຕ່າງໆຂອງເດັກ ແລະ ສິ່ງທ້າທາຍຕ່າງໆທີ່ເດັກພວມປະເຊີນຢູ່ນັ້ນ, ດຳເນີນການປັບປຸງດ້ານຊັບສົມທົບມະນຸດ ແລະ ສ້າງຄວາມເຂັ້ມແຂງໃຫ້ລະບົບສັງຄົມ ລວມທັງການປົກປ້ອງເດັກ. ຊຶ່ງໄດ້ລະບຸໄວ້ຢູ່ໃນເອກະສານກອງປະຊຸມຄົບລາວລຸ້ນປີ 2030, ທີ່ເຊັນຮັບຮອງໂດຍ ພະນະທ່ານ ທອງລຸນ ສີສຸລິດ, ນາຍົກລັດຖະມົນຕີແຫ່ງ ສປປ ລາວ. ທ່ານໄດ້ເນັ້ນໜັກວ່າ ເດັກມື້ນີ້ແມ່ນຜູ້ນຳໃນມື້ອື່ນ ແລະ ຈະເປັນຜູ້ຕັດສິນຊາຕາກຳຂອງປະເທດຊາດໃນອະນາຄົດ. ນອກຈາກນີ້, ທ່ານອາລຸນແກ້ວ ກິດຕິຄູນ, ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ ທັງເປັນຮອງປະທານຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ, ຍັງໄດ້ເນັ້ນໜັກຕໍ່ຜູ້ເຂົ້າຮ່ວມກອງປະຊຸມລະດັບສູງໃນຄັ້ງນີ້ວ່າ:

> *“ການໃຊ້ຈ່າຍເພື່ອສຸຂະພາບ, ໂພຊະນາການ, ການສຶກສາ, ການປົກປ້ອງ ແລະ ການພັດທະນາທາງດ້ານສັງຄົມ, ທາງດ້ານຈິດໃຈ ແລະ ການພັດທະນາດ້ານສະຕິປັນຍາຂອງເດັກ ບໍ່ພຽງແຕ່ເປັນການລົງທຶນທາງດ້ານເສດຖະກິດທີ່ມີປະສິດທິພາບເທົ່ານັ້ນ ແຕ່ທາງສິນທຳ ກໍ່ແມ່ນສິ່ງທີ່ຄວນເຮັດ. ການມີຊີວິດຢູ່ລອດ ແລະ ພັດທະນາຈົນສຸດຄວາມສາມາດຂອງເຂົາເຈົ້າ ແມ່ນສິດທິພື້ນຖານຂອງເດັກທຸກຄົນ,”*

ເຫດການດັ່ງກ່າວ ຍັງສົ່ງຜົນໃຫ້ເກີດຄວາມໝັ້ນໝາຍ ຫຼື ຄຳໝັ້ນສັນຍາອັນໃໝ່ຂອງບັນດາຄູ່ຮ່ວມພັດທະນາ ແລະ ບັນດາອົງການຈັດຕັ້ງທາງສັງຄົມ ເພື່ອສົ່ງເສີມ ແລະ ປົກປ້ອງສິດທິຂອງເດັກຢູ່ ສປປ ລາວ, ລວມທັງຄວາມໝາຍໝັ້ນຂອງພາກທຸລະກິດເອກະຊົນ.

ສປປ ລາວ ໄດ້ເຂົ້າຮ່ວມຫຼາຍກອງປະຊຸມ ວ່າດ້ວຍການຮ່ວມມືໃຕ້-ໃຕ້ ເພື່ອແລກປ່ຽນບົດຮຽນກ່ຽວກັບການຈັດຕັ້ງປະຕິບັດສິດທິເດັກ, ໂດຍສະເພາະແມ່ນການປົກປ້ອງທາງສັງຄົມ, ການໃຊ້ຄວາມຮຸນແຮງຕໍ່ເດັກ ແລະ ການບໍລິການສຸຂະພາບແບບຄົບວົງຈອນ.

## ຄູ່ຮ່ວມງານເພື່ອການປົກປ້ອງສິດຂອງແມ່ຍິງ ແລະ ເດັກ

ພາຍໃຕ້ແຜນດຳເນີນງານລະດັບຊາດ (2016-2020), ໂດຍໄດ້ຮັບການສະໜັບສະໜູນທາງດ້ານການເງິນ ແລະ ວິຊາການ ຈາກຜູ້ໃຫ້ທຶນ ແລະ ບັນດາອົງການຈັດຕັ້ງສາກົນ, ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າ ຂອງແມ່ຍິງ ແລະ ແມ່-ເດັກ (NCAWMC) ໄດ້ຈັດຕັ້ງປະຕິບັດບັນດາພັນທະ ຫຼື ສັດຕະຍາບັນທີ່ໃຫ້ໄວ້ກັບສາກົນ ແລະ ພາກພື້ນ ເພື່ອຄວາມເປັນຢູ່ທີ່ດີຂອງແມ່ ແລະ ເດັກ. ຊຶ່ງການສະໜັບທີ່ພົ້ນເດັ່ນແມ່ນມີຄືດັ່ງລຸ່ມນີ້:

- ອົງການ UNICEF ໃຫ້ການສະໜັບສະໜູນ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ (NCAWMC) ເພື່ອຊ່ວຍເຫຼືອເດັກ ຢູ່ ສປປ ລາວ ໃຫ້ໄດ້ຮັບການປົກປ້ອງທີ່ດີຂຶ້ນຈາກການໃຊ້ຄວາມຮຸນແຮງ, ການຂົ່ມຂືນ, ການຖືກປ່ອຍປະລະເລີຍ ແລະ ການຄ້າປະເວນີ; ສະໜັບສະໜູນກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນການຈັດຕັ້ງປະຕິບັດການພັດທະນາລະບົບ ສະຫວັດດີການຂອງເດັກ ແລະ ຄອບຄົວ; ແລະ ສະໜັບສະໜູນອົງການໄອຍະການປະຊາຊົນສູງສຸດ ເພື່ອຈັດຕັ້ງປະຕິບັດແຜນງານຄວາມຍຸຕິທຳຂອງເດັກ ແລະ ໄວໜຸ່ມ.
- ທະນາຄານພັດທະນາອາຊີ, ທະນາຄານໂລກ, ກອງທຶນການສຶກສາໂລກ, ອົງການຊ່ວຍເຫຼືອລ້າຂອງອົດສຕຣາລີ (Australian Aid), ເຂື່ອນໄຟຟ້ານ້ຳເທີນ 2, ສະຫະພາບເອີຣົບ, ອົງການ UNESCO, ອົງການອາຫານໂລກ (World Food Program), ອົງການສຸພະນິມິດ (World Vision), ອົງການແພລນສາກົນ (Plan International), Room to Read ໄດ້ໃຫ້ການສະໜັບສະໜູນແກ່ກະຊວງສຶກສາທິການ ແລະ ກິລາ.
- ອົງການຊາຍຟັນລາວ (Childfund Lao) ສະໜັບສະໜູນຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ (NCAWMC) ເພື່ອສົ່ງເສີມການມີສ່ວນຮ່ວມ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ເດັກ ແລະ ໄວໜຸ່ມ ຢູ່ ສປປ ລາວ ພາຍໃຕ້ໂຄງການສົ່ງເສີມການມີສ່ວນຮ່ວມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ ເດັກ ແລະ ໄວໜຸ່ມ ຢູ່ ສປປ ລາວ ໄລຍະ I ແລະ ໄລຍະ II (ເພື່ອສ້າງຄວາມພ້ອມໃນການດຳລົງຊີວິດ) ລະຫວ່າງປີ 2017 ຫາ 2021. ກິດຈະກຳຕ່າງໆຂອງໂຄງການແມ່ນໄດ້ຈັດຕັ້ງປະຕິບັດຢູ່ແຂວງຊຽງຂວາງ, ຫົວພັນ ແລະ ນະຄອນຫຼວງວຽງຈັນ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ເດັກ ແລະ ໄວໜຸ່ມ ຢູ່ຊຸມຊົນໃນເຂດຕົວເມືອງ ແລະ ຊົນນະບົດ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ເຂົາເຈົ້າ ໂດຍການສ້າງໃຫ້ເຂົາເຈົ້າມີຄວາມສາມາດໃນການວາງແຜນ, ກ້າສະແດງແນວຄວາມຄິດ, ກ້າຕັດສິນໃຈ, ແລະ ກ້າລົງມືປະຕິບັດ ທີ່ສົ່ງຜົນຕໍ່ຄວາມເປັນຢູ່ທີ່ດີໃນດ້ານເສດຖະກິດ-ສັງຄົມຂອງເຂົາເຈົ້າ, ການມີສ່ວນຮ່ວມໃນກິດຈະກຳຕ່າງໆ ກ່ຽວກັບການພັດທະນາເດັກ, ແລະ ການສ້າງຄວາມພ້ອມສຳລັບການເປັນຜູ້ນຳໃນອະນາຄົດ.
- ອົງການ KOICA ຍັງໄດ້ໃຫ້ການຊ່ວຍເຫຼືອແກ່ລັດຖະບານ ໂດຍຜ່ານໂຄງການປັບປຸງຊີວິດການເປັນຢູ່ຂອງເດັກທີ່ໄດ້ຮັບຜົນກະທົບຈາກໄພພິບັດຢູ່ເມືອງສະໜາມໄຊ, ແຂວງອັດຕະປື.
- ອົງການເພື່ອນມິດສາກົນ ແລະ ອົງການແຜນການສາກົນ (Friends-International and Plan International) ໄດ້ໃຫ້ການສະໜັບສະໜູນໂຄງການຊ່ວຍເຫຼືອເດັກຂ້າງຖະໜົນ ແລະ ສ້າງຄວາມອາດສາມາດໃນການຄຸ້ມຄອງໂຄງການແບບຍືນຍົງ ສຳລັບໄລຍະປີ 2017– 2019.
- ອົງການສຸພະນິມິດ (World Vision) ໄດ້ໃຫ້ການສະໜັບສະໜູນການມີສ່ວນຮ່ວມຂອງຊຸມຊົນໃນການປົກປ້ອງເດັກ ແລະ ການປ້ອງກັນການຄ້າມະນຸດຢູ່ເມືອງອາດສະພອນ, ແຂວງ ສະຫວັນນະເຂດ.
- ອົງການຊ່ວຍເຫຼືອເດັກສາກົນ (Save the Children) ໄດ້ສະໜັບສະໜູນການສ້າງຄວາມເຂັ້ມແຂງໃຫ້ແກ່ເຄືອຂ່າຍປົກປ້ອງເດັກຂັ້ນບ້ານ ຢູ່ເມືອງໄຊສະຖານ, ເມືອງຫົງສາ ແລະ ເມືອງຊຽງຮ່ອນ, ແຂວງໄຊຍະບູລີ; ແລະ ເມືອງ ວຽງທອງ, ເມືອງໂພນໄຊ, ເມືອງປາກແຊງ, ແຂວງຫຼວງພະບາງ. ອົງການດັ່ງກ່າວຍັງໄດ້ຈັດຕັ້ງປະຕິບັດໂຄງການທົດລອງກ່ຽວກັບເດັກພິການ ຢູ່ 13 ບ້ານ ຂອງເມືອງຄູນ, ແຂວງຊຽງຂວາງ.

ການມີສ່ວນຮ່ວມຂອງບັນດາອົງການເຫຼົ່ານີ້ ເປັນການຊ່ວຍເຫຼືອການຈັດຕັ້ງປະຕິບັນບັນດາແຜນງານ ແລະ ໂຄງການທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອສົ່ງເສີມ, ປົກປ້ອງ ແລະ ການຍົກສູງສິດຂອງແມ່ຍິງ ແລະ ເດັກ ຢູ່ ສປປ ລາວ. ຊຶ່ງການມີສ່ວນຮ່ວມເຫຼົ່ານີ້ແມ່ນລວມມີ ການປົກປ້ອງຈາກການໃຊ້ຄວາມຮຸນແຮງ, ການຂົ່ມຂືນ, ການປ່ອຍປະລະເລີຍ ແລະ ການຄ້າປະເວນີ; ການຈັດຕັ້ງປະຕິບັດລະບົບສະຫວັດດີການຂອງເດັກ ແລະ ຄອບຄົວ; ການຈັດຕັ້ງປະຕິບັດແຜນງານ/ໂຄງການຄວາມຍຸຕິທຳຂອງເດັກ ແລະ ໄວໜຸ່ມ; ການສົ່ງເສີມການມີສ່ວນຮ່ວມ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ເດັກ ແລະ ໄວໜຸ່ມຢູ່ ສປປ ລາວ; ໂຄງການຊ່ວຍເຫຼືອເດັກຂ້າງຖະໜົນ ແລະ ອື່ນໆ ເຫຼົ່ານີ້ເປັນຕົ້ນ.

## 3. ແຜນງານ ກ່ຽວກັບການປົກປ້ອງສິດຂອງແມ່ຍິງ ແລະ ເດັກ

### 1) ການຈົດທະບຽນການເກີດ (ການແຈ້ງເກີດ)

ລັດຖະບານ ສປປ ລາວ ໄດ້ມີການຈັດລະບົບການຈົດທະບຽນການເກີດຄືນໃໝ່ ຊຶ່ງເປັນພື້ນຖານໃນການສ້າງສິດໃນການມີຕົວຕົນຂອງເດັກ ທັງເປັນການຊ່ວຍອຳນາດການປົກຄອງໃນການຕິດຕາມ ແລະ ຊ່ວຍເຫຼືອເດັກໃນກໍລະນີທີ່ຫາຍສາບສູນ, ການຕົກເປັນເຫຍື່ອຂອງການຄ້າມະນຸດ ແລະ ການຖືກກົດຂີ່ຂູດຮີດ ຫຼື ເອົາລັດເອົາປຽບ. ນອກຈາກນີ້ ລັດຖະບານຍັງຮັບຮູ້ ແລະ ເຫັນໄດ້ເຖິງການຫລຸດລົງຂອງອັດຕາການຈົດທະບຽນການເກີດຂອງເດັກຍິງ ແລະ ເດັກຊາຍ ອາຍຸລຸ່ມ 5 ປີ ຈາກ 75% ໃນປີ 2011/2012 ມາເປັນ 73% ໃນປີ 2017, ລວມທັງຄວາມແຕກໂຕນກັນລະຫວ່າງກຸ່ມແຍກຕາມຖານະດ້ານເສດຖະກິດ ແລະ ສະຖານະພາບດ້ານການສຶກສາຂອງແມ່. ກຸ່ມເດັກທີ່ແມ່ມີລະດັບການສຶກສາສູງກວ່າ ແລະ ເດັກຈາກຄອບຄົວທີ່ຮັ່ງມີກວ່າ ແມ່ນມີອັດຕາການຈົດທະບຽນການເກີດສູງກວ່າ. ໂດຍລວມແລ້ວ, ມີພຽງ 60% ຂອງເດັກເກີດໃໝ່ທີ່ຖືກຈົດທະບຽນການເກີດໃນປີທຳອິດຂອງການມີຊີວິດ, ໃນຂະນະທີ່ຍັງມີເດັກຈຳນວນໜຶ່ງທີ່ອາດຍັງບໍ່ເຄີຍໄດ້ຖືກຈົດທະບຽນການເກີດ. ຢູ່ ສປປ ລາວ "ການຈົດທະບຽນ ປົກກະຕິແລ້ວມັກຈະເຂົ້າໃຈວ່າແມ່ນການຈົດທະບຽນຢູ່ໃນ ປຶ້ມສຳມະໂນຄົວ" ແລະ ບໍ່ຈຳເປັນຕ້ອງເຮັດໃບຢັ້ງຢືນການເກີດ.

ເພື່ອເປັນການປັບປຸງສະພາບການຈົດທະບຽນການເກີດຢູ່ພາຍໃນປະເທດ, ລັດຖະບານໄດ້ຮັບຮອງເອົາຍຸດທະສາດແຫ່ງຊາດກ່ຽວກັບວຽກງານຄຸ້ມຄອງພົນລະເມືອງ ແລະ ສະຖິຕິພົນລະເມືອງ ສຳລັບໄລຍະ 2016-2025 ແລະ ໄດ້ປັບປຸງກົດໝາຍວ່າດ້ວຍທະບຽນຄອບຄົວ ສະບັບເລກທີ 44/ສພຊ, ລົງວັນທີ 14 ມິຖຸນາ 2018. ພ້ອມດຽວກັນນີ້ ກະຊວງພາຍໃນ ກໍໄດ້ອອກຄຳແນະນຳການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍທະບຽນຄອບຄົວ ເລກທີ 02/ນຍ, ລົງວັນທີ 28 ມັງກອນ 2019. ຊຶ່ງລວມມີການຈົດທະບຽນເຄື່ອນທີ່ ໂດຍແນໃສ່ໃຫ້ເຂົ້າເຖິງຄອບຄົວທີ່ຢູ່ເຂດຫ່າງໄກສອກຫຼີກ ແລະ ເຂດທີ່ເຂົ້າເຖິງໄດ້ຍາກ.

ໃນໄລຍະຜ່ານມາ, ເນື່ອງໃນໂອກາດສະເຫຼີມສະຫຼອງວັນເດັກສາກົນ ກະຊວງພາຍໃນ ກໍໄດ້ຈັດໃຫ້ມີກິດຈະກຳການຈົດທະບຽນການເກີດ ແລະ ອອກໃບຢັ້ງຢືນການເກີດ ໃຫ້ແກ່ເດັກໃນ 6 ຕົວເມືອງຂອງນະຄອນຫຼວງວຽງຈັນ. ນອກຈາກນີ້ ກະຊວງດັ່ງກ່າວ ກໍຍັງໄດ້ຈັດໃຫ້ມີການຈົດທະບຽນການເກີດເຄື່ອນທີ່ ສຳລັບເດັກຢູ່ເຂດທີ່ໄດ້ຮັບຜົນກະທົບຈາກໄພພິບັດ ຢູ່ເມືອງສະໜາມໄຊ, ແຂວງອັດຕະປື. ເພື່ອຮັບປະກັນໃຫ້ສະຖິຕິພົນລະເມືອງມີຄວາມຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ, ລັດຖະບານໄດ້ນຳເອົາລະບົບເອເລັກໂຕຣນິກທີ່ທັນສະໄໝ ເຂົ້າມາໃຊ້ໃນວຽກງານການຈົດທະບຽນ ແລະ ສະຖິຕິພົນລະເມືອງ. ລັດຖະບານໄດ້ສ້າງລະບົບຖານຂໍ້ມູນສຳລັບການຄຸ້ມຄອງສະຖິຕິພົນລະເມືອງຢູ່ 3 ແຂວງ ຄື: ນະຄອນຫຼວງວຽງຈັນ, ຫຼວງພະບາງ ແລະ ຈຳປາສັກ. ການປູກຈິດສຳນຶກກ່ຽວກັບການຈົດທະບຽນ ແລະ ການຢັ້ງຢືນການເກີດ ໃຫ້ແກ່ເດັກ ແລະ ຄອບຄົວທີ່ໄດ້ຮັບຜົນກະທົບຈາກໄພພິບັດຢູ່ເມືອງສະ ໜາມໄຊ, ແຂວງອັດຕະປື.

### 2) ການຮັກສາສຸຂະພາບ ແລະ ໂພຊະນາການ

ຢູ່ໃນແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ ສຳລັບໄລຍະປະຈຸບັນ ລັດຖະບານ ໄດ້ໃຫ້ບຸລິມະສິດການລົງທຶນເຂົ້າໃນການບໍລິການດ້ານສຸຂະພາບ ແລະ ໂພຊະນາການ ເພື່ອແນໃສ່ບັນລຸເປົ້າໝາຍການເຂົ້າເຖິງການບໍລິການເບິ່ງແຍງສຸຂະພາບທີ່ມີຄຸນນະພາບທຸກຖ້ວນໜ້າສຳລັບຄົນລາວທຸກຄົນ. ໃນເບື້ອງຕົ້ນແມ່ນສຸມໃສ່ການພັດທະນາພື້ນຖານໂຄງລ່າງ, ຕໍ່ມາ ກໍຄ່ອຍໆມີການປັບປຸງບັນດາໂຮງໝໍຢູ່ຂັ້ນສູນກາງ, ແລະ ຕາໜ່າງການບໍລິການເບິ່ງແຍງສຸຂະພາບຢູ່ຂັ້ນແຂວງ, ຂັ້ນເມືອງ ແລະ ສຸກສາລາ ກໍໄດ້ຮັບການປັບປຸງໃຫ້ດີຂຶ້ນ. ນອກຈາກນັ້ນ, ກໍໄດ້ມີການຂະຫຍາຍການບໍລິການພິເສດຕ່າງໆ ລົງສູ່ຂັ້ນທ້ອງຖິ່ນ, ໄດ້ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານການຕິດຕາມ ແລະ ເຝົ້າລະວັງພະຍາດຕິດຕໍ່ຕ່າງໆ, ແລະ ແຜນງານການຄໍ້າປະກັນສະບຽງອາຫານ, ໂພຊະນາການ, ການຄຸມກຳເນີດ ແລະ ການປິ່ນປົວໂດຍບໍ່ເສຍຄ່າສຳລັບເດັກລຸ່ມ 5 ປີ ກໍໄດ້ຮັບການຈັດຕັ້ງປະຕິບັດ. ຄວາມຄືບໜ້າຂອງແຜນດຳເນີນງານງານລະດັບຊາດ ລວມມີ:

- ການສຳຫຼວດລ້າສຸດທຽບໃສ່ ການສຳຫຼວດຄັ້ງຜ່ານມາ ອັດຕາການຕາຍຂອງແມ່ ແມ່ນ 405/100,000 ຄົນ ໃນການສຳຫຼວດພົນລະເມືອງ ປີ 2005 ແລະ ການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ ປີ 2011-2012 ແມ່ນ 357/100,000 ຄົນ ແລະ ຈາກການສຳຫຼວດພົນລະເມືອງ ປີ 2015 ແມ່ນ 206/100,000 ຄົນ.
- ອັດຕາການປົກຄຸມຂອງການດູແລກ່ອນເກີດ ເພີ່ມຂຶ້ນຈາກ 54% ໃນປີ 2011/12 ມາເປັນ 78% ໃນປີ 2017.
- ອັດຕາການສັກຢາກັນພະຍາດສຳລັບເດັກລຸ່ມ 1 ປີ ກໍເພີ່ມຂຶ້ນ. ອັດຕາສ່ວນເດັກທີ່ໄດ້ຮັບການສັກຢາປ້ອງກັນພະຍາດລອມ(ອັກແຊງລອມ)ເຂັມທີ 3 ເພີ່ມຂຶ້ນຈາກ 55% ໃນປີ 2011/12 ມາເປັນ 61% ໃນປີ 2017. ການສັກຢາປ້ອງກັນວັນນະໂລກ (BCG) ກໍຄ່ອຍໆເພີ່ມຂຶ້ນຈາກ 78% ໃນປີ 2011/12 ມາເປັນ 82% ໃນປີ 2017.
- ຕາໜ່າງການປະກັນສຸຂະພາບ ກໍເພີ່ມຂຶ້ນຈາກ 71% ໃນປີ 2017 (ກະຊວງສາທາລະນະສຸກ, 2017) ມາເປັນ 80% ໃນປີ 2019; ຕາມແຜນຄາດວ່າຈະບັນລຸ 94% ໃນປີ 2020 (ຕົວເລກດັດແກ້ທີ່ສະພາຮັບຮອງ: 94% ຂອງປະຊາກອນ).
- ອັດຕາຂອງເດັກລຸ່ມ 5 ປີ ທີ່ເຕີບໂຕຊ້າ ຫລຸດລົງຈາກ 44% ໃນປີ 2011/12 ມາເປັນ 33% ໃນປີ 2017.
- ອັດຕາຂອງເດັກລຸ່ມ 5 ປີ ທີ່ມີນ້ຳໜັກຮ່າງກາຍຕ່ຳກວ່າມາດຕະຖານ ຫຼຸດລົງຈາກ 27% ໃນປີ 2011/2012 ມາເປັນ 21.1% ໃນປີ 2017.

ນອກຈາກນີ້, ໂດຍໄດ້ຮັບການສະໜັບສະໜູນຈາກບັນດາຄູ່ຮ່ວມພັດທະນາ ລັດຖະບານ ກໍໄດ້ດຳເນີນແຜນງານຕ່າງໆດ້ານໂພຊະນາການ ເຊັ່ນ:

- ໄດ້ປັບປຸງ ແລະ ພັດທະນາປຶ້ມແນະນຳການພັດທະນາເດັກໃນດ້ານໂພຊະນາການ: ຄູ່ມືການພັດທະນາເດັກທີ່ປົກກະຕິ; ການພັດທະນາເດັກທີ່ເຈັບປ່ວຍ; ການດູແລເດັກເກີດໃໝ່ ແລະ ເດັກທີ່ເຈັບປ່ວຍ ຢູ່ໃນຂັ້ນຊຸມຊົນ (ຄູ່ມືການຝຶກອົບຮົມແພດອາສາສະໝັກປະຈຳບ້ານ ແລະ ຜູ້ດູແລເບິ່ງແຍງ) ຢູ່ 5 ໂຮງໝໍແຂວງ ແລະ ການຮຽນຮູ້ການເປັນພໍ່ແມ່ ຫຼື ການລ້ຽງດູ (ເປັນໂຄງການທົດລອງຢູ່ໂຮງໝໍແມ່ ແລະ ເດັກ, ຈັດອາທິດລະຄັ້ງ).
- ປູກຈິດສຳນຶກໃຫ້ແມ່ຍິງທີ່ຖືພາ ແລະ ແມ່ທີ່ລ້ຽງລູກດ້ວຍນົມແມ່ ກ່ຽວກັບການບຳລຸງລູກນັບຕັ້ງແຕ່ໄລຍະຖືພາ ຈົນເຖິງ 1.000 ມື້ທຳອິດຫຼັງເດັກເກີດ.

ເຖິງວ່າ ສປປ ລາວ ມີຄວາມຄືບໜ້າຫຼາຍໃນການຫລຸດຜ່ອນອັດຕາການຕາຍຂອງເດັກເກີດໃໝ່ ແລະ ເດັກລຸ່ມ 5 ປີ, ແຕ່ອັດຕາການຕາຍຂອງແມ່ເຫັນວ່າຍັງສູງ ແລະ ຍັງມີຄວາມແຕກໂຕນກັນລະຫວ່າງກຸ່ມສະຖານະພາບດ້ານເສດຖະກິດຂອງຄົວເຮືອນ. ອັດຕາການຕາຍຂອງເດັກລຸ່ມ 5 ປີ ໃນໄລຍະ 5 ປີກ່ອນໜ້າການສຳຫຼວດດັດສະນີໝາຍສັງຄົມລາວ (LSIS) ແມ່ນ 46 ຕໍ່ເດັກເກີດມີຊີວິດ 1.000 ຄົນ, ສ່ວນອັດຕາການຕາຍຂອງເດັກເກີດໃໝ່ແມ່ນປະມານ 40 ຕໍ່ເດັກເກີດມີຊີວິດ 1.000 ຄົນ. ຄວາມແຕກໂຕນກັນຍັງສືບຕໍ່ມີໃຫ້ເຫັນ. ເດັກໃນກຸ່ມຄົວເຮືອນທີ່ທຸກທີ່ສຸດ ມີໂອກາດທີ່ຈະເສຍຊີວິດ ສູງກວ່າເດັກທີ່ຢູ່ໃນກຸ່ມຄົວເຮືອນທີ່ຮັ່ງມີທີ່ສຸດ ເຖິງ 2,8 ເທົ່າ.

ວຽກງານການຕ້ານການຂາດສານອາຫານໃນເດັກ ກໍເຫັນວ່າຍັງມີຄວາມຄືບໜ້າຊ້າ. ອັດຕາການຂາດສານອາຫານຂັ້ນຮ້າຍແຮງ(ເດັກເຕ້ຍ)ໃນກຸ່ມບອບບາງ ຍັງສູງຫຼາຍກວ່າ 40%[1] . ການຂາດສານອາຫານຂັ້ນຮ້າຍແຮງ(ເດັກເຕ້ຍ), ເຖິງວ່າສະເລ່ຍທົ່ວປະເທດ ຫລຸດລົງຈາກ 18.8% ໃນປີ 2011/12 ມາເປັນ 12.7% ໃນປີ 2017 (13.5% ສຳລັບເພດຍິງ, 11.8% ສຳລັບເພດຊາຍ), ແຕ່ຍັງກວມອັດຕາສ່ວນສູງເຖິງ 1/5 ຂອງເດັກລຸ່ມ 5 ປີ ທີ່ຢູ່ໃນກຸ່ມສ່ຽງ. ອັດຕາສ່ວນຂອງເດັກທີ່ມີນ້ຳໜັກຕ່ຳກວ່າມາດຕະຖານ ເພີ່ມຂຶ້ນເຖິງ 9% (8.6% ສຳລັບເພດຍິງ, 9.4% ເພດຊາຍ) ຕະຫຼອດໄລຍະ 5 ປີ ທີ່ຜ່ານມາ. ໃນຂະນະທີ່ການສັກຢາປ້ອງກັນວັນນະໂລກ (BCG) ກວມເຖິງ 82% ຂອງເດັກເກີດໃໝ່, ແຕ່ການສັກຢາກັນພະຍາດຄົບ ສະເລ່ຍທົ່ວປະເທດແມ່ນກວມພຽງແຕ່ 48%, ແລະ 32% ສຳລັບເດັກໃນກຸ່ມຄົວເຮືອນທີ່ທຸກທີ່ສຸດ. ອັດຕາການໄດ້ຮັບດູແລກ່ອນເກີດ ສະເລ່ຍທົ່ວປະເທດແມ່ນ 78% ສ່ວນແມ່ຍິງທີ່ຢູ່ໃນກຸ່ມຄົວເຮືອນທີ່ທຸກທີ່ສຸດ ແມ່ນມີພຽງແຕ່ 52%. ຄວາມຕ້ອງການຄຸມກຳເນີດທີ່ຍັງບໍ່ທັນໄດ້ຮັບການຕອບສະໜອງ ຍັງກວມອັດຕາສ່ວນສູງໃນທຸກກຸ່ມຄົວເຮືອນ ຊຶ່ງກວມ 14% ສຳລັບແມ່ຍິງທີ່ແຕ່ງງານແລ້ວ ແລະ 75% ສຳລັບແມ່ຍິງທີ່ຍັງບໍ່ທັນໄດ້ແຕ່ງງານ.

[1] LSIS 1, LSIS 2.



ຍິ່ງໄປກວ່ານັ້ນ, ຜົນໄດ້ຮັບຂອງຄາດໝາຍດ້ານສຸຂະພາບ ແລະ ໂພຊະນາການ ໂດຍສະເພາະແມ່ນນໍ້າທີ່ບໍ່ສະອາດປອດໄພ ແລະ ບໍ່ມີສຸຂະອະນາໄມ ເຫັນວ່າຍັງໜ້າເປັນຫ່ວງ, ຍັງມີປະມານ 1 ໃນທຸກໆ 4 ຄົວເຮືອນ ຍັງຖ່າຍຊະຊາຍ ຊຶ່ງຍັງມີຄວາມແຕກໂຕນກັນຫຼາຍລະຫວ່າງເຂດຕົວເມືອງ ແລະ ຊົນນະບົດ (4% ສໍາລັບເຂດຕົວເມືອງ ແລະ 33% ສໍາລັບເຂດຊົນນະບົດ). ນໍ້າຈາກຄົວເຮືອນ ແລະ ຈາກແຫຼ່ງນໍ້າທໍາມະຊາດ ພົບວ່າມີແບັກທີເຣຍ Escherichia coli ທີ່ພາໃຫ້ເກີດພະຍາດຖອກທ້ອງຮຸນແຮງປົນເປື້ອນຢູ່ໃນລະດັບສູງ (83% ສໍາລັບເຂດຕົວເມືອງ ແລະ 86% ສໍາລັບເຂດຊົນນະບົດ). ມີພຽງ 28% ຂອງເດັກທີ່ມີອາຍຸນັບແຕ່ເກີດໃໝ່ຈົນຮອດ 2 ປີ ທີ່ຢູ່ໃນຄົວເຮືອນທີ່ໃຫ້ເດັກມີສຸຂະອະນາໄມທີ່ດີ, ຊຶ່ງໝາຍຄວາມວ່າຄອບຄົວສ່ວນໃຫຍ່ ແມ່ນຂາດການປະຕິບັດຕາມຫຼັກສຸຂະອະນາໄມທີ່ດີ. ເດັກທີ່ຢູ່ໃນຄົວເຮືອນເຫຼົ່ານີ້ ຂ້ອນຂ້າງວ່າມີໂອກາດສູງກວ່າ ທີ່ຈະເປັນພະຍາດຖອກທ້ອງ, ຮ່າງກາຍເຕີບໂຕຊ້າ ແລະ ມີນໍ້າໜັກຕໍ່າກວ່າມາດຕະຖານ.

ຫຼາຍແຜນງານ ແລະ ໂຄງການຊ່ວຍເຫຼືອດ້ານສຸຂະພາບ ແລະ ໂພຊະນາການ ແມ່ນຖືກຈັດຕັ້ງປະຕິບັດຢູ່ 18 ແຂວງໃນຂອບເຂດທົ່ວປະເທດ ທັງວຽກງານການປິ່ນປົວສຸຂະພາບ ແລະ ປ້ອງກັນພະຍາດ ແມ່ນຈັດຕັ້ງປະຕິບັດຢູ່ໂຮງໝໍ ແລະ ສຸກສາລາ.

### 3) ການສຶກສາ ແລະ ກິລາ

ຕະຫຼອດໄລຍະ 5 ປີ ທີ່ຜ່ານມາ, ຂະແໜງສຶກສາທິການ ແລະ ກິລາ ໄດ້ສຸມໃສ່ຈັດຕັ້ງປະຕິບັດບັນດາວຽກງານບຸລິມະສິດຂອງຍຸດທະສາດການສຶກສາ ແລະ ຍຸດທະສາດການພັດທະນາຊັບພະຍາກອນມະນຸດ. ຊຶ່ງຍຸດທະສາດເຫຼົ່ານັ້ນລວມມີ (i) ການພັດທະນາຄວາມຮູ້ ແລະ ທັກສະຂອງເດັກ ແລະ ຊາວໜຸ່ມ, ໂດຍເລີ່ມຈາກລະດັບອະນຸບານ ຈົນເຖິງລະດັບວິຊາຊີບ ແລະ ມະຫາວິທະຍາໄລ, (ii) ການປັບປຸງຫຼັກສູດການຮຽນ-ການສອນ, (iii) ການຈັດຕັ້ງປະຕິບັດບັນດານະໂຍບາຍສົ່ງເສີມຄູ ແລະ ນັກຮຽນ, (iv) ກໍ່ສ້າງ ແລະ ສ້ອມແປງພື້ນຖານໂຄງລ່າງທີ່ຈໍາເປັນ ເພື່ອຂະຫຍາຍໂອກາດດ້ານການສຶກສາ.

ຕະຫຼອດໄລຍະ 5 ປີທີ່ຜ່ານມາເຫັນວ່າ ການເຂົ້າເຖິງການສຶກສາກ່ອນໄວຮຽນເພີ່ມຂຶ້ນຢ່າງຕໍ່ເນື່ອງ ແຕ່ວ່າສໍາລັບເດັກອາຍຸລະຫວ່າງ 36-39 ເດືອນ ພັດຍັງຈໍາກັດ ຊຶ່ງກວມອັດຕາສ່ວນພຽງແຕ່ 1/3 ແລະ ຍັງມີຄວາມແຕກໂຕນກັນຫຼາຍ ຕາມເຂດທີ່ຕັ້ງພູມສັນຖານ ແລະ ສະຖານະພາບທາງດ້ານເສດຖະກິດ-ສັງຄົມ ຂອງຄົວເຮືອນ. ເຖິງວ່າແຜນງານການສົ່ງເສີມການເຂົ້າເຖິງການສຶກສາກ່ອນ

ໄວຮຽນ ຫລຸດໜ້ອຍຖອຍລົງ ນັບແຕ່ປີ 2012 ເປັນຕົ້ນມາກໍ່ຕາມ ເດັກທີ່ຮຽນຈົບຊັ້ນມັດທະຍົມ ມີໂອກາດທີ່ຈະເຂົ້າຮຽນຂັ້ນການສຶກສາກ່ອນໄວຮຽນສູງກວ່າ 6 ເທົ່າ ທຽບກັບເດັກທີ່ແມ່ບໍ່ໄດ້ຮັບການສຶກສາ.

ເນື່ອງຈາກລັດຖະບານ ສປປ ລາວ ໄດ້ກໍ່ສ້າງ ແລະ ປັບປຸງອາຄານຮຽນ ແລະ ຫ້ອງຮຽນ ຈຶ່ງເຮັດໃຫ້ການເຂົ້າເຖິງການສຶກສາຢູ່ເຂດຊົນນະບົດ ຫ່າງໄກສອກຫຼີກ ເພີ່ມຂຶ້ນຢ່າງຕໍ່ເນື່ອງ ຈົນສາມາດບັນລຸໄດ້ເປົ້າໝາຍການເຂົ້າເຖິງການສຶກສາຊັ້ນປະຖົມທົ່ວທຸກເຂດ. ອັດຕາເຂົ້າຮຽນ ໄດ້ຮັບການປັບປຸງໃຫ້ດີຂຶ້ນ (89% ສໍາລັບເພດຍິງ ແລະ 90% ສໍາລັບເພດຊາຍ) ແຕ່ວ່າບັນຫາການປະລະການຮຽນຍັງເປັນສິ່ງທ້າທາຍຫຼາຍ ໂດຍສະເພາະແມ່ນຊັ້ນ ປໍ 1 ທີ່ອັດຕາການປະລະການຮຽນສູງເຖິງ 1/5.

ໃນຂະນະທີ່ອັດຕາການເຂົ້າຮຽນຊັ້ນມັດທະຍົມເພີ່ມຂຶ້ນ, ອັດຕາປະລະການຮຽນ ແລະ ການຫລຸດລົງຂອງການເຂົ້າຮຽນ ຍັງເປັນສິ່ງທ້າທາຍອັນໃຫຍ່ຫຼວງ. ເດັກໃນເກນອາຍຸມັດທະຍົມຕອນຕົ້ນທີ່ໄດ້ເຂົ້າໂຮງຮຽນ ແມ່ນມີບໍ່ເຖິງ 2/3 (62% ສໍາລັບເພດຊາຍ, 59% ສໍາລັບເພດຍິງ) ໃນນີ້ ມີ 1 ໃນ 6 ຄົນ (18% ສໍາລັບເພດຍິງ, 15% ສໍາລັບເພດຊາຍ) ຂອງເດັກໃນເກນອາຍຸນີ້ ແມ່ນປະລະການຮຽນ. ສໍາລັບຊັ້ນມັດທະຍົມຕອນປາຍ ອັດຕາເຂົ້າຮຽນຍິ່ງຫລຸດລົງຫຼາຍ (38% ຂອງທັງໝົດ) ແລະ ອັດຕາປະລະການຮຽນຂອງເດັກ ກໍ່ສູງກວ່າຊັ້ນມັດທະຍົມຕອນຕົ້ນ (38% ຂອງທັງໝົດ) ເຖິງ 2 ເທົ່າ. ສ່ວນອັດຕາປະລະການຮຽນຂອງເດັກມັດທະຍົມຕອນປາຍທີ່ຢູ່ໃນຄົວເຮືອນທຸກຍາກ ແມ່ນມີເຖິງ 68%.

ສປປ ລາວ ເກືອບຈະບັນລຸຄວາມເທົ່າທຽມກັນດ້ານເພດໃນການເຂົ້າຮຽນຊັ້ນປະຖົມ, ແຕ່ວ່າໃນຊັ້ນມັດທະຍົມ ທັງໃນດ້ານເຂົ້າຮຽນລວມ ແລະ ການຮຽນຈົບ ເຫັນວ່າຍັງບໍ່ທັນບັນລຸໄດ້ດ້ານຄວາມສະເໝີພາບ ຫຼື ຄວາມດຸນດ່ຽງລະຫວ່າງເພດຍິງ ແລະ ເພດຊາຍ. ສະພາບການປະລະການຮຽນ ເຫັນວ່າຍັງມີຫຼາຍໃນກຸ່ມເດັກຍິງ; 76% ຂອງເດັກຍິງໃນເກນອາຍຸນີ້ທີ່ຢູ່ໃນຄົວເຮືອນທຸກຍາກແມ່ນປະລະການຮຽນ ຫຼື ບໍ່ເຂົ້າໂຮງຮຽນ ທຽບກັບອັດຕາການປະລະການຮຽນຂອງເດັກຊາຍແມ່ນ 61%.

ອັດຕາການຮຽນຈົບຊັ້ນ (ຕົວຊີ້ວັດຂອງເປົ້າໝາຍການພັດທະນາແບບຍືນຍົງ ) ເຫັນວ່າຍັງຢູ່ໃນລະດັບຕໍ່າສໍາລັບທຸກຊັ້ນຮຽນ. ໃນຈໍານວນເດັກຊັ້ນປະຖົມທັງໝົດ ອັດຕາການຮຽນຈົບຊັ້ນແມ່ນມີພຽງແຕ່ 83% ສໍາລັບເດັກຍິງ ແລະ 84% ສໍາລັບເດັກຊາຍ. ສໍາລັບເດັກຊັ້ນມັດທະຍົມຕອນຕົ້ນ ອັດຕາການຮຽນຈົບຊັ້ນຫລຸດລົງມາເປັນ 53% ສໍາລັບເພດຍິງ ແລະ 54% ສໍາລັບເພດຊາຍ, ສ່ວນເດັກຊັ້ນມັດທະຍົມຕອນປາຍທີ່ຮຽນຈົບມັດທະຍົມຕອນປາຍ ຫຼື ຈົບ ມໍ 7 ແມ່ນມີພຽງແຕ່ 31% ສໍາລັບເພດຍິງ ແລະ 32% ສໍາລັບເພດຊາຍ. ເມື່ອເບິ່ງຕາມຖານະທາງດ້ານເສດຖະກິດຂອງຄົວເຮືອນແລ້ວ ອັດຕາການຮຽນຈົບຊັ້ນມັດທະຍົມຕອນປາຍ ຍິ່ງມີຄວາມແຕກໂຕນກັນຫຼາຍ ຊຶ່ງອັດຕາການຮຽນຈົບຊັ້ນມັດທະຍົມປາຍຂອງເດັກໃນກຸ່ມຄົວເຮືອນທີ່ທຸກຍາກທີ່ສຸດ ແມ່ນມີພຽງແຕ່ 4%, ສ່ວນອັດຕາການຮຽນຈົບຂອງເດັກໃນກຸ່ມຄົວເຮືອນຮັ່ງມີທີ່ສຸດແມ່ນ 69%, ສໍາລັບເດັກໃນກຸ່ມພາສາລາວ-ໄຕ ອັດຕາການຮຽນຈົບຊັ້ນມັດທະຍົມຕອນປາຍ ແມ່ນ 40% ແລະ ເດັກໃນກຸ່ມພາສາມອນ-ຂະແມ ທີ່ຮຽນຈົບແມ່ນມີພຽງແຕ່ 15% ເທົ່ານັ້ນ.

ຜົນການຈັດຕັ້ງປະຕິບັດບັນດານະໂຍບາຍ, ແຜນງານ ແລະ ໂຄງການດ້ານການສຶກສາ ແລະ ກິລາ ແມ່ນມີດັ່ງລຸ່ມນີ້:

- ອັດຕາເຂົ້າຮຽນຂັ້ນການສຶກສາກ່ອນໄວຮຽນຂອງເດັກອາຍຸ 5 ປີ ເພີ່ມຂຶ້ນຈາກ 66% ໃນປີ 2015 ມາເປັນ 82.7% (82.5% ສໍາລັບເພດຍິງ, 82.8% ສໍາລັບເພດຊາຍ) ໃນປີ 2020.
- ອັດຕາເຂົ້າຮຽນຊັ້ນປະຖົມສຸດທິ ເພີ່ມຂຶ້ນຈາກ 97.2% ໃນປີ 2015 ມາເປັນ 98.9% (98.7% ສໍາລັບເພດຍິງ ແລະ 99% ສໍາລັບເພດຊາຍ) ໃນປີ 2020, ຊຶ່ງລື່ນຄາດໝາຍທີ່ວາງໄວ້ໃນລະດັບ 91% (ຄາດໝາຍສໍາລັບປີ 2020 ແມ່ນໃຫ້ບັນລຸ 98%).
- ອັດຕາເຂົ້າຮຽນຊັ້ນມັດທະຍົມຕອນປາຍ ຫລຸດລົງຈາກ 93,3% (91,8% ສໍາລັບເພດຍິງ ແລະ 94,8% ສໍາລັບເພດຊາຍ) ໃນປີ 2015 ມາເປັນ 82,4% (79,6% ສໍາລັບເພດຍິງ, 84,9% ສໍາລັບເພດຊາຍ) ໃນປີ 2020 ຊຶ່ງຕໍ່າກວ່າລະດັບຄາດໝາຍທີ່ວາງໄວ້ 8,44% (ຄາດໝາຍທີ່ວາງໄວ້ໃນແຜນການປີ 2020 ແມ່ນ 90%); ຊຶ່ງສາເຫດແມ່ນຍ້ອນນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນ ແລ້ວສຶກສາຕໍ່ສາຍວິຊາຊີບ, ປະລິນຍາຕີສາຍວິຊາຄູ ແລະ ສາຍວິຊາສະເພາະອື່ນໆ.
- ດ້ວຍຄວາມພະຍາຍາມໃນການຊຸກຍູ້ສົ່ງເສີມໃຫ້ປະຊາຊົນທຸກຄົນໃນສັງຄົມ ອອກກໍາລັງກາຍ ແລະ ຫຼິ້ນກິລາ ຈຶ່ງເຮັດໃຫ້ອັດຕາສ່ວນຂອງປະຊາກອນທີ່ຫຼິ້ນກິລາ ເພີ່ມຂຶ້ນຈາກ 12% ຂອງປະຊາກອນທັງໝົດ ໃນປີ 2016-2017 ມາເປັນ 22% ໃນປີ 2017-2018, ແລະ 26% ໃນປີ 2018-2019. ຊຶ່ງເປົ້າໝາຍແມ່ນໃຫ້ໄດ້ 30% ຂອງປະຊາກອນທັງໝົດ.

ເຖິງວ່າສາມາດບັນລຸຜົນສຳເລັດໃນຫຼາຍດ້ານກໍ່ຕາມ, ທຸກຄາດໝາຍທີ່ວາງໄວ້ໃນແຜນປະດຳເນີນງານລະດັບຊາດສຳລັບໄລຍະປະຈຸບັນ ອາດຈະບໍ່ສາມາດບັນລຸໄດ້ພາຍໃນປີ 2020 ເຊັ່ນວ່າ:

- ອັດຕາການລອດເຫຼືອຂອງນັກຮຽນຊັ້ນປະຖົມ ເພີ່ມຂຶ້ນຈາກ 78,3% ໃນປີ 2015 ມາເປັນ 82,1%, (84,5% ສຳລັບເພດຍິງ ແລະ 79,8% ສຳລັບເພດຊາຍ) ໃນປີ 2020 (ເປົ້າໝາຍໃນແຜນດັດແກ້ທີ່ສະພາຮັບຮອງແມ່ນ 90%).
- ອັດຕາການປະລະການຮຽນຊັ້ນປະຖົມ ຫລຸດລົງຈາກ 5,8% ໃນປີ 2015 ມາເປັນ 4,3% (3,7% ສຳລັບເພດຍິງ ແລະ 4,9% ສຳລັບເພດຊາຍ) ໃນປີ 2020 (ເປົ້າໝາຍໃນແຜນດັດແກ້ທີ່ສະພາຮັບຮອງແມ່ນ 2%).
- ອັດຕາເຂົ້າຮຽນລວມຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ເພີ່ມຂຶ້ນຈາກ 78,1% ໃນປີ 2015 ມາເປັນ 83,3%, (81,9% ສຳລັບເພດຍິງ ແລະ 84,6% ສຳລັບເພດຊາຍ) ໃນປີ 2020 (ເປົ້າໝາຍໃນແຜນດັດແກ້ທີ່ສະພາຮັບຮອງແມ່ນ 85%).
- ອັດຕາການເຂົ້າຮຽນລວມຂອງນັກຮຽນຊັ້ນມັດທະຍົມຕອນປາຍ ເພີ່ມຂຶ້ນຈາກ 45,8% ໃນປີ 2015 ມາເປັນ 54,8% (52,0% ສຳລັບເພດຍິງ ແລະ 57,5% ສຳລັບເພດຊາຍ) ໃນປີ 2020 (ເປົ້າໝາຍໃນແຜນດັດແກ້ທີ່ສະພາຮັບຮອງແມ່ນ 60%).
- ອັດຕາການປະລະການຮຽນຊັ້ນມັດທະຍົມຕອນຕົ້ນ ແມ່ນມີທ່າອ່ຽງເພີ່ມຂຶ້ນຈາກ 7,7% ໃນປີ 2015 ມາເປັນ 8,3% ໃນປີ 2017, 9,2% ໃນປີ 2018, 9,5% ໃນປີ 2019 ແລະ 10,3% (9,7% ສຳລັບເພດຍິງ ແລະ 10,8% ສຳລັບເພດຊາຍ) ໃນປີ 2020 (ເປົ້າໝາຍໃນແຜນດັດແກ້ທີ່ສະພາຮັບຮອງແມ່ນ 2%). ອັດຕາການປະລະການຮຽນຊັ້ນມັດທະຍົມຕອນປາຍ ກໍ່ເຫັນວ່າບໍ່ມີຄວາມຄືບໜ້າຫຼາຍ: 4,9% ໃນປີ 2015, 5,8% ໃນປີ 2017, 7,1% ໃນປີ 2018, 8,1% ໃນປີ 2019 ແລະ 8,8% (8,7% ສຳລັບເພດຍິງ ແລະ 8.8% ສຳລັບເພດຊາຍ) ໃນປີ 2020 (ເປົ້າໝາຍໃນແຜນດັດແກ້ທີ່ສະພາຮັບຮອງແມ່ນ 2%).
- ອັດຕາການຮູ້ໜັງສືຂອງຊາວໜຸ່ມ ເຫັນວ່າໄດ້ຮັບການປັບປຸງດີຂຶ້ນ: ຈາກ 77% ສຳລັບເພດຊາຍ ແລະ 69% ສຳລັບເພດຍິງ ໃນປີ 2011/12 ມາເປັນ 85% ສຳລັບເພດຊາຍ ແລະ 77% ສຳລັບເພດຍິງ ໃນປີ 2017. ເຖິງຢ່າງໃດກໍ່ຕາມ ສຳລັບປະຊາກອນໂດຍລວມ ເຫັນວ່າອັດຕາດັ່ງກ່າວນີ້ຍັງຢູ່ໃນລະດັບຕ່ຳກວ່ານີ້ (78% ສຳລັບເພດຊາຍ ແລະ 63% ສຳລັບເພດຍິງ).

### 4) ການປົກປ້ອງເດັກ

ກົດໝາຍ ວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (ທີ່ປະກາດໃຊ້ໃນປີ 2007) ແມ່ນສອດຄ່ອງກັບສົນທິສັນຍາ ວ່າດ້ວຍສິດທິເດັກ. ຂອບນິຕິກຳຂອງ ສປປ ລາວ ໃນປະຈຸບັນ ແມ່ນອີງໃສ່ກົດໝາຍດັ່ງກ່າວ, ຊຶ່ງໄດ້ລະບຸ ສິດ ແລະ ໜ້າທີ່ຂອງບັນດາອົງການທີ່ນຳໜ້າ ແລະ ສະໜັບສະໜູນການປະຕິບັດພັນທະຕໍ່ສາກົນ. ກົດ ໝາຍດັ່ງກ່າວນີ້ ໄດ້ກຳນົດໃຫ້ມີການສ້າງຕາໜ່າງປົກປ້ອງເດັກຢ່າງກວ້າງຂວາງ ພາຍໃຕ້ການຊີ້ນຳຂອງຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ (CPAC) ເພື່ອຕິດຕາມ ແລະ ຊ່ວຍເຫຼືອເດັກ (ມາດຕາ 38). ໃນໄລຍະຕໍ່ມາ ຕາໜ່າງປົກປ້ອງເດັກ (CPNs) ກໍໄດ້ຖືກເຊື່ອມສານເຂົ້າໃນລະບົບປົກປ້ອງເດັກ ທີ່ຢູ່ພາຍໃຕ້ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການສ້າງຕັ້ງຕາໜ່າງປົກປ້ອງເດັກ ຊຶ່ງອອກໃນປີ 2017.

ລັດຖະບານ ຍາມໃດກໍ່ໃຫ້ຄວາມສຳຄັນຕໍ່ການປົກປ້ອງເດັກ ແລະ ສິດທິເດັກ, ຖືເອົາຜົນປະໂຫຍດສູງສຸດຂອງເດັກເປັນພື້ນຖານໃນການພິຈາລະນາທຸກງານການຕັດສິນໃຈກ່ຽວກັບເດັກ, ໂດຍສຸມໃສ່:

- ສ້າງຕັ້ງ ແລະ ສ້າງຄວາມເຂັ້ມແຂງໃຫ້ລະບົບປົກປ້ອງເດັກ ເພື່ອຊ່ວຍເຫຼືອເດັກທີ່ຕ້ອງການການປົກປ້ອງພິເສດ, ສ້າງກົນໄກການຈັດຕັ້ງປະຕິບັດ, ການປະສານສົມທົບ, ການຕິດຕາມ ແລະ ກວດກາ ເພື່ອຮັບປະກັນໃຫ້ເດັກໄດ້ຮັບການຊ່ວຍເຫຼືອຕາມຫຼັກການສິດ ແລະ ຜົນປະໂຫຍດສູງສຸດຂອງເຂົາເຈົ້າ.
- ປັບປຸງລະບົບຍຸຕິທຳສຳລັບເດັກ.
- ສ້າງດຳລັດ ແລະ ລະບຽບການ ວ່າດ້ວຍການເອົາເດັກໄປເປັນລູກລ້ຽງ.
- ຊ່ວຍເຫຼືອໃນການຟື້ນຟູເດັກທີ່ໄດ້ຮັບເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ ແລະ ການລ່ວງລະເມີດ ເພື່ອໃຫ້ເຂົາເຈົ້າສາມາດດຳລົງຊີວິດຢູ່ໄດ້ຢ່າງປົກກະຕິໃນສັງຄົມ.
- ປົກປ້ອງເດັກຈາກຄວາມສ່ຽງຂອງລະເບີດທີ່ບໍ່ທັນແຕກ (UXO), ຊຶ່ງຍັງເປັນບັນຫາທີ່ທ້າທາຍ, ແລະ ຊ່ວຍເຫຼືອເດັກທີ່ໄດ້ຮັບເຄາະຮ້າຍຈາກເຫດການລະເບີດທີ່ບໍ່ທັນແຕກ.

ພ້ອມດຽວກັນນັ້ນ, ໂດຍພາຍໃຕ້ແຜນດຳເນີນງານລະດັບຊາດ ສຳລັບໄລຍະ 2016-2020, ມີຫຼາຍວຽກງານກ່ຽວກັບການປົກປ້ອງເດັກໄດ້ຮັບການຈັດຕັ້ງປະຕິບັດ ຊຶ່ງປາກົດຜົນໃຫ້ເຫັນຄືດັ່ງລຸ່ມນີ້:

- ຈຳນວນນັກສັງຄົມສົງເຄາະລະດັບມືອາຊີບໄດ້ເພີ່ມຂຶ້ນ ແລະ ກອງທຶນສະຫວັດດີການສັງຄົມ ກໍໄດ້ຮັບການສ້າງຕັ້ງຂຶ້ນຢູ່ຂັ້ນສູນກາງ ແລະ ຢູ່ 17 ແຂວງທົ່ວປະເທດ.
- ມີ 886 ຕາໜ່າງປົກປ້ອງເດັກຂັ້ນບ້ານ ໄດ້ຮັບການສ້າງຕັ້ງຂຶ້ນໃນຂອບເຂດທົ່ວປະເທດ, ຊຶ່ງລື່ນຄາດໝາຍທີ່ວາງໄວ້ສຳລັບຕາໜ່າງປົກປ້ອງເດັກ (ຄາດໝາຍແມ່ນໃຫ້ໄດ້ 800 ຕາໜ່າງປົກປ້ອງເດັກພາຍໃນປີ 2020) ແລະ ການຝຶກອົບຮົມກ່ຽວກັບການປົກປ້ອງ ແລະ ຊ່ວຍເຫຼືອເດັກໃຫ້ແກ່ສະມາຊິກຂອງຕາໜ່າງປົກປ້ອງເດັກ ກໍໄດ້ຈັດຂຶ້ນຢູ່ 81 ບ້ານ 358 ຄົນ, ຍິງ 158 ຄົນ.
- ໄດ້ຈັດຝຶກອົບຮົມໃຫ້ພະນັກງານທີ່ຮັບຜິດຊອບໃນການໃຫ້ຄວາມຊ່ວຍເຫຼືອດ້ານກົດໝາຍ ຈາກພະແນກຍຸຕິທຳແຂວງ ແລະ ຫ້ອງການຍຸຕິທຳເມືອງ ຢູ່ 11 ແຂວງ, ພ້ອມທັງເປີດໃຫ້ບໍລິການຊ່ວຍເຫຼືອດ້ານກົດໝາຍຢູ່ 11 ພະແນກຍຸຕິທຳແຂວງ ແລະ 3 ຫ້ອງການຍຸຕິທຳເມືອງ.
- ສຳເລັດການຝຶກອົບຮົມ ກ່ຽວກັບການຮັບເອົາເດັກໄປເປັນລູກລ້ຽງ ໃຫ້ແກ່ສະມາຊິກຄະນະກຳມະການຮັບເອົາເດັກໄປເປັນລູກລ້ຽງ ຢູ່ 12 ແຂວງ ແລະ 54 ເມືອງ ແລະ ບັນດາໜ່ວຍງານທີ່ຮັບຜິດຊອບໂຄງການຊ່ວຍເຫຼືອຊຸມມຊົນ ຢູ່ ແຂວງສະຫວັນນະ



ເຂດ, ຊຽງຂວາງ ແລະ ນະຄອນຫຼວງວຽງຈັນ ແລະ ຈາກເມືອງໄຊພູທອງ, ເມືອງອາດສະພັງທອງ, ເມືອງໄກສອນພົມວິຫານ, ເມືອງໄຊເສດຖາ, ເມືອງໄຊທານີ, ເມືອງຄູນ ແລະ ເມືອງແປກ.

- ໄດ້ສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາອົງການຈັດຕັ້ງທີ່ເຮັດວຽກ ກ່ຽວກັບຄວາມຍຸຕິທຳເດັກ ແລະ ໄວໜຸ່ມ ໂດຍຜ່ານການຈັດຝຶກອົບຮົມ, ການປັບປຸງໂຄງຮ່າງການຈັດຕັ້ງຂອງບັນດາອົງການຈັດຕັ້ງເຫຼົ່ານັ້ນ, ພ້ອມທັງປັບປຸງບັນດາຄູ່ມື ແລະ ນິຕິກຳ ສຳລັບການດຳເນີນຄະດີ ແລະ ຂະບວນການທາງກົດໝາຍຕໍ່ເດັກ. ນັບແຕ່ປີ 2017 ເປັນຕົ້ນມາ, ມີ 47 ຫ້ອງການໃຫ້ຄຳແນະນຳ ແລະ ປຶກສາດ້ານກົດໝາຍ ໄດ້ຖືກສ້າງຕັ້ງຂຶ້ນ.
- ໄດ້ສ້າງຕັ້ງເຄືອຂ່າຍເພື່ອຄວາມປອດໄພຂອງເດັກ ເພື່ອຊ່ວຍເຫຼືອເດັກ 684 ຄົນ.
- ເດັກທີ່ຢູ່ບ້ານຊ່ວຍເຫຼືອເດັກ SOS ຈຳນວນ 6 ແຫ່ງ ຢູ່ 6 ແຂວງ (ນະຄອນຫຼວງວຽງຈັນ, ຈຳປາສັກ, ສະຫວັນນະເຂດ, ຊຽງຂວາງ, ຫຼວງພະບາງ ແລະ ຫົວພັນ) ກໍໄດ້ຮັບການຊ່ວຍເຫຼືອ, ລວມມີເດັກທັງໝົດ 1.302 ຄົນ, ຍິງ 614 ຄົນ ທີ່ໄດ້ຮັບການເບິ່ງແຍງ ແລະ ຊ່ວຍເຫຼືອຢ່າງເປັນປົກກະຕິ.
- ໄດ້ດຳເນີນການສຶກສາຄົ້ນຄວ້າເພື່ອສ້າງຄວາມເຂົ້າໃຈກ່ຽວກັບການປົກປ້ອງເດັກ ແລະ ສະຫວັດດີການເດັກ ຢູ່ ສປປ ລາວ, ເຊັ່ນ ລະບົບສະຫວັດດີການເດັກ ແລະ ຄອບຄົວ, ການເບິ່ງແຍງລ້ຽງດູເດັກທີ່ບໍ່ມີພໍ່ແມ່, ມາດຕະການຕ່າງໆເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບປົກປ້ອງເດັກ. ການສຶກສາ ແລະ ການຄົ້ນຄວ້າເຫຼົ່ານີ້ ເປັນບ່ອນອີງພື້ນຖານໃຫ້ແກ່ການວິເຄາະ-ວິໄຈ ສຳລັບການສ້າງແຜນງານ ແລະ ໂຄງການປົກປ້ອງ ແລະ ຊ່ວຍເຫຼືອເດັກໃນແຕ່ລະໄລຍະ.
- ໄດ້ສະໜອງການຝຶກດ້ານວິຊາຊີບ ແລະ ວັດຖຸອຸປະກອນ ສຳລັບການສ້າງຕັ້ງທຸລະກິດຂະໜາດນ້ອຍ ໃຫ້ແກ່ຜູ້ທີ່ໄດ້ຮັບເຄາະຮ້າຍຈາກໄພພິບັດ ຢູ່ເມືອງສະໜາມໄຊ, ແຂວງອັດຕະປື.
- ໄດ້ຈັດຝຶກອົບຮົມວິຊາຊີບໃຫ້ແກ່ໄວໜຸ່ມທີ່ເປັນກຸ່ມສ່ຽງ ແລະ ຜູ້ອື່ນໆໃຫ້ໄດ້ຮັບການເບິ່ງແຍງດູແລໄລຍະຍາວ.
- ລັດຖະບານ ໄດ້ອອກດຳລັດສະບັບເລກທີ 77/ລບ, ລົງວັນທີ 28 ກຸມພາ 2018 ວ່າດ້ວຍການຊ່ວຍເຫຼືອທາງດ້ານກົດໝາຍ ພ້ອມກັບຄຳແນະນຳຂອງລັດຖະມົນຕີກະຊວງຍຸຕິທຳ ກ່ຽວກັບການຈັດຕັ້ງປະຕິບັດ ດຳລັດດັ່ງກ່າວ.
- ກົດໝາຍ ວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໄດ້ຖືກຮັບຮອງໃນປີ 2015 ແລະ ແຜນດຳເນີນງານລະດັບຊາດ ກ່ຽວກັບການລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ກໍ່ໄດ້ຖືກຮັບຮອງເອົາໃນປີດຽວກັນ. ແຜນດຳເນີນງານແຫ່ງຊາດດັ່ງກ່າວ ໄດ້ເຊື່ອມສານເອົາການສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ເດັກ ເຂົ້າໃນຍຸດທະສາດ ແລະ ແຜນດຳເນີນງານຂອງຂະແໜງສຶກສາ, ແຮງງານ ແລະ ສະຫວັດດີການສັງຄົມ ແລະ ຂະແໜງຍຸຕິທຳ.

- A decree on legal aid was announced by the Government to strengthen the justice system along with the guidance of the Minister of Justice on the implementation of the decree;
- The National Law on Preventing and Combatting Violence against Women and Children was passed in 2015 and the NPA on Eliminating Violence against Women and Children was adopted the same year. The NPA integrates the prevention of violence against children into the strategy and action plans for the education, labour, social welfare, and justice sectors.

ຕາໜ່າງປົກປ້ອງເດັກ ໄດ້ຖືກກຳນົດໃຫ້ເປັນຕົວແທນຂອງລະບົບປົກປ້ອງເດັກຢູ່ຂັ້ນບ້ານ ແລະ ຮັບລາຍງານ ພ້ອມທັງເກັບກຳສະພາບ ແລ້ວສົ່ງຕໍ່ກໍລະນີໃຫ້ກັບໜ່ວຍງານ ຫຼື ການຈັດຕັ້ງຂັ້ນເທິງທີ່ໃຫ້ບໍລິການຊ່ວຍເຫຼືອ. ດັ່ງທີ່ໄດ້ລະບຸໄວ້ໃນມາດຕາ 36 ຂອງກົດໝາຍວ່າດ້ວຍສິດ ແລະ ຜົນປະໂຫຍດຂອງເດັກ (ສະບັບ ປີ 2007), ລາຍລະອຽດ ສິດ ແລະ ໜ້າທີ່ຂອງຕາໜ່າງປົກປ້ອງເດັກ ແມ່ນຈະໄດ້ລະບຸໄວ້ຢູ່ໃນ ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການສ້າງຕັ້ງຕາໜ່າງປົກປ້ອງເດັກ (ປີ 2017).

ປະຈຸບັນ, ຢູ່ ສປປ ລາວ ມີທີ່ພັກຊົ່ວຄາວ ຫຼື ສູນຮັບຕ້ອນ 2 ແຫ່ງ ທີ່ໄດ້ຮັບທຶນຈາກລັດຖະບານເພື່ອໃຫ້ການຊ່ວຍເຫຼືອແກ່ຜູ້ທີ່ໄດ້ຮັບເຄາະຮ້າຍ: ຊຶ່ງລວມມີ ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ ແລະ ເດັກນ້ອຍ ແລະ ສູນຮັບຕ້ອນ ຢູ່ແຂວງຫຼວງນ້ຳທາ. ນອກຈາກນີ້, ກໍຍັງມີ 3 ສູນ ທີ່ດຳເນີນງານໂດຍອົງການຈັດຕັ້ງສາກົນ: ສູນຈຸດສຸມບ້ານສາກົນ (VFI) ຢູ່ແຂວງຈຳປາສັກ ແລະ ນະຄອນຫຼວງວຽງຈັນ; ແລະ ສູນແສງສະຫວ່າງ ຢູ່ແຂວງສະຫວັນນະເຂດ. ມີການຊ່ວຍເຫຼືອທີ່ຈຳເປັນ 5 ດ້ານ ແກ່ຜູ້ທີ່ໄດ້ຮັບເຄາະຮ້າຍ ເຊັ່ນ: ໃຫ້ທີ່ພັກທີ່ປອດໄພຊົ່ວຄາວ (ລວມທັງອາຫານ, ເຄື່ອງນຸ່ງຫົ່ມ, ອຸປະກອນ/ເຄື່ອງໃຊ້ທີ່ຈຳເປັນ, ການຟື້ນຟູສະພາບ

ຈິດໃຈ), ການຊ່ວຍເຫຼືອທາງດ້ານກົດໝາຍ, ການຊ່ວຍເຫຼືອດ້ານການແພດ/ການປິ່ນປົວ, ການສຶກສາ ແລະ ການຝຶກອົບຮົມດ້ານວິຊາຊີບ, ແລະ ການຊ່ວຍໃຫ້ຜູ້ທີ່ໄດ້ຮັບເຄາະຮ້າຍກັບຄືນສູ່ການດໍາລົງຊີວິດປົກກະຕິໃນຄອບຄົວ ແລະ ສັງຄົມ.

ລັດຖະບານ ໄດ້ເປີດນໍາໃຊ້ສາຍດ່ວນການຄ້າມະນຸດ (ໝາຍເລກ 1300), ພ້ອມດຽວກັນນັ້ນ ສູນໃຫ້ຄໍາປຶກສາ ແລະ ປົກປ້ອງແມ່ຍິງ ແລະ ເດັກນ້ອຍ ກໍໄດ້ເປີດນໍາໃຊ້ສາຍດ່ວນ ໝາຍເລກ 1362, ແລະ ສາຍດ່ວນ COVID–19 ໝາຍເລກ 165 ແລະ 166.

- ນອກຈາກນີ້, ລັດຖະບານ ໂດຍຮ່ວມກັບບັນດາອົງການຈັດຕັ້ງສາກົນ ໄດ້ຈັດຝຶກອົບຮົມວິຊາຊີບ ແລະ ສະໜອງວັດຖຸອຸປະກອນສໍາລັບການສ້າງຕັ້ງທຸລະກິດຂະໜາດນ້ອຍ ເຊັ່ນ: ຮ້ານເສີມສວຍ, ທຸລະກິດຕັດຫຍິບ, ສ້ອມແປງລົດຈັກ-ລົດຖີບ. ກອງທຶນສະຫວັດດີການສັງຄົມ ກໍໄດ້ຮັບການສ້າງຕັ້ງຂຶ້ນຢູ່ຂັ້ນສູນກາງ ແລະ ຢູ່ 17 ແຂວງ ແລະ ນະຄອນຫຼວງ. ນອກຈາກກອງທຶນຈາກແຫຼ່ງງົບປະມານຂອງລັດ ແລະ ບັນດາກອງທຶນທີ່ມີຢູ່ແລ້ວນີ້, ກໍຍັງມີຫຼາຍກອງທຶນຊ່ວຍເຫຼືອລ້າຂອງອົງການຈັດຕັ້ງສາກົນ ເພື່ອຊ່ວຍເຫຼືອຜູ້ທີ່ໄດ້ຮັບເຄາະຮ້າຍຈາກໄພພິບັດທໍາມະຊາດ, ຊຶ່ງມີມູນຄ່າເຖິງ 81.562.191.562 ກີບ, 202.234.072 ບາດ ແລະ 14.386.348 ໂດລາສະຫະລັດ ລວມທັງການຊ່ວຍເຫຼືອທີ່ເປັນວັດຖຸທີ່ມີມູນຄ່າສູງ ເຊັ່ນ ທີ່ພັກອາໄສ ແລະ ອຸປະກອນທີ່ຈໍາເປັນ, ອາຫານ ແລະ ສິນຄ້າອຸປະໂພກ-ບໍລິໂພກ.

- ໄດ້ສໍາເລັດການຈັດຝຶກອົບຮົມກ່ຽວກັບການຮັບເອົາເດັກໄປເປັນລູກລ້ຽງ ໃຫ້ແກ່ສະມາຊິກຂອງຄະນະກໍາມະການຮັບເອົາເດັກໄປເປັນລູກລ້ຽງ ຢູ່ 12 ແຂວງ ແລະ 54 ເມືອງ; ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 177 ຄົນ (ຍິງ 55 ຄົນ) ທີ່ໄດ້ຮັບປະໂຫຍດຈາກການຝຶກອົບຮົມ. ການຝຶກອົບຮົມດັ່ງກ່າວ ແມ່ນຈັດໃຫ້ແກ່ສະມາຊິກຂອງທີມງານ ຫຼື ໜ່ວຍງານທີ່ຮັບຜິດຊອບ ຫຼື ເຮັດວຽກ ໃຫ້ໂຄງການຊ່ວຍເຫຼືອຊຸມຊົນ ຈາກແຂວງສະຫວັນນະເຂດ ຈາກແຂວງສະຫວັນນະເຂດ, ຊຽງຂວາງ ແລະ ນະຄອນຫຼວງວຽງຈັນ ແລະ ຈາກເມືອງໄຊພູທອງ, ເມືອງອາດສະພັງທອງ, ນະຄອນໄກສອນພົມວິຫານ, ເມືອງໄຊເສດຖາ, ເມືອງໄຊທານີ, ເມືອງຄູນ, ເມືອງແປກ ແລະ 24 ບ້ານຈາກບັນດາເມືອງເປົ້າໝາຍເຫຼົ່ານີ້, ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 122 ຄົນ ລວມທັງແມ່ຍິງ 45 ຄົນ. ໄດ້ເຜີຍແຜ່ດໍາລັດວ່າດ້ວຍການຮັບຮອງເອົາເດັກ ໃຫ້ແກ່ພະນັກງານ 170 ຄົນ (ຍິງ 50 ຄົນ) ທີ່ເຮັດວຽກໃນຂະແໜງຍຸຕິທໍາ, ຂະແໜງສາທາລະນະສຸກ ແລະ ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ຢູ່ນະຄອນຫຼວງວຽງຈັນ. ໄດ້ພິຈາລະນາ ແລະ ສໍາເລັດການດໍາເນີນຂັ້ນຕອນສໍາລັບ ກໍລະນີເດັກລາວ 18 ຄົນທີ່ຄົນຕ່າງປະເທດສະເໜີຂໍຮັບເອົາໄປລ້ຽງ. ໂຄງການກ່ຽວກັບການຊ່ວຍເຫຼືອທາງດ້ານສັງຄົມ ແລະ ກົດ ໝາຍ ໃຫ້ແກ່ເດັກ ກໍໄດ້ຖືກຂະຫຍາຍໄປສູ່ 5 ບ້ານ ຂອງເມືອງຄູນ ແລະ 5 ບ້ານຂອງເມືອງແປກ, ແຂວງຊຽງຂວາງ ແລະ 5 ບ້ານຂອງນະຄອນໄກສອນພົມວິຫານ ແລະ 5 ບ້ານ ຂອງເມືອງອາດສະພັງທອງ, ແຂວງສະຫວັນນະເຂດ. ຄະດີທີ່ກ່ຽວຂ້ອງກັບຜູ້ກະທໍາຜິດທີ່ເປັນເດັກ 11 ຄົນ (ທັງໝົດເປັນເດັກຊາຍ) ແມ່ນບໍ່ໄດ້ຖືກດໍາເນີນຄະດີຕາມກົດໝາຍ ຫຼື ບໍ່ສົ່ງໃຫ້ສານຕັດສິນ. ການດໍາເນີນໂຄງການທົດລອງ ແມ່ນເພື່ອພັດທະນາແບບຟອມ ຫຼື ຮ່າງສໍາລັບການເກັບກໍາຂໍ້ມູນກ່ຽວກັບການດໍາເນີນຄະດີເດັກ ແລະ ເຍົາວະຊົນ. ໄດ້ສໍາເລັດການສ້າງຄູ່ມືການດໍາເນີນຄະດີເດັກ ແລະ ເຍົາວະຊົນ ແລະ ຄູ່ມືການຕິດຕາມ ສໍາລັບໜ່ວຍງານໄອຍະການເດັກ.

ໄດ້ສ້າງອຸປະກອນ (ແຜ່ນພັບ) ກ່ຽວກັບການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ສັງຄົມ ແກ່ເດັກໂດຍພາຍໃຕ້ກົດໝາຍ ແລະ ໄດ້ເຜີຍແຜ່/ແຈກຢາຍໃຫ້ປະຊາຊົນຢູ່ເຂດຊົນນະບົດ ແລະ ເຂດທີ່ເຂົ້າເຖິງໄດ້ຍາກ. ຫຼາຍມາດຕະການໄດ້ຖືກນໍາມາໃຊ້ເພື່ອຈັດຕັ້ງປະຕິບັດລະບົບຍຸຕິທໍາສໍາລັບເດັກ ແລະ ເຍົາວະຊົນ ທີ່ເປັນມິດກັບເດັກ ຢູ່ຂັ້ນທ້ອງຖິ່ນເຊັ່ນ ການສ້າງຕັ້ງຫ້ອງການໃຫ້ຄໍາແນະນໍາ ແລະ ປຶກສາຫາດ້ານກົດໝາຍ ແລະ ການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ສັງຄົມແກ່ເດັກ ແລະ ຜູ້ໃຫຍ່. ນອກຈາກນີ້, ກໍຍັງໄດ້ຈັດຕັ້ງເຜີຍແຜ່ຄໍາແນະນໍາກ່ຽວກັບການດໍາເນີນຄະດີເດັກ ແລະ ເຍົາວະຊົນ ໃຫ້ແກ່ພະນັກງານໃນຂະແໜງຍຸຕິທໍາ, ເດັກ, ປະຊາຊົນ ແລະ ນັກຮຽນ-ນັກສຶກສາ ຫຼາຍກວ່າ 14 ຄັ້ງ ຢູ່ 8 ແຂວງ, ກວມເອົາ 840 ຄົນ (ຍິງ 209 ຄົນ). ໄດ້ໃຫ້ການສະໜັບສະໜູນໃນການສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາອົງການຈັດຕັ້ງທີ່ເຮັດວຽກ ກ່ຽວກັບຄວາມຍຸຕິທໍາສໍາລັບເດັກ ທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ. ການສະ ໜັບສະໜູນດັ່ງກ່າວ ລວມມີການປັບປຸງໂຄງຮ່າງການຈັດຕັ້ງ, ການປັບປຸງກົດໝາຍ/ນິຕິກໍາ ແລະ ຄູ່ມືການແກ້ໄຂບັນຫາ ແລະ ດໍາເນີນຄະດີຕໍ່ເດັກ ສໍາລັບ 4 ອົງການຍຸຕິທໍາ, ແລະ ການຈັດຝຶກອົບຮົມເພື່ອສ້າງຄວາມອາດສາມາດໃຫ້ແກ່ພະນັກງານ ແລະ ອໍານາດການປົກຄອງບ້ານທີ່ຮັບຜິດຊອບວຽກງານດ້ານນີ້. ຜູ້ຊາຍ, ແມ່ຍິງ ແລະ ເດັກ ຢູ່ 15 ບ້ານຂອງເມືອງໄຊທານີ ໄດ້ເຂົ້າເຖິງການບໍລິການໃຫ້ຄໍາແນະນໍາ ແລະ ປຶກສາທາງດ້ານກົດໝາຍ ໂດຍຜ່ານອາສາສະໝັກບ້ານທີ່ເຮັດວຽກຢູ່ຫ້ອງການຊ່ວຍເຫຼືອທາງດ້ານກົດໝາຍ ຢູ່ບ້ານໜອງສອງຫ້ອງ. ໃນປີ 2019, ມີ 3 ຄະດີທີ່ໄດ້ຮັບການຊ່ວຍເຫຼືອທາງດ້ານ

ກົດໝາຍໄດ້ປະສົບຜົນສໍາເລັດ. ປະຊາຊົນຢູ່ໃນບ້ານເປົ້າໝາຍ ມີຄວາມຮັບຮູ້ ແລະ ເຂົ້າໃຈຫຼາຍຂຶ້ນກ່ຽວກັບການຊ່ວຍເຫຼືອທາງດ້ານກົດໝາຍ. ໂດຍລວມແລ້ວ, ໃນໄລຍະ 2-3 ປີຜ່ານມານີ້ ຈໍານວນຄະດີ/ຂໍ້ຂັດແຍ່ງຢູ່ບັນດາບ້ານເປົ້າໝາຍ ເຫັນວ່າຫລຸດລົງ. ນັບແຕ່ປີ 2017 ເປັນຕົ້ນມາ, ມີ 47 ຫ້ອງການໃຫ້ຄໍາແນະນໍາ ແລະ ປຶກສາທາງດ້ານກົດໝາຍໄດ້ຮັບການສ້າງຕັ້ງຂຶ້ນ.

ໃນຕາຕະລາງລຸ່ມນີ້ ແມ່ນການສະຫຼຸບສັງລວມຈໍານວນຜູ້ທີ່ໄດ້ຮັບເຄາະຮ້າຍຈາກການຄ້າມະນຸດ ແລະ ກຸ່ມທີ່ຕົກຢູ່ໃນຄວາມສ່ຽງ ທີ່ພັກຢູ່ສູນຕະຫຼອດໄລຍະແຕ່ປີ 2014-2020:

| ລ/ດ | ຜູ້ທີ່ໄດ້ຮັບເຄາະຮ້າຍທີ່ເຂົ້າຮັບການບໍາບັດ/ຟື້ນຟູຢູ່ສູນຕ່າງໆ | ທັງໝົດ | ຍິງ | ຊາຍ | ອາຍຸຕໍ່າກວ່າ 18 ປີ | | |
|---|---|---|---|---|---|---|---|
| | | | | | ທັງໝົດ | ຍິງ | ຊາຍ |
| | ການຄ້າມະນຸດ | 170 | 128 | 42 | 73 | 65 | 8 |
| | ກຸ່ມທີ່ຕົກຢູ່ໃນຄວາມສ່ຽງຕໍ່ການຄ້າມະນຸດ | 187 | 174 | 13 | 57 | 54 | 3 |
| | ການໃຊ້ຄວາມຮຸນແຮງໃນຄອບຄົວ | 34 | 29 | 5 | 14 | 9 | 5 |
| | ການຂົ່ມຂືນ | 13 | 13 | 0 | 10 | 10 | 0 |
| | **ທັງໝົດ** | 404 | 344 | 60 | 154 | 138 | 16 |

ສູນຮັບຕ້ອນຢູ່ຫຼວງນໍ້າທາ ໄດ້ໃຫ້ທີ່ພັກທີ່ປອດໄພແກ່ແມ່ຍິງ ແລະ ເດັກທີ່ໄດ້ຮັບເຄາະຮ້າຍຈາກການຄ້າມະນຸດ ແລະ ກຸ່ມທີ່ຕົກຢູ່ໃນຄວາມສ່ຽງດັ່ງກ່າວ, ໂດຍສະເພາະແມ່ນການຊອກຮູ້/ລາຍງານປະກົດການຕັ້ງແຕ່ຕົ້ນ, ການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ການຊ່ວຍໃຫ້ຜູ້ທີ່ໄດ້ຮັບເຄາະຮ້າຍນັ້ນໄດ້ກັບຄືນມາໃຊ້ຊີວິດຢ່າງປົກກະຕິ. ສູນຮັບຕ້ອນຢູ່ແຂວງຫຼວງນໍ້າທາ ສາມາດຮັບເອົາຜູ້ເຄາະຮ້າຍຢູ່ 5 ແຂວງພາກເໜືອ ເຊັ່ນ: ແຂວງຫຼວງນໍ້າທາ, ບໍ່ແກ້ວ, ຜົ້ງສາລີ, ອຸດົມໄຊ ແລະ ຫຼວງພະບາງ. ນອກຈາກນີ້, ສູນຮັບຕ້ອນແຂວງຫຼວງນໍ້າທາ ຍັງເປັນບ່ອນເກັບກໍາສະພາບ, ລາຍງານ ແລະ ສົ່ງຕໍ່ຜູ້ທີ່ໄດ້ຮັບເຄາະຮ້າຍຈາກການຄ້າມະນຸດ ແລະ ກຸ່ມທີ່ຕົກຢູ່ໃນຄວາມສ່ຽງຂອງການຄ້າມະນຸດ ໃຫ້ແກ່ສູນໃຫ້ຄໍາປຶກສາ ແລະ ປົກປ້ອງແມ່ຍິງ ແລະ ເດັກນ້ອຍ ຂອງສູນກາງສະຫະພັນແມ່ຍິງລາວ ເພື່ອສືບຕໍ່ຊ່ວຍເຫຼືອໃຫ້ເຂົາເຈົ້າເຫຼົ່ານັ້ນໄດ້ກັບມາໃຊ້ຊີວິດປົກກະຕິໃນຄອບຄົວ ແລະ ສັງຄົມ. ຕາຕະລາງລຸ່ມນີ້ ແມ່ນການສະຫຼຸບ ສັງລວມ ຈໍານວນແມ່ຍິງແລະ ເດັກ ທີ່ຖືກສົ່ງກັບຄືນມາຈາກປະເທດຈີນ, ຊຶ່ງໄດ້ເຂົ້າພັກຢູ່ສູນ ໃນລະຫວ່າງເດືອນມີນາ 2019 ຫາເດືອນ ມັງກອນ 2020:

| ລ/ດ | ຜູ້ທີ່ໄດ້ຮັບເຄາະຮ້າຍທີ່ເຂົ້າຮັບການບໍາບັດ/ຟື້ນຟູຢູ່ສູນຕ່າງໆ | ທັງໝົດ | ຍິງ | ຊາຍ | ອາຍຸຕໍ່າກວ່າ 18 ປີ | ເກີນ 18 ປີ |
|---|---|---|---|---|---|---|
| | ຜູ້ທີ່ໄດ້ຮັບເຄາະຮ້າຍທີ່ສົງໄສວ່າຕົກເປັນເຫຍື່ອຂອງການຄ້າມະນຸດ | 123 | 123 | 0 | 8 | 115 |
| | ກຸ່ມທີ່ຕົກຢູ່ໃນຄວາມສ່ຽງຂອງການຄ້າມະນຸດ | 47 | 46 | 01 | 6 | 40 |
| | **ທັງໝົດ** | 170 | 169 | 01 | 14 | 155 |

ລັດຖະບານ ໄດ້ໃຫ້ການຊ່ວຍເຫຼືອ ແລະ ການບໍລິການໃນດ້ານຕ່າງໆ, ການໃຫ້ຄໍາປຶກສາດ້ານສຸຂະພາບ ແລະ ດ້ານຈິດໃຈ ໂດຍບໍ່ເສຍຄ່າແກ່ແມ່ຍິງ ແລະ ເດັກ ທີ່ຮ້ອງຂໍມາ ແລະ ສໍາລັບຜູ້ທີ່ໄດ້ຮັບເຄາະຮ້າຍທີ່ພັກຢູ່ສູນ ການໃຫ້ບໍລິການແມ່ນມີ 2 ຮູບແບບ ຄື: ການບໍລິການໃຫ້ຄໍາປຶກສາແບບເຊິ່ງໜ້າ (ຢູ່ສູນໃຫ້ຄໍາປຶກສາ) ແລະ ການບໍລິການໃຫ້ຄໍາປຶກສາທາງໂທລະສັບ. ຕະຫຼອດໄລຍະແຕ່ປີ 20142020, ໄດ້ໃຫ້ການຊ່ວຍເຫຼືອໃຫ້ຄໍາປຶກສາ ຄືດັ່ງຕໍ່ໄປນີ້:

- ປະຊາຊົນທີ່ຂໍຄໍາປຶກສາ: 5.711 ກໍລະນີ:
  - » ການບໍລິການໃຫ້ຄໍາປຶກສາຜ່ານທາງໂທລະສັບ 4.170 ກໍລະນີ
  - » ການບໍລິການໃຫ້ຄໍາປຶກສາແບບເຊິ່ງໜ້າ 1.555 ກໍລະນີ, ລວມທັງຜູ້ທີ່ພັກຢູ່ເຮືອນຂອງເຂົາເຈົ້າເອງ ແຕ່ວ່າເຂົ້າມາຂໍຄໍາປຶກສາຢູ່ສູນ.
  - » ຜູ້ທີ່ອາຍຸຕໍ່າກວ່າ 18 ປີ ມີ 158 ຄົນ, ສູງກວ່າ 18 ປີ ມີ 2.469 ຄົນ, ລວມທັງໝົດມີ 2.627 ຄົນ, ໃນນີ້ ເປັນເພດຍິງ 2.062 ຄົນ ແລະ ເພດຊາຍ 565 ຄົນ.

### 5) ການມີສ່ວນຮ່ວມຂອງເດັກ

ບັນດາອົງການຈັດຕັ້ງມະຫາຊົນຂອງ ສປປ ລາວ ແມ່ນເປັນຕົວແທນໃຫ້ແກ່ປວງຊົນລາວທັງຊາດ. ບັນດາອົງການຈັດຕັ້ງເຫຼົ່ານີ້ ແລະ ສະຫະພັນກຳມະບານລາວ ສາມາດລົງເຮັດວຽກໄດ້ໃນລະດັບຊຸມຊົນ ແລະ ທ້ອງຖິ່ນຮາກຖານ ແລະ ເຂົ້າເຖິງທຸກຊົນຊັ້ນ ພ້ອມທັງປຸກລະດົມການມີສ່ວນຮ່ວມຂອງເດັກ ແລະ ໄວໜຸ່ມ.

ລັດຖະບານໄດ້ສືບຕໍ່ໃຫ້ບຸລິມະສິດແກ່ການມີສ່ວນຮ່ວມຂອງເດັກ, ດັ່ງສະແດງອອກຢູ່ໃນຂະບວນການສ້າງບົດລາຍງານຂອງລັດພາຄີຕໍ່ອົງການສະຫະປະຊາຊາດ ກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍສິດທິເດັກ, ບົດລາຍງານດັ່ງກ່າວນີ້ ໄດ້ສັງລວມເອົາຄຳຄິດເຫັນຂອງເດັກ ທີ່ເປັນຕົວແທນຂອງເດັກຈາກທຸກແຂວງທົ່ວປະເທດ. ນອກຈາກນີ້, ລັດຖະບານ ຍັງໄດ້ຊຸກຍູ້ ແລະ ສົ່ງເສີມການມີສ່ວນຮ່ວມຂອງເດັກ ແລະ ໄວໜຸ່ມໃນກອງປະຊຸມໃຫຍ່ລະດັບປະເທດ, ລະດັບພາກພື້ນ ແລະ ສາກົນ ເຊັ່ນ: ເວທີເດັກລາວ, ການສະເຫຼີມສະຫຼອງວັນເດັກສາກົນ ແລະ ການສະເຫຼີມສະຫຼອງຄົບຮອບ 30 ປີ ຂອງສົນທິສັນຍາວ່າດ້ວຍສິດທິເດັກ ໃນປີ 2019. ທຸກຄຳເຫັນຂອງເດັກແມ່ນຖືກບັນທຶກ ແລະ ສັງລວມ ແລະ ບັນດາຕົວແທນຂອງເດັກ ແມ່ນເປັນຕົວແທນໃຫ້ແກ່ເດັກທຸກກຸ່ມຊົນເຜົ່າໃນລາວ ທີ່ຖືກຄັດເລືອກໃຫ້ເຂົ້າຮ່ວມກອງປະຊຸມໃຫຍ່ລະດັບພາກພື້ນ ແລະ ສາກົນ, ລວມທັງການສະເຫຼີມສະຫຼອງຄົບຮອບ 30 ປີ ຂອງສົນທິສັນຍາ ວ່າດ້ວຍສິດທິເດັກ ທີ່ຈັດຂຶ້ນຢູ່ນິວຢອກ (ສະຫະລັດອາເມລິກາ) ແລະ ບັນດາເຫດການສຳຄັນຢູ່ ເຈນີວາ, ປະເທດສະວິດເຊີແລນ ແລະ ກອງປະຊຸມສຸດຍອດເດັກອາຊຽນ ທີ່ຈັດຂຶ້ນຢູ່ບາງກອກ, ປະເທດໄທ.

ໂຄງການສົ່ງເສີມການມີສ່ວນຮ່ວມ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ເດັກ ແລະ ຊາວໜຸ່ມ ໄດ້ຖືກຈັດຕັ້ງປະຕິບັດຢູ່ 3 ແຂວງເປົ້າໝາຍ (ຫົວພັນ, ຊຽງຂວາງ ແລະ ນະຄອນຫຼວງວຽງຈັນ) ຕະຫຼອດທັງສອງໄລຍະຂອງໂຄງການດັ່ງກ່າວ.

#### ໄລຍະ 1 (2017-2019) ລວມມີ:

- ການສົ່ງເສີມການມີສ່ວນຮ່ວມໂດຍຜ່ານການຝຶກອົບຮົມ ແລະ ການສະເຫຼີມສະຫຼອງວັນເດັກ ນັບແຕ່ຂັ້ນບ້ານຈົນຮອດຂັ້ນສູນກາງ.
- ການສ້າງຕັ້ງກົນໄກລະດັບຊາດຂອງການມີສ່ວນຮ່ວມຂອງເດັກ ເພື່ອໃຫ້ເດັກໄດ້ມີສ່ວນຮ່ວມໃນຂະບວນການປຶກສາຫາລືກ່ຽວກັບສົນທິສັນຍາວ່າດ້ວຍສິດທິເດັກ.
- ການຈັດກອງປະຊຸມໃຫຍ່ຂອງເດັກຢູ່ ສປປ ລາວ.
- ສະໜັບສະໜູນໂຄງການຂະໜາດນ້ອຍທີ່ນຳໂດຍເດັກ ແລະ ຊາວໜຸ່ມ ຢູ່ບັນດາແຂວງ/ເມືອງທີ່ຖືກເລືອກ ເຊັ່ນ: ໂຄງການຊາວໜຸ່ມອາສາສະໝັກ ເພື່ອສົ່ງເສີມສຸຂະພາບຈະເລີນພັນ ແລະ ສິດທິຂອງຊາວໜຸ່ມ (ຢູ່ນະຄອນຫຼວງວຽງຈັນ).
- ລຶບລ້າງການໃຊ້ຄວາມຮຸນແຮງຕໍ່ເດັກໃນໂຄງການໂຮງຮຽນ (ຢູ່ນະຄອນຫຼວງວຽງຈັນ).
- ໂຄງການຊາວໜຸ່ມຕ້ານຢາເສບຕິດ (ຢູ່ນະຄອນຫຼວງວຽງຈັນ).
- ໂຄງການກະສິກຳເພື່ອສົ່ງເສີມໂອກາດທາງການສຶກສາ ແລະ ວິຊາຊີບ ສຳລັບເດັກ ແລະ ຊາວໜຸ່ມ (ຢູ່ແຂວງຊຽງຂວາງ).
- ໂຄງການຊາວໜຸ່ມອາສາສະໝັກເພື່ອສົ່ງເສີມກອງປະຊຸມໃຫຍ່ຂອງເດັກຢູ່ຂັ້ນທ້ອງຖິ່ນ (ຢູ່ແຂວງຫົວພັນ).

#### ໄລຍະ 2 (2019-2021) ສຸມໃສ່:

- ການສ້າງຄວາມເຂັ້ມແຂງໃຫ້ກອງເລຂາຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກນັບແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດ ແລະ ສົ່ງເສີມການມີສ່ວນຮ່ວມ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ເດັກ ແລະ ຊາວໜຸ່ມ.
- ສ້າງຄວາມອາດສາມາດໃຫ້ແກ່ຄູຝຶກຫຼັກ/ຄູຝຶກໜຸ່ມ ເພື່ອກະກຽມຄວາມພ້ອມໃຫ້ແກ່ເດັກສຳລັບການເປັນຜູ້ນຳໃນອະນາຄົດ.
- ສົ່ງເສີມການມີສ່ວນຮ່ວມຂອງເດັກ ແລະ ຊາວໜຸ່ມໃນກອງປະຊຸມສຸດຍອດເດັກອາຊຽນ;
- ກອງປະຊຸມໃຫຍ່ຂອງເດັກ ແລະ ຊາວໜຸ່ມ ກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍສິດທິເດັກ;
- ພິທີສະເຫຼີມສະຫຼອງສົນທິສັນຍາວ່າດ້ວຍສິດທິເດັກ ຄົບຮອບ 30 ປີ ທີ່ຈັດຂຶ້ນຢູ່ເຈນີວາ ແລະ ນິວຢອກ;
- ການທົດລອງນຳໃຊ້ຄູ່ມືທັກສະຊີວິດສຳລັບເດັກ ແລະ ຊາວໜຸ່ມຢູ່ 3 ແຂວງ.

**ການລິເລີ່ມທີ່ນຳໂດຍເດັກ ແລະ ຊາວໜຸ່ມ ເພື່ອສົ່ງເສີມຂໍ້ມູນ ກ່ຽວກັບສິດທິເດັກ ລວມມີ:**

- ລາຍການໂທລະພາບສຳລັບເດັກກ່ອນໄວຮຽນ 30 ຕອນ ພາຍໃຕ້ຫົວຂໍ້ ບ້ານຂອງຂ້ອຍ ທີ່ຜະລິດ ແລະ ອອກອາກາດ ໂດຍໂທລະພາບແຫ່ງຊາດ ແລະ ຍັງໄດ້ເຂົ້າຮ່ວມເທດສະການຮູບເງົາຢູ່ຕ່າງປະເທດ.
- ລາຍການວິທະຍຸສຳລັບຊາວໜຸ່ມ ທີ່ຜະລິດ ແລະ ອອກອາກາດໂດຍສະຖານີວິທະຍຸກະຈາຍສຽງແຫ່ງຊາດ ໂດຍຜ່ານທາງຄື້ນ FM ແລະ AM ໄປສູ່ 18 ແຂວງ ລະຫວ່າງປີ 2015 ຫາ 2020. ມີລາຍການວິທະຍຸ 31 ທີ່ອອກອາກາດໃນແຕ່ລະອາທິດ.
- ການເຜີຍແຜ່ຂໍ້ມູນກ່ຽວກັບບັນຫາສຸຂະພາບ, ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແລະ ບັນຫາອື່ນໆກ່ຽວກັບເດັກ ຜ່ານທາງລາຍການວິທະຍຸ ແມ່ນການລິເລີ່ມ ແລະ ຜະລິດໂດຍເດັກ ແລະ ຊາວໜຸ່ມຈາກສູນວັດທະນະທຳເດັກ ຮ່ວມກັບ ສະຖານີວິທະຍຸແຂວງ ແລະ ປະຕິບັດຕາມຫຼັກການໃຫ້ຄວາມບັນເທີງ, ການສຶກສາ ແລະ ຂໍ້ມູນຂ່າວສານ.
- ສ້າງຕັ້ງສູນວັດທະນະທຳເດັກ 47 ສູນ ທີ່ມີຫຼາຍກິດຈະກຳນັບຕັ້ງແຕ່ການຫຼິ້ນດົນຕີພື້ນເມືອງ ແລະ ການເຕັ້ນແບບສາກົນ, ການຟ້ອນລຳແບບພື້ນເມືອງ, ການສະແດງລະຄອນ ແລະ ລະຄອນເວທີ, ການລະບາຍສີ, ການແກະສະລັກ ແລະ ປັ້ນ ຫຼໍ່, ການຫຍິບ-ປັກ-ຖັກ-ແສ່ວ, ການຈັກສານ, ການເລົ່ານິທານ, ການຫຼິ້ນກິລາ ແລະ ສິລະປະການປ້ອງກັນຕົວ. ສູນ ວັດທະນະທຳເດັກ ໄດ້ຈັດໃຫ້ມີການສະແດງ 32 ລາຍການ ຢູ່ໃນລະດັບປະເທດ ແລະ ລະດັບສາກົນ.
- ຫໍສະໝຸດແຫ່ງຊາດ ໄດ້ສ້າງຫ້ອງສະໝຸດສຳລັບເດັກ.
- ການຈັດໃຫ້ມີການບໍລິການຫ້ອງສະໝຸດເຄື່ອນທີ່ຢູ່ 9 ຕົວເມືອງ, ຊຶ່ງເປັນປະໂຫຍດຕໍ່ໂຮງຮຽນຂອງລັດຢູ່ທ້ອງຖິ່ນ.

## 4. ແຜນງານໂຄສະນາ, ປູກຈິດສຳນຶກ ແລະ ຂະບວນການ

ໃນໄລຍະແຕ່ປີ 2016 ຫາ 2020, ແຕ່ລະປີ ກໍ່ໄດ້ມີການສະເຫຼີມສະຫຼອງວັນເດັກສາກົນ (ວັນທີ 1 ມິຖຸນາ) ແລະ ວັນເດັກໂລກ (ວັນທີ 20 ພະຈິກ), ຊຶ່ງໄດ້ມີການວາງແຜນຈັດພິທີສະເຫຼີມສະຫຼອງ ທັງຢູ່ນະຄອນຫຼວງວຽງຈັນ ແລະ ບັນດາແຂວງທີ່ ຖືກເລືອກ.

- ໃນພິທີສະເຫຼີມສະຫຼອງວັນດັ່ງກ່າວ ກໍໄດ້ມີການເຜີຍແຜ່ສານຈາກທ່ານນາຍົກລັດຖະມົນຕີ ພ້ອມທັງຈັດໃຫ້ມີວາລະ ຖາມ-ຕອບ ກ່ຽວກັບສິດທິເດັກ, ມີການສະແດງລະຄອນ, ການແຈກເສື້ອຍືດ ແລະ ແຜ່ນພັບ, ການຍ່າງ ເພື່ອສຸຂະພາບ, ການກວດສຸຂະພາບ, ການແຈກວິຕາມິນ ແລະ ຢາຂ້າແມ່ທ້ອງໃຫ້ເດັກ ເຫຼົ່ານີ້ເປັນຕົ້ນ.
- ການເຜີຍແຜ່ຂໍ້ມູນເພີ່ມເຕີມກ່ຽວກັບນະໂຍບາຍ ແລະ ກົດໝາຍລະດັບປະເທດ ແລະ ອາຊຽນກ່ຽວກັບເດັກ ແລະ ບັນດາເປົ້າໝາຍການພັດທະນາແບບຍືນຍົງ ໄປພ້ອມໆກັບຂໍ້ມູນຈາກການສຳຫຼວດໃນລະດັບປະເທດ ກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຢູ່ ສປປ ລາວ ແລະ ການທົບທວນຜົນສຳເລັດ 25 ປີ ຂອງການຈັດຕັ້ງປະຕິບັດວຽກງານການພັດທະນາເດັກຢູ່ພາຍໃນປະເທດ.
- ໃນປີ 2018, ໂດຍການເຫັນດີເປັນເອກະພາບກັນຂອງບັນດາກະຊວງທີ່ກ່ຽວຂ້ອງ, ກໍໄດ້ຈັດໃຫ້ມີພິທີສະເຫຼີມສະຫຼອງວັນເດັກສາກົນ ໃນວັນທີ 1 ມິຖຸນາ ຢູ່ທີ່ຫໍວັດທະນະທຳແຫ່ງຊາດ, ນະຄອນຫຼວງວຽງຈັນ ໂດຍມີພະນະທ່ານ ສອນໄຊ ສີພັນດອນ, ຮອງນາຍົກລັດຖະມົນຕີ, ທັງເປັນປະທານຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ກໍ່ໄດ້ໃຫ້ກຽດເຂົ້າຮ່ວມເນື່ອງໃນໂອກາດສະເຫຼີມສະຫຼອງວັນດັ່ງກ່າວນີ້. ໃນລະຫວ່າງພິທີສະເຫຼີມສະຫຼອງວັນດັ່ງກ່າວ ກໍໄດ້ມີການຈັດກິດຈະກຳຫຼາຍຢ່າງ ເຊັ່ນ: ການສົ່ງສານຂອງນາຍົກລັດຖະມົນຕີເຖິງເດັກ ເນື່ອງໃນໂອກາດສະເຫຼີມສະຫຼອງວັນເດັກສາກົນ ໂດຍຜ່ານຫຼາຍຊ່ອງທາງການສື່ສານ ເຊັ່ນ ໜັງສືພິມ, ວິທະຍຸ ແລະ ໂທລະພາບ; ການແຈກວິຕາມິນໃຫ້ແກ່ເດັກ ການອອກໃບຢັ້ງຢືນການເກີດໂດຍບໍ່ເສຍຄ່າ; ການແຈກຖົງ ແລະ ອຸປະກອນການຮຽນໃຫ້ແກ່ເດັກທີ່ມາຮ່ວມພິທີສະເຫຼີມສະຫຼອງວັນດັ່ງກ່າວ; ແລະ ການເຜີຍແຜ່ຂໍ້ມູນຈາກການສຳຫຼວດໃນລະດັບປະເທດ ກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຢູ່ ສປປ ລາວ. ຊຶ່ງມີຜູ້ເຂົ້າຮ່ວມງານດັ່ງກ່າວ ທັງໝົດ 515 ຄົນ (ຍິງ 315).
- ໃນປີ 2019, ພິທີສະເຫຼີມສະຫຼອງວັນເດັກສາກົນ ກໍໄດ້ຈັດຂຶ້ນໃນວັນທີ 11 ພະຈິກ ຢູ່ທີ່ສູນຝຶກອົບຮົມ ແລະ ຮ່ວມມືສາກົນ (ICTC) ນະຄອນຫຼວງວຽງຈັນ, ຊຶ່ງໄດ້ດຳເນີນໄປໃນທ່າມກາງບັນຍາກາດຂອງການກະກຽມສະເຫຼີມສະຫຼອງສົນທິສັນຍາວ່າດ້ວຍສິດທິເດັກ ຄົບຮອບ 30 ປີ. ໃນພິທີດັ່ງກ່າວ ກໍຈັດໃຫ້ໄດ້ມີການສົນທະນາປຶກສາຫາລືກັບບັນດາຕົວແທນຂອງເດັກຈາກແຕ່ລະແຂວງທົ່ວປະເທດ.
- ແຕ່ລະປີ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ (ຖວທ) ກໍໄດ້ປະກອບສ່ວນດ້ວຍການເຜີຍແຜ່/ສົ່ງສານຂອງທ່ານນາຍົກລັດຖະມົນຕີເນື່ອງໃນໂອກາດວັນເດັກສາກົນ ຜ່ານຫຼາຍຊ່ອງທາງການສື່ສານ ເປັນຕົ້ນແມ່ນ ຜ່ານທາງວິທະຍຸ,



ໂທລະພາບ,ໜັງສືພິມ ແລະ ສື່ອອນລາຍ. ນອກຈາກນີ້ ກໍຍັງໄດ້ປະກອບສ່ວນເປັນສື່ກາງໃນການສະໜັບສະໜູນແມ່ ແລະ ເດັກ, ໂດຍສະເພາະແມ່ນໃນລະຫວ່າງການສະເຫຼີມສະຫຼອງສົນທິສັນຍາວ່າດ້ວຍສິດທິເດັກ ຄົບຮອບ 30 ປີ. ແຕ່ລະປີ, ກະຊວງກະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວໄດ້ປະກອບສ່ວນເຂົ້າໃນການສະເຫຼີມສະຫຼອງຕ່າງໆກ່ຽວກັບເດັກໂດຍຜ່ານຫຼາຍກິດຈະກຳ ເຊັ່ນ: ການ ສະແດງສິນລະປະ, ວັດທະນະທຳ ແລະ ງານວາງສະແດງຕ່າງໆຂອງສູນວັດທະນະທຳເດັກ, ການຈັດກິດຈະກຳແມ່ ແລະ ເດັກ, ແລະ ຫ້ອງສະໝຸດເຄື່ອນທີ່ສຳລັບເດັກ. ນັກຂ່າວກໍໄດ້ເກັບກຳ ແລະ ເຜີຍແຜ່ຂ່າວກ່ຽວກັບການເຄື່ອນໄຫວ ແລະ ກິດຈະກຳຕ່າງໆ ໃນງານສະເຫຼີມສະຫຼອງສົນທິສັນຍາວ່າດ້ວຍສິດທິເດັກ ຄົບຮອບ 30 ປີ.

- ຜົນສຳເລັດຂອງການສະເຫຼີມສະຫຼອງສົນທິສັນຍາວ່າດ້ວຍສິດທິເດັກ ຄົບຮອບ 30 ປີທີ່ຈັດຂຶ້ນຢູ່ນະຄອນຫຼວງວຽງຈັນ ສະແດງໃຫ້ເຫັນວ່າ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ໂດຍສົມທົບກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ປະຕິບັດໜ້າທີ່ຢ່າງມີຜົນສຳເລັດ. ໃນຂະນະດຽວກັນນັ້ນ ທຸກກະຊວງ/ອົງການທີ່ກ່ຽວຂ້ອງ, ບັນດາແຂວງ ແລະ ນະຄອນຫຼວງວຽງຈັນ, ລວມທັງບັນດາໂຮງຮຽນ ແລະ ອົງການຈັດຕັ້ງຕ່າງໆ ທັງພາກລັດ ແລະ ເອກະຊົນ ກໍໄດ້ຈັດໃຫ້ມີການສະເຫຼີມສະຫຼອງວັນສຳຄັນດັ່ງກ່າວ.

ສປປ ລາວ ໄດ້ເລີ່ມຕົ້ນການສະເຫຼີມສະຫຼອງວັນເດັກໂລກ (ວັນທີ 20 ພະຈິກ) ໃນປີ 2018, ໂດຍມີການຈັດງານ ແລະ ກິດຈະກຳຫຼາຍຢ່າງ ເຊັ່ນ:

- ໃນປີ 2018, ໄດ້ຈັດງານສະເຫຼີມສະຫຼອງດ້ວຍການຍ່າງເພື່ອສຸຂະພາບ ທີ່ນຳໂດຍທ່ານ ສອນໄຊ ສີພັນດອນ, ຮອງນາຍົກລັດຖະມົນຕີ, ປະທານຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ, ຊຶ່ງຈັດຂຶ້ນຢູ່ທີ່ປະຕູໄຊ. ພ້ອມທັງມີການປະດັບດ້ວຍແສງໄຟສີຟ້າຢູ່ເທິງປະຕູໄຊ ທີ່ເປັ່ງປະກາຍແສງນັບແຕ່ເວລາ 18:00 - 24:00 ໂມງ ຂອງວັນທີ 20 ພະຈິກ 2018 ເພື່ອເປັນເຄື່ອງໝາຍຂອງການສະເຫຼີມສະຫຼອງວັນດັ່ງກ່າວ.

ໃນປີ 2019, ເພື່ອເປັນນິມິດໝາຍໃນລະດັບໂລກແຫ່ງການສະເຫຼີມສະຫຼອງ ສົນທິສັນຍາວ່າດ້ວຍສິດທິເດັກ ຄົບຮອບ 30 ປີ, ສປປ ລາວ ກໍໄດ້ຈັດຕັ້ງນໍາພາສະຂະບວນການສະເຫຼີມສະຫຼອງທີ່ພົ້ນເດັ່ນ, ຊຶ່ງລວມມີການສົນທະນາປຶກສາຫາລືກັບເດັກ ເພື່ອເກັບກໍາ ແລະ ສັງລວມເອົາບັນດາແນວຄວາມຄິດ ແລະ ຄໍາຄິດເຫັນຂອງເຂົາເຈົ້າ ແລະ ຄັດເລືອກເອົາແນວຄວາມຄິດ ແລະ ຄໍາຄິດເຫັນທີ່ດີທີ່ສຸດຂອງເດັກໃນກອງປະຊຸມທີ່ຈັດຂຶ້ນຢູ່ແຕ່ລະພາກຂອງປະເທດ ເຊັ່ນ: ພາກເໜືອ ຈັດຂຶ້ນຢູ່ແຂວງບໍ່ແກ້ວ, ພາກກາງ ຈັດຂຶ້ນຢູ່ນະຄອນຫຼວງວຽງຈັນ, ແລະ ພາກໃຕ້ແມ່ນຈັດຂຶ້ນຢູ່ແຂວງສະຫວັນນະເຂດ ເພື່ອເປັນການກະກຽມໃຫ້ແກ່ການສະເຫຼີມສະຫຼອງສົນທິສັນຍາວ່າດ້ວຍສິດທິເດັກ ຄົບຮອບ 30 ປີ ແລະ ຖະແຫຼງການ ກ່ຽວກັບສິດທິເດັກ ຄົບຮອບ 60 ປີ ຊຶ່ງຈັດຂຶ້ນຢູ່ທີ່ສະຫະລັດອາເມລິກາ, ສະວິດເຊີແລນ ແລະ ຣາຊະອານາຈັກໄທ. ນອກຈາກນີ້, ບັນດາອົງການທີ່ກ່ຽວຂ້ອງ ກໍ່ໄດ້ປະກາດໃຫ້ຄໍາໝັ້ນສັນຍາວ່າ ຈະຊຸກຍູ້ ແລະ ສົ່ງເສີມ ທ່າແຮງຂອງຄົນລາວ ລຸ້ນປີ 2030. ຊຶ່ງໃນນີ້ ລວມມີຄໍາໝັ້ນສັນຍາຂອງບັນດາຮອງເຈົ້າແຂວງ, ຄໍາໝັ້ນສັນຍາຂອງບັນດາຄູ່ຮ່ວມພັດທະນາ, ຄໍາໝັ້ນສັນຍາຂອງບັນດາອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ ແລະ ບັນດາອົງການຈັດຕັ້ງທາງສັງຄົມ, ລວມທັງຄໍາໝັ້ນສັນຍາຂອງພາກເອກະຊົນ.

- ເດັກ ແລະ ຊາວໜຸ່ມ ໄດ້ແລກປ່ຽນວິໄສທັດ 2030 ຂອງເຂົາເຈົ້າ ກ່ຽວກັບວັນເດັກສາກົນ ຢູ່ໃນພິທີສະເຫຼີມສະຫຼອງ ທີ່ຈັດຂຶ້ນໂດຍຄະນະກໍາມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ໃນປີ 2019 ເພື່ອເປັນຂີດໝາຍແຫ່ງການສະເຫຼີມສະຫຼອງຄົບຮອບ 30 ປີ ຂອງສົນທິສັນຍາສາກົນວ່າດ້ວຍສິດທິເດັກ, ຊຶ່ງເປັນສົນທິສັນຍາດ້ານສິດທິມະນຸດທີ່ມີການໃຫ້ສັດຕະຍາບັນຫຼາຍທີ່ສຸດໃນໂລກ.
- ຕົວແທນຂອງຄົນໜຸ່ມຈາກບັນດາແຂວງພາກກາງ ໄດ້ມາເຕົ້າໂຮມກັນຢູ່ນະຄອນຫຼວງວຽງຈັນ ແລະ ໄດ້ນໍາສະ ເໜີຜົນການສົນທະນາປຶກສາຫາລືຂອງເດັກ ແລະ ໄວໜຸ່ມທີ່ໄດ້ຈັດຂຶ້ນຢູ່ໃນຂອບເຂດທົ່ວປະເທດ ຕໍ່ທ່ານ ສອນໄຊ ສີພັນດອນ, ຮອງນາຍົກລັດຖະມົນຕີ, ທັງເປັນປະທານຄະນະກໍາມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ, ທ່ານ ດຣ. ນາງ ອິນລາວັນ ແກ້ວບຸນພັນ ແລະ ບັນດາຄູ່ຮ່ວມພັດທະນາ.
- ຕົວແທນເດັກ ໄດ້ຂຶ້ນເທິງເວທີ ເພື່ອຍົກໃຫ້ເຫັນເຖິງຄວາມຄືບໜ້າໃນດ້ານຄວາມເປັນຢູ່ທີ່ດີຂອງເດັກຕະຫຼອດໄລຍະ 2-3 ປີທີ່ຜ່ານມາ, ບັນດາສິ່ງທ້າທາຍຕົ້ນຕໍທີ່ເຂົາເຈົ້າປະເຊີນ ພ້ອມທັງສະເໜີວິທີແກ້ໄຂເພື່ອປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າໃຫ້ດີຂຶ້ນກວ່າເກົ່າ.
- ນາງ ອະນັດດາ ປັນຍາວັດທະນະສິນ, ອາຍຸ 15 ປີ ໄດ້ກ່າວວ່າ: ຂ້າພະເຈົ້າຢາກໃຫ້ເດັກທຸກຄົນເຂົ້າເຖິງການສຶກສາທີ່ມີຄຸນນະພາບ ແລະ ໄດ້ຮັບການຊຸກຍູ້ສົ່ງເສີມໃຫ້ຮຽນ. ໃນປີ 2030, ຂ້າພະເຈົ້າຢາກໃຫ້ ສປປ ລາວ ຖອດຖອນບົດຮຽນຈາກປະເທດອື່ນ ທີ່ເດັກໄດ້ຮັບເຄື່ອງແບບ/ຊຸດນັກຮຽນ, ອຸປະກອນການຮຽນ ແລະ ເຂົ້າເຖິງເຕັກໂນໂລຊີໃນສໍາລັບການຮຽນໃນແຕ່ລະມື້ ໂດຍບໍ່ໄດ້ເສຍຄ່າ.
- ໜຶ່ງໃນຄວາມມຸ່ງມາດປາຖະໜາຂອງເດັກ ແຕ່ນີ້ຮອດປີ 2030 ແມ່ນຢາກເຫັນປະເທດສີຂຽວທີ່ເຕັມໄປດ້ວຍຕົ້ນໄມ້ຫຼາຍຂຶ້ນ, ມີສວນສາທາລະນະຫຼາຍແຫ່ງ ແລະ ສິ່ງສໍາຄັນແມ່ນການຫລຸດຜ່ອນການໃຊ້ຖົງຢາງປຼາສຕິກ. ເຂົາເຈົ້າຍັງໄດ້ກ່າວເຖິງຄວາມສໍາຄັນຂອງສຸຂະພາບ ແລະ ໂພຊະນາການ.
- ຂໍ້ມູນກ່ຽວກັບບັນດາກົດໝາຍທີ່ກ່ຽວຂ້ອງກັບເດັກ ໄດ້ຮັບການເຜີຍແຜ່ຜ່ານທາງວິທະຍຸຂອງແຂວງ ເປັນພາສາລາວ (ພາສາກາງ) ຈໍານວນ 6.596 ຄັ້ງ, ພາສາມົ້ງ 66 ຄັ້ງ, ພາສາກຶມມຸ 66 ຄັ້ງ; ກະຈາຍສຽງຜ່ານໂທລະໂຄ່ງສາທາລະນະຂອງແຂວງ 7.382 ຄັ້ງ, ຜ່ານໂທລະພາບ 405 ຄັ້ງ; ຜ່ານການບອກກ່າວ/ປາໄສເພື່ອປູກຈິດສໍານຶກຢູ່ບ້ານຕ່າງໆ 15.333 ຄັ້ງ, ຢູ່ກຸ່ມບ້ານ 1.784 ຄັ້ງ, ຢູ່ສະຖານທີ່ອື່ນໆ 1.542 ຄັ້ງ, ແລະ ຢູ່ບັນດາໂຮງຮຽນ 2.740 ຄັ້ງ, ກວມເອົາທັງໝົດ 4.431.797 ຄົນ (ຍິງ 1.206.040 ຄົນ).
- ເດັກຍັງໄດ້ເນັ້ນໜັກເຖິງຄວາມຈໍາເປັນໃນການສົ່ງເສີມການສຶກສາຂອງຜູ້ປົກຄອງ ແລະ ສະເໜີໃຫ້ຜູ້ວາງນະໂຍບາຍ ເພີ່ມທະວີຄວາມພະຍາຍາມໃນການແກ້ໄຂບັນຫາການໃຊ້ຄວາມຮຸນແຮງຕໍ່ເດັກ, ລວມທັງການຈັດຕັ້ງປະຕິບັດຂະບວນການຕ່າງໆເພື່ອຢຸດຕິການຂົ່ມເຫັງ/ສຽດສີ ຢູ່ໃນໂຮງຮຽນ.
- ທ້າວ ສະເຫຼີມໄຊ ສີວົງສາ, ອາຍຸ 15 ປີ ໄດ້ກ່າວວ່າ: ຂ້າພະເຈົ້າຢາກໃຫ້ມີບຸກຄະລາກອນທັງປະລິມານ ແລະ ຄຸນນະພາບຫຼາຍຂຶ້ນ ພ້ອມທັງມີອຸປະກອນ ແລະ ເຕັກໂນໂລຊີທີ່ດີກວ່ານີ້ຢູ່ສະຖານຂະພາບ ຫຼື ສຸກສາລາຕ່າງໆ, ພ້ອມທັງກ່າວຕື່ມວ່າການຮັບປະກັນການເຂົ້າເຖິງການບໍລິການສຸຂະພາບທີ່ມີຄຸນນະພາບ ສໍາລັບເດັກຢູ່ຊົນນະບົດ ແມ່ນເປັນສິ່ງທີ່ສໍາຄັນ ເນື່ອງຈາກເຂົາເຈົ້າຕ້ອງການໂອກາດທີ່ເທົ່າທຽມກັນໃນການເຕີບໃຫຍ່ຢ່າງມີສຸຂະພາບແຂງແຮງ.
- ພິທີດັ່ງກ່າວໄດ້ສ້າງໂອກາດໃຫ້ແກ່ການປູກຈິດສໍານຶກ ແລະ ແຈກໃບປີວຫຼາຍພັນໃບກ່ຽວກັບໄພອັນຕະລາຍຂອງການແຕ່ງງານໃນໄວເດັກ, ການຖືພາໃນໄວເດັກ ແລະ ຜົນກະທົບຂອງການຄ້າມະນຸດຕໍ່ປະເທດຊາດ.

# 3. ສະຫຼຸບ: ສິ່ງທ້າທາຍ ແລະ ບົດຮຽນທີ່ຖອດຖອນໄດ້

## 3.1. ຂໍ້ຈຳກັດ ແລະ ສິ່ງທ້າທາຍ

ເຖິງວ່າ ສປປ ລາວ ມີຜົນສຳເລັດອັນໃຫຍ່ຫຼວງໃນດ້ານການປົກປ້ອງສິດ ແລະ ການພັດທະນາເດັກ, ແຕ່ກໍ່ຍັງມີຫຼາຍບັນຫາທີ່ຍັງບໍ່ທັນໄດ້ຮັບການແກ້ໄຂ ເປັນຕົ້ນແມ່ນ ຄວາມທຸກຍາກຂອງເດັກ, ການຈົດທະບຽນການເກີດ ໂດຍສະເພາະແມ່ນເດັກຢູ່ເຂດຊົນນະບົດຫ່າງໄກສອກຫຼີກ, ບັນຫາໂພຊະນາການ, ອັດຕາການເຂົ້າກຽມຄວາມພ້ອມກ່ອນໄວຮຽນ ແລະ ອັດຕາການຮຽນຈົບຊັ້ນມັດທະຍົມ ຍັງຢູ່ໃນລະດັບຕໍ່າ, ລວມທັງບັນຫາການລ່ວງລະເມີດທາງສື່ສັງຄົມອອນລາຍ. ການລົງທຶນໃສ່ການສົ່ງເສີມ ແລະ ປົກປ້ອງສິດທິເດັກທີ່ເປັນລະບົບຄົບຊຸດ ແລະ ຍືນຍົງ ກໍຍັງບໍ່ທັນພຽງພໍ ຊຶ່ງເປັນສາເຫດສຳຄັນທີ່ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຍັງບໍ່ທັນໄດ້ດີເທົ່າທີ່ຄວນ.

ຄວາມແຕກໂຕນທາງດ້ານການພັດທະນາເສດຖະກິດ-ສັງຄົມ ລະຫວ່າງກຸ່ມ ແລະ ເຂດທີ່ຕັ້ງພູມສັນຖານ ເປັນສິ່ງທ້າທາຍຕໍ່ການປັບປຸງຄວາມກິນດີຢູ່ດີຂອງເດັກ. ເດັກກຸ່ມທີ່ທຸກຍາກ ຫຼື ດ້ອຍໂອກາດໃນດ້ານໃດໜຶ່ງ ຍັງມີແນວໂນ້ມທີ່ຈະທຸກຍາກ ຫຼື ດ້ອຍໂອກາດໃນດ້ານອື່ນໆອີກ. ບັນດາຄອບຄົວທີ່ດຳລົງຊີວິດຢູ່ດ້ວຍຄວາມທຸກຍາກ ຫຼື ດ້ອຍໂອກາດໃນຫຼາຍໆລ້ວນແຕ່ຂາດສານອາຫານ, ຂາດນ້ຳສະອາດ, ຂາດສຸຂະອະນາໄມທີ່ພຽງພໍ, ຂາດການເຂົ້າເຖິງການຮັກສາສຸຂະພາບຂັ້ນພື້ນຖານ, ທີ່ພັກອາໄສ, ການສຶກສາ ແລະ ການປົກປ້ອງ. ຜົນກະທົບຕໍ່ເດັກໃນຄອບຄົວເຫຼົ່ານີ້ ແມ່ນຮ້າຍແຮງທີ່ສຸດຢ່າງປະຕິເສດບໍ່ໄດ້, ຊຶ່ງເປັນການບັ່ນທອນການພັດທະນາໃນອະນາຄົດຂອງຄົນລຸ້ນນີ້.

ຄວາມຈຳກັດໃນດ້ານຄວາມຮູ້, ຄວາມສາມາດ ແລະ ປະສົບການໃນການເຊື່ອມສານວຽກງານການປົກປ້ອງເດັກ ແລະ ການພັດທະນາເດັກ ເຂົ້າໃນການວາງແຜນຂອງຂະແໜງການ ແລະ ທ້ອງຖິ່ນ ແລະ ລະບົບງົບປະມານ ເປັນອຸປະສັກຕໍ່ການຮັບປະກັນວ່າຄວາມທຸກຍາກ ແລະ ຄວາມດ້ອຍໂອກາດໃນຫຼາຍໆດ້ານຈະໄດ້ຮັບການແກ້ໄຂນອກເໜືອຈາກການແກ້ໄຂໃນດ້ານໃດດ້ານໜຶ່ງ ດ້ວຍການຈັດສັນຊັບພະຍາກອນ, ການວາງແຜນ ແລະ ການກຳນົດເປົ້າໝາຍການແກ້ໄຂ ໂດຍມີການປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ບັນດາຄູ່ຮ່ວມພັດທະນາ.ຄວບຄູ່ກັບຄວາມຈຳກັດດ້ານງົບປະມານ ແລະ ການຂາດອຸປະກອນທີ່ຈຳເປັນສຳລັບການຈັດຕັ້ງປະຕິບັດວຽກງານເພື່ອເດັກ, ບາງຕົວຊີ້ວັດກ່ຽວກັບເດັກຈຶ່ງບໍ່ມີຄວາມຄືບໜ້າ ແລະ ຕົວຊີ້ວັດອື່ນໆກໍເຫັນວ່າມີທ່າອ່ຽງຖົດຖອຍ ຫຼື ມີບາດກ້າວຖອຍຫຼັງ.

ອັດຕາການປົກຄຸມຂອງການຊ່ວຍເຫຼືອ ແລະ ການຈັດຕັ້ງປະຕິບັດໂຄງການດ້ານສຸຂະພາບ ແລະ ໂພຊະນາການທີ່ຈຳເປັນກໍ່ຍັງຢູ່ໃນລະດັບຕໍ່າ, ໂດຍສະເພາະແມ່ນໃນກຸ່ມທີ່ບອບບາງ. ນະໂຍບາຍການບໍລິການຮັກສາສຸຂະພາບຂອງແມ່ ແລະ ເດັກໂດຍບໍ່ເສຍຄ່າ, ແລະ ກອງທຶນປະກັນສຸຂະພາບ ໄດ້ຊ່ວຍໃຫ້ຜູ້ທຸກຍາກເຂົ້າເຖິງການບໍລິການສຸຂະພາບຫຼາຍຂຶ້ນ ແຕ່ວ່າອັດຕາການປົກຄຸມຂອງໂຄງການປົກປ້ອງສຸຂະພາບນັ້ນ ເຫັນວ່າຍັງບໍ່ທັນພຽງພໍ ແລະ ທົ່ວເຖິງ. ສິ່ງທ້າທາຍດ້ານອື່ນໆ ແມ່ນລວມມີທັງ ບຸກຄະລາກອນດ້ານສາທາລະນະສຸກທີ່ບໍ່ໄດ້ຮັບການຝຶກອົບຢ່າງດີ, ຄຸນນະພາບຂອງການບໍລິການດ້ານສຸຂະພາບ, ຂາດຄວາມກ້າວໜ້າໃນລະບົບຕ່າງໆ ແລະ ນະໂຍບາຍໃນສະຖານທີ່ເຮັດວຽກ ເພື່ອສົ່ງເສີມການລ້ຽງລູກດ້ວຍນົມແມ່ ແລະ ການປະຕິບັດທີ່ເໝາະສົມໃນການເບິ່ງແຍງລ້ຽງດູເດັກ. ຕົວຢ່າງ ອັດຕາການປົກຄຸມຂອງການລ້ຽງລູກດ້ວຍນົມແມ່ຢ່າງດຽວ ແມ່ນກວມພຽງແຕ່ 45% ແລະ ມີພຽງແຕ່ 1/4 ຂອງເດັກອ່ອນ (ອາຍຸແຕ່ 6 - 23 ເດືອນ) ທີ່ລ້ຽງດ້ວຍອາຫານເສີມຕາມຫຼັກໂພຊະນາການຂັ້ນຕໍ່າສຸດ, ໃນຂະນະທີ່ເດັກຕໍ່າກວ່າເຄິ່ງໜຶ່ງ ແມ່ນລ້ຽງດ້ວຍອາຫານເສີມທີ່ພຽງພໍ່ ແລະ ຫຼາກຫຼາຍທາງດ້ານໂພຊະນາການ.

ຕ້ອງເລັ່ງປັບປຸງຄວາມຄືບໜ້າໃນການຮັບປະກັນສຸຂະອະນາໄມທີ່ດີ ແລະ ຄຸນນະພາບນ້ຳທີ່ພຽງພໍ. ໃນປີ 2018, ມີປະມານ 60% ຂອງໂຮງຮຽນທັງໝົດ ທີ່ມີນ້ຳປະປາຂັ້ນພື້ນຖານ ແລະ ສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ. ການຂາດນ້ຳສະອາດ ແລະ ສິ່ງອຳນວຍຄວາມສະດວກ/ພື້ນຖານໂຄງລ່າງດ້ານສຸຂະອະນາໄມ ແລະ ສຸຂາພິບານ (WASH) ໃນໂຮງຮຽນ ສົ່ງຜົນກະທົບດ້ານລົບຕໍ່ເດັກຍິງ, ໂດຍສະເພາະແມ່ນຊ່ວງທີ່ເປັນປະຈຳເດືອນ.

ລັດຖະບານ ສປປ ລາວ ສືບຕໍ່ສະໜອງການບໍລິການນ້ຳດື່ມ ແລະ ສຸຂະອະນາໄມ ແລະ ສຸຂາພິບານຂັ້ນພື້ນຖານໃຫ້ທົ່ວເຖິງ, ແຕ່ກໍ່ເຫັນວ່າຍັງປະເຊີນກັບຫຼາຍສິ່ງທ້າທາຍ. ໜຶ່ງໃນບັນດາສິ່ງທ້າທາຍເຫຼົ່ານີ້ ກໍ່ຄື ຊ່ອງຫວ່າງຂອງຂໍ້ມູນໃນການປ່ຽນຈາກການພື້ນຖານໂຄງລ່າງສະໜອງນ້ຳສະອາດ, ສຸຂະອະນາໄມ ແລະ ສຸຂາພິບານຂັ້ນພື້ນຖານ (WASH) ມາເປັນການບໍລິການ/ສະໜອງທີ່ມີການຄຸ້ມຄອງຢ່າງປອດໄພໃຫ້ສອດຄ່ອງກັບຄວາມມຸ່ງມາດປາຖະໜາ ແລະ ບັນດາເປົ້າໝາຍຍ່ອຍຂອງເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 6, ການທີ່ສະຖາບັນຕ່າງໆຂອງລັດ ຂາດຂໍ້ມູນທົ່ວໄປກ່ຽວກັບພື້ນຖານໂຄງລ່າງນ້ຳສະອາດ, ສຸຂະອະ

ນາໄມ ແລະ ສຸຂາພິບານຂັ້ນພື້ນຖານ (WASH) ໃນໄລຍະຜ່ານມາ ແລະ ຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ ຖືເປັນບັນຫາທີ່ກ່ຽວຂ້ອງກັບການຈັດຫານໍ້າ. ເມື່ອເບິ່ງໃນດ້ານຄວາມອາດສາມາດ ແລະ ການສະໜອງງົບປະມານກໍ່ເຫັນວ່າ ວຽກງານນໍ້າສະອາດ, ຂະອະນາໄມ ແລະ ສຸຂາພິບານຂັ້ນພື້ນຖານ ປະເຊີນກັບສິ່ງທ້າທາຍອັນໜັກໜ່ວງ ທັງຢູ່ໃນເຂດຕົວເມືອງ ແລະ ຊົນນະບົດ. ສໍາລັບການບໍລິການດັ່ງກ່າວຢູ່ເຂດຕົວເມືອງ, ການປະຕິຮູບລະບົບພາສີ-ອາກອນ ຕ້ອງໃຫ້ຄວບຄູ່ ຫຼື ສອດຄ່ອງກັບກົນໄກການປົກປ້ອງຜູ້ທຸກຍາກ. ການບໍລິຫານ, ການຄຸ້ມຄອງ, ການສ້ອມແປງ ແລະ ບູລະນະລະບົບນໍ້າປະປາ ກໍ່ເຫັນວ່າຍັງບໍ່ທັນມີປະສິດທິຜົນເທົ່າທີ່ຄວນ.

ຢູ່ໃນຂະແໜງສຶກສາ, ຜົນການປະເມີນໄດ້ສະແດງໃຫ້ເຫັນວ່າ ຄວາມສາມາດໃນການອ່ອນອອກຂຽນໄດ້ ແລະ ທັກສະໃນການຄິດໄລ່ຂອງເດັກຊັ້ນປະຖົມປີທີ 3 ແລະ ປີທີ 5 ແມ່ນຍັງບໍ່ທັນພຽງພໍສໍາລັບການຮຽນທີ່ມີຄຸນນະພາບໃນຂັ້ນທີ່ສູງກວ່າ. ບັນດາຄາດໝາຍຜົນໄດ້ຮັບດ້ານທັກສະ ແລະ ການຮຽນຮູ້ທີ່ຈໍາເປັນໃນລະບົບໂຮງຮຽນ ກໍ່ເຫັນວ່າຍັງບໍ່ທັນສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງຕະຫຼາດແຮງງານໃນປະຈຸບັນ. ອັດຕາການຮູ້ໜັງສືຂອງໄວໜຸ່ມ ກໍເຫັນວ່າຍັງຢູ່ໃນລະດັບຕໍ່າ (85% ສໍາລັບເພດຊາຍ ແລະ 77% ສໍາລັບເພດຍິງ ທີ່ມີອາຍຸລະຫວ່າງ 15-24 ປີ). ເດັກຈໍານວນຫຼາຍບໍ່ສືບຕໍ່ເຂົ້າຮຽນໃນຊັ້ນມັດທະຍົມ, ສະນັ້ນ ຈຶ່ງເປັນສາເຫດເຮັດໃຫ້ເຂົາເຈົ້າເຫຼົ່ານີ້ບໍ່ຮູ້ໜັງສື. ໃນດ້ານຄວາມສະເໝີພາບ ກໍເຫັນວ່າຍັງເປັນບັນຫາຕົ້ນຕໍຢູ່ໃນຂະແໜງສຶກສາ ແລະ ສິ່ງຜົນກະທົບຕໍ່ຄວາມສາມາດຈື່ຈໍາ ແລະ ການຮຽນຈົບຊັ້ນ. ມາຮອດປະຈຸບັນນີ້ ກໍ່ຍັງບໍ່ທັນມີການລົງທຶນທີ່ເປັນຮູບປະທໍາເຂົ້າໃສ່ການພັດທະນາເດັກ.

ການລ່ວງລະເມີດທາງດ້ານຮ່າງກາຍ ແລະ ລ່ວງລະເມີດທາງເພດຕໍ່ເດັກ ຍັງເປັນບັນຫາສໍາຄັນທີ່ຈະຕ້ອງໄດ້ຮັບການແກ້ໄຂ. ມີ 13% ຂອງນັກຮຽນຊັ້ນມັດທະຍົມ ໄດ້ລາຍງານກ່ຽວກັບບັນຫາການຂົ່ມເຫັງ ແລະ ສຽດສີໃນໂຮງຮຽນ. ການສໍາຫຼວດກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ເດັກ ຊີ້ໃຫ້ເຫັນວ່າ 15% ຂອງແມ່ຍິງ ແລະ 16,9% ຂອງຜູ້ຊາຍຈາກຄົວເຮືອນທັງໝົດ ເຄີຍຖືກທໍາຮ້າຍຮ່າງກາຍຕັ້ງແຕ່ອາຍຸກ່ອນ 18 ປີ, ແລະ ມີ 1 ໃນ 10 ຄົນແມ່ນເຄີຍຖືກລ່ວງລະເມີດທາງເພດ. ມີເດັກຍິງພຽງແຕ່ 5,2% ເທົ່ານັ້ນທີ່ຮູ້ວ່າຈະຕ້ອງໄປຂໍຄວາມຊ່ວຍເຫຼືອຢູ່ໃສຖ້າຫາກຖືກລ່ວງລະເມີດທາງເພດ.



ເຖິງແມ່ນວ່າການໃຊ້ແຮງງານເດັກເປັນສິ່ງທີ່ຜິດກົດໝາຍກໍ່ຕາມ, ແຕ່ກໍ່ຍັງມີເດັກຈໍານວນໜຶ່ງແມ່ນຕົກຢູ່ໃນສະພາບການໃຊ້ແຮງງານເດັກ, ແລະ ມີ 28% ຂອງເດັກທີ່ມີອາຍຸລະຫວ່າງ 5 - 17 ປີ ເຮັດວຽກຢູ່ໃນເງື່ອນໄຂສະພາບແວດລ້ອມທີ່ເປັນອັນຕະລາຍຕໍ່ສຸຂະພາບ ແລະ ຄວາມກິນດີຢູ່ດີຂອງເຂົາເຈົ້າ. ສອງສ່ວນສາມຂອງເດັກທີ່ເປັນແຮງງານນີ້ ແມ່ນເຮັດວຽກໃນຄອບຄົວໂດຍບໍ່ໄດ້ຮັບຄ່າຈ້າງຕອບແທນ.

ອໍານາດການປົກຄອງທ້ອງຖິ່ນຕ່າງໆ ລວມທັງ ພໍ່ແມ່/ຜູ້ປົກຄອງ ຍັງບໍ່ທັນຮັບຮູ້ ແລະ ຍຶດຖືສະຕິກ່ຽວກັບສິດທິເດັກ ຢ່າງແຜ່ຫຼາຍເທື່ອ. ສປປ ລາວ ຍັງຂາດຖານຂໍ້ມູນກ່ຽວກັບເດັກທີ່ໜ້າເຊື່ອຖື ແລະ ຄົບຖ້ວນ ແລະ ການສຶກສາຄົ້ນຄວ້າກ່ຽວກັບແມ່ ແລະ ເດັກ ກໍເຫັນຍັງຈໍາກັດ, ເປັນຕົ້ນແມ່ນ ການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍສິດທິເດັກ, ການໃຊ້ຄວາມຮຸນແຮງຕໍ່ເດັກ, ການໃຊ້ແຮງງານເດັກ, ການຂາຍເດັກ ແລະ ການຂູດຮີດ ເອົາລັດເອົາປຽບທາງເພດ, ຄວາມຍຸຕິທໍາຂອງເດັກ ແລະ ເຍົາວະຊົນ ແລະ ເດັກພິການ. ຍັງມີຊ່ອງຫວ່າງໃນການປະສານສົມທົບ, ການຕິດຕາມ ແລະ ການລາຍງານກ່ຽວກັບການຈັດຕັ້ງປະຕິບັດສິດທິເດັກ, ລວມທັງການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍສິດທິເດັກທີ່ເປັນລະບົບ.

## 3.2. ບົດຮຽນທີ່ຖອດຖອນໄດ້

ຄະນະກໍາມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ມີບົດບາດສໍາຄັນໃນນາມເປັນກອງເລຂາ ແລະ ການປະສານງານເພື່ອການທົບທວນ ແລະ ວິເຄາະ ຄວາມຄືບໜ້າຂອງບັນດາຂະແໜງການ ແລະ ອົງການຕ່າງໆທີ່ເຮັດວຽກເພື່ອເດັກ. ຜ່ານການຈັດຕັ້ງແຜນດໍາເນີນງານແຫ່ງຊາດ ວຽກງານແມ່ແລະເດັກ ສາມາດຖອດຖອນບົດຮຽນໄດ້ບາງດ້ານຄືດັ່ງລຸ່ມນີ້:

- ສປປ ລາວ ຈໍາເປັນຕ້ອງມີລະບົບທີ່ເຂັ້ມແຂງ ແລະ ຄົບຖ້ວນເຊື່ອມໂຍງ ເພື່ອຊ່ວຍເຫຼືອເດັກທີ່ຕົກຢູ່ໃນຄວາມສ່ຽງໃນດ້ານຕ່າງໆ. ການຕອບສະໜອງດ້ານສະຫວັດດີການ ແລະ ການປົກປ້ອງ ແມ່ນມີຈໍາກັດ ຍ້ອນຄວາມບໍ່ພຽງພໍດ້ານຊັບພະຍາກອນການເງິນ ແລະ ຊັບພະຍາກອນມະນຸດ, ທັງກະແຈກກະຈາຍ ແລະ ບໍ່ພຽງພໍ. ຊຶ່ງສາເຫດແມ່ນຍ້ອນມີຊ່ອງຫວ່າງລະຫວ່າງໂຄງສ້າງຂອງການຈັດຕັ້ງທີ່ໄດ້ຮັບມອບໝາຍຢ່າງເປັນທາງການ ແລະ ການຈັດຕັ້ງປະຕິບັດຕົວຈິງໃນການສະໜອງສະຫວັດດີການ ແລະ ປົກປ້ອງຢູ່ຂັ້ນຊຸມຊົນທ້ອງຖິ່ນ.
- ເຖິງວ່າໄດ້ມີການປັບປຸງແລ້ວກໍ່ຕາມ, ແຕ່ກໍ່ຍັງມີຫຼາຍດ້ານທີ່ຕ້ອງໄດ້ເອົາໃຈໃສ່ ເພື່ອປັບປຸງຄຸນນະພາບ ແລະ ຜົນໄດ້ຮັບດ້ານການສຶກສາ. ຕ້ອງເລັ່ງປະຕິຮູບຫຼັກສູດການຮຽນ-ການສອນ ແລະ ການສຶກສາຂອງຄູ ເພື່ອປັບປຸງຜົນໄດ້ຮັບດ້ານການສຶກສາ, ຄູອາຈານທີ່ມີຄຸນວຸດທິຫຼາຍຂຶ້ນ ໃນທຸກລະດັບການສຶກສາ, ລວມທັງການສຶກສາກ່ອນໄວຮຽນ, ແລະ ການດູນດ່ຽງຄູກໍ່ຕ້ອງໃຫ້ມີຄວາມເປັນທໍາ ເໝາະສົມກວ່າເກົ່າ.
- ລັດຖະບານຕ້ອງໃຫ້ຄວາມສໍາຄັນຕໍ່ບັນຫາການປັບປ່ຽນພຶດຕິກໍາ ເປັນຕົ້ນແມ່ນການມີເພດສໍາພັນກ່ອນໄວອັນຄວນ, ການແຕ່ງດອງກ່ອນໄວອັນຄວນ ແລະ ການຖືພາໃນໄວເດັກ, ໂດຍສະເພາະແມ່ນບາງກຸ່ມຊົນເຜົ່າ.
- ລັດຖະບານຈະສືບຕໍ່ເອົາໃຈໃສ່ໃນການປູກຈິດສໍານຶກກ່ຽວກັບສິດທິເດັກຢ່າງກວ້າງຂວາງ ແລະ ເລິກເຊິ່ງ, ເພື່ອເຮັດໃຫ້ອົງການຈັດຕັ້ງຕ່າງໆ ແລະ ມວນຊົນທົ່ວໄປມີຄວາມສໍານຶກ ແລະ ເຂົ້າໃຈຫຼາຍຂຶ້ນກ່ຽວລວມທັງສິດທິເດັກ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.
- ເພີ່ມຄວາມຫຼາກຫຼາຍຂອງອຸປະກອນ ຫຼື ເຄື່ອງມືການສື່ສານຕ່າງໆ ແລະ ຕ້ອງປັບໃຫ້ແທດເໝາະກັບສະພາບຈຸດພິເສດຂອງຄົນແຕ່ລະກຸ່ມຫຼາຍຂຶ້ນ ເພື່ອໃຫ້ເຂົ້າເຖິງທຸກກຸ່ມຄົນ.
- ການມີສ່ວນຮ່ວມຢ່າງຫ້າວຫັນຂອງຄະນະກໍາມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ແລະ ຄະນະກໍາມະການຂັ້ນຂະແໜງການ ແລະ ທ້ອງຖິ່ນເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ໃນຂະບວນການວາງແຜນຂອງບັນດາກະຊວງ, ບັນດາຂະແໜງການ ແລະ ບັນດາແຂວງ ເພື່ອຮັບປະກັນວ່າລັດຖະບານໄດ້ເຊື່ອມສານແຜນດໍາເນີນງານລະດັບຊາດ ເຂົ້າໃນທຸກໆແຜນວຽກຂອງທຸກຂະ ແໜງການ ແລະ ແຂວງ ໄປພ້ອມໆກັບການວາງແຜນເງິນ ແລະ ແຜນຄົນ.
- ສ້າງຄວາມເຂັ້ມແຂງໃຫ້ໂຄງຮ່າງການຈັດຕັ້ງ ແລະ ການຄຸ້ມຄອງຂອງຄະນະກໍາມະການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ແມ່ນຄວາມຮຽກຮ້ອງຕ້ອງການທີ່ຈໍາເປັນຢູ່ແຕ່ລະຂັ້ນ ເພື່ອໃຫ້ສາມາດເຮັດວຽກຮ່ວມກັນລະຫວ່າງຂະແໜງການ ແລະ ແຂວງ /ເມືອງ ແລະ ເພື່ອະດວກໃນການຈັດປະຊຸມທີ່ສໍາຄັນຕ່າງໆ ແລະ ຂະບວນການດໍາເນີນງານຂອງເຂົາເຈົ້າ.

# ພາກທີ II

## ແຜນດຳເນີນງານແຫ່ງຊາດ ເພື່ອແມ່ແລະເດັກ 5 ປີ ຄັ້ງທີ (2021-2025)

### 1. ເງື່ອນໄຂສະພາບແວດລ້ອມໃນການຈັດຕັ້ງປະຕິບັດ: ໂອກາດ ແລະ ສິ່ງທ້າທາຍ.

#### 1.1. ສະພາບແວດລ້ອມພາກພື້ນ ແລະ ສາກົນ

ການຈັດຕັ້ງປະຕິບັດແຜນດຳເນີນງານແຫ່ງຊາດ ເພື່ອແມ່ແລະເດັກ ຈະດຳເນີນໄປຕາມສັດຕະຍາບັນ ຫຼື ຄວາມໝາຍໝັ້ນທີ່ ສປປ ລາວໄດ້ໃຫ້ໄວ້ຕໍ່ສາກົນ, ເພື່ອເປັນການຈັດຕັ້ງປະຕິບັດ ສົນທິສັນຍາວ່າດ້ວຍສິດທິເດັກ, ການສົ່ງເສີມ ແລະ ປົກປ້ອງສິດ ແລະ ຫຼັກການທີ່ລະບຸໄວ້ໃນສົນທິສັນຍາ, ດຳເນີນການຕາມຂັ້ນຕອນທີ່ເປັນຮູບປະທຳ ເພື່ອການຈັດຕັ້ງປະຕິບັດທີ່ຄົບຖ້ວນສົມບູນ. ພ້ອມດຽວກັນນັ້ນ ການຈັດຕັ້ງປະຕິບັດແຜນດັ່ງກ່າວ ຈະຕ້ອງດຳເນີນໄປຕາມນະໂຍບາຍ, ກົດໝາຍ ແລະ ກອບງົບປະມານ ເພື່ອບັນລຸບັນດາເປົ້າໝາຍການພັດທະນາແບບຍືນຍົງ ທີ່ໄດ້ຜັນຂະຫຍາຍມາເປັນບັນດາເປົ້າໝາຍສະເພາະສຳລັບ ສປປ ລາວ. ຊຶ່ງທັງສອງກອບວຽກນີ້, ການຈັດຕັ້ງປະຕິບັດແຜນດຳເນີນງານແຫ່ງຊາດ ຈະພິຈາລະນາເຖິງຄວາມສຳຄັນຂອງການລວມເອົາທັດສະນະ ແລະ ຄຳຄິດເຫັນຕ່າງໆຂອງເດັກ ເຂົ້າໃນການສ້າງ ແລະ ປະເມີນຍຸດທະສາດ ແລະ ແຜນງານຕ່າງໆ ເພື່ອສົ່ງເສີມສິດທິຂອງເຂົາເຈົ້າ ທັງເປັນການຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການສະເພາະ ແລະ ການພັດທະນາຂອງເຂົາເຈົ້າ.

ແຜນດຳເນີນງານແຫ່ງຊາດສະບັບນີ້ຈະນຳໃຊ້ຫຼັກການຂອງສົນທິສັນຍາ ເຊັ່ນ ຫຼັກການບໍ່ຈຳແນກ, ຫຼັກການຜົນປະໂຫຍດອັນສູງສຸດຂອງເດັກ ເປັນພື້ນຖານໃນການພິຈາລະນາບັນຫາຕ່າງໆ ກ່ຽວກັບເດັກ, ສິດໃນການດຳລົງຊີວິດຢ່າງປອດໄພ ແລະ ໄດ້ຮັບການພັດທະນາຂອງເດັກ ແລະ ສິດໃນການປາກເວົ້າ, ສະແດງຄຳຄິດຄຳເຫັນ ທີ່ສອດຄ່ອງກັບບັນດາມາດຕາທີ່ກຳນົດໄວ້ໃນສົນທິສັນຍາ ວ່າດ້ວຍສິດທິເດັກ.

ແຜນດຳເນີນງານແຫ່ງຊາດ ຈະສົ່ງເສີມນະໂຍບາຍຕ່າງໆທີ່ຖືເອົາເດັກເປັນໃຈກາງໃນທຸກຂະແໜງການທີ່ກ່ຽວຂ້ອງ, ສົ່ງເສີມການຄຸ້ມຄອງ, ການຈັດສັນທີ່ດີ ແລະ ການລົງທຶນ ຫຼື ນຳໃຊ້ຊັບພະຍາກອນທີ່ຈຳເປັນເພື່ອສົ່ງເສີມສິດທິເດັກ, ພ້ອມທັງເພີ່ມທະວີການຮ່ວມມືຂອງທຸກຂະແໜງການ ລວມທັງການຮ່ວມມືຂອງສັງຄົມ. ແຜນດຳເນີນງານແຫ່ງຊາດ ຈະເນັ້ນໜັກຄວາມສຳຄັນໃນການມີສ່ວນຮ່ວມຂອງພາກລັດ ແລະ ການເຮັດວຽກຮ່ວມກັບເດັກ ແລະ ໄວໜຸ່ມຢ່າງໃກ້ຊິດ, ເພື່ອເປັນຕົວແທນຂອງການປ່ຽນແປງໄປໃນທາງບວກໃນການສົ່ງເສີມ, ປົກປ້ອງ ແລະ ຄຸ້ມຄອງສິດຂອງເຂົາເຈົ້າ, ສຳລັບເດັກລຸ້ນປະຈຸບັນ ແລະ ລຸ້ນຕໍ່ໆໄປ, ລວມທັງຂະບວນການໄກ່ເກ່ຍ ແລະ ຂະບວນການເພື່ອສັນຕິພາບ. ແຜນດຳເນີນງານແຫ່ງຊາດຈະຕັ້ງໜ້າບັນລຸຜົນສຳເລັດ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ເດັກ, ໂດຍສະເພາະແມ່ນເດັກທີ່ຕ້ອງການການປົກປ້ອງແບບພິເສດ, ລວມທັງເດັກທີ່ໄດ້ຮັບຜົນກະທົບ

ວິກິດການດ້ານມະນຸດສະທຳ ແລະ ເດັກຈາກຊຸມຊົນທີ່ດ້ອຍໂອກາດ ແລະ ບໍ່ນອນໃນເຂດເປົ້າໝາຍ ແລະ ເພື່ອໃຫ້ບັນລຸຜົນສຳເລັດດ້ານຄວາມສະເໝີພາບລະຫວ່າງຍິງ-ຊາຍ.

ແຜນດຳເນີນງານແຫ່ງຊາດ ຈະໃຫ້ຄວາມສຳຄັນແກ່ການສະໜັບສະໜູນ ແລະ ນະໂຍບາຍທີ່ອີງໃສ່ຫຼັກຖານສຳລັບເດັກດ້ວຍການສົ່ງເສີມ ການເກັບກຳ ແລະ ວິເຄາະຂໍ້ມູນຈາກຫຼາຍແຫຼ່ງ, ເປັນທຳ, ເຊື່ອຖືໄດ້, ທັນກັບເວລາ ແລະ ພຽງພໍທັງທາງດ້ານປະລິມານ ແລະ ຄຸນນະພາບ. ສະນັ້ນ ແຜນດຳເນີນງານແຫ່ງຊາດຄັ້ງນີ້ ຈະລົງທຶນເຂົ້າໃນການສ້າງລະບົບ ແລະ ເຄື່ອງມືໃນການຕິດຕາມຄວາມຄືບໜ້າ ແລະ ສະໜອງຂໍ້ມູນປຽບທຽບກ່ຽວກັບຄວາມເປັນຢູ່ທີ່ດີຂອງເດັກ.

## 1.2. ສະພາບແວດລ້ອມພາຍໃນປະເທດ

ໂດຍອີງໃສ່ຄວາມໝາຍໝັ້ນຂອງທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອການຈັດຕັ້ງປະຕິບັດວຽກງານສິດທິເດັກ, ສປປ ລາວ ຈະປົກປ້ອງ ແລະ ສົ່ງເສີມສິດທິເດັກ ໂດຍການມີສ່ວນຮ່ວມຂອງທຸກຂະແໜງການ ແລະ ທຸກພາກສ່ວນໃນສັງຄົມ. ເຊິ່ງຕ້ອງໄດ້ເອົາໃຈໃສ່ພິເສດ ຕໍ່ລະບົບການປົກປ້ອງທີ່ມີຄວາມຈຳກັດດ້ານການເງິນ, ດ້ານບຸກຄະລາກອນ ແລະ ດ້ານສະຖາບັນ ກໍຄືດ້ານນິຕິກຳ. ການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານຊ່ວຍເຫຼືອເດັກ ເພື່ອໃຫ້ສາມາດໃຫ້ການຊ່ວຍເຫຼືອ ແລະ ຟື້ນຟູເດັກທີ່ຖືກເຄາະຮ້າຍ. ພ້ອມກັນນີ້ ກໍຕ້ອງໄດ້ເພີ່ມນັກສັງຄົມສົງເຄາະ ທັງທາງດ້ານຈຳນວນ ແລະ ຄຸນນະພາບ ເພື່ອຊ່ວຍເຫຼືອ ແລະ ສົ່ງຕໍ່ເດັກທີ່ໄດ້ຮັບເຄາະຮ້າຍ. ນອກຈາກນີ້ ແຜນດຳເນີນງານແຫ່ງຊາດ ຍັງສົ່ງເສີມ ແລະ ສ້າງແຂວງຕົວແບບ ເພື່ອເປັນແບບຢ່າງທີ່ດີໃຫ້ແກ່ການຖອດຖອນບົດຮຽນ ແລະ ນຳໄປຈັດຕັ້ງຜັນຂະຫຍາຍໄປຍັງແຂວງຕ່າງໆໃນຂອບເຂດທົ່ວປະເທດ. ບັນດາແຂວງ ແລະ ນະຄອນຫຼວງ ໄດ້ໃຫ້ຄວາມໝາຍໝັ້ນໃນການກຳນົດຈຸດສຸມການຈັດຕັ້ງປະຕິບັດ ຜົນຂອງການວິເຄາະຄວາມທຸກຍາກທີ່ທັບຊ້ອນກັນຫຼາຍມິຕິ (MODA) ທີ່ອີງໃສ່ຂໍ້ມູນການສຳຫຼວດຄົວເຮືອນຈາກການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ II ແລະ ຄັ້ງທີ III (LSIS II ແລະ III). ບົດລາຍງານຜົນການວິເຄາະດັ່ງກ່າວ ໄດ້ຍົກໃຫ້ເຫັນສິ່ງທີ່ຄວນເອົາໃຈໃສ່ ກ່ຽວກັບຄວາມທຸກຍາກຂອງເດັກໃນຫຼາຍມິຕິ ແລະ ຄວາມຈຳເປັນໃນການເຮັດວຽກຮ່ວມກັນຂອງຫຼາຍຂະແໜງການ. ພິເສດກວ່າໝູ່ແມ່ນ, ໃນບົດລາຍງານດັ່ງກ່າວຍັງໄດ້ຮຽກຮ້ອງໃຫ້ມີການວາງແຜນ, ການຈັດຕັ້ງປະຕິບັດທີ່ດີກວ່າເກົ່າ ແລະ ການຕິດຕາມ ການລິເລີ່ມຕ່າງໆເພື່ອແກ້ໄຂບັນຫາຄວາມທຸກຍາກຂອງເດັກໃນຫຼາຍມິຕິ, ເພື່ອຊ່ວຍໃນການປັບປຸງບັນດາຜົນໄດ້ຮັບດ້ານໂພຊະນາການ, ໃຫ້ບູລິມະສິດໃນການພັດທະນາເດັກກ່ອນໄວຮຽນ, ປັບປຸງຄຸນນະພາບຂອງການສຶກສາຊັ້ນປະຖົມ ແລະ ມັດທະຍົມ, ພ້ອມທັງປັບປຸງການສະໜອງນ້ຳ, ສຸຂະອະນາໄມ ແລະ ສຸຂາພິບານ ໂດຍສຸມໃສ່ຊຸມຊົນທຸກຍາກ. ແຜນດຳເນີນງານແຫ່ງຊາດຄັ້ງນີ້ ຮຽກຮ້ອງໃຫ້ມີການລົງທຶນທີ່ເປັນຍຸດທະສາດເພື່ອການພັດທະນາເດັກ ແລະ ຄົນໜຸ່ມໃນລຸ້ນປະຈຸບັນ, ເພື່ອສ້າງທຶນມະນຸດທີ່ຈຳເປັນສຳລັບການຫລຸດພົ້ນອອກຈາກສະຖານະພາບການເປັນປະເທດດ້ອຍພັດທະນາ ແລະ ເພື່ອບັນລຸບັນດາເປົ້າໝາຍຂອງການພັດທະນາປະເທດຊາດ ແລະ ເປົ້າໝາຍການພັດທະນາແບບຍືນຍົງ.

# 2. ແຜນດຳເນີນງານແຫ່ງຊາດເພື່ອແມ່ ແລະ ເດັກ ຄັ້ງທີ III (2021-2025)

## 2.1. ຈຸດປະສົງລວມ

ເພື່ອພັດທະນາ ແມ່ແລະເດັກ ໃຫ້ມີສຸຂະພາບດີ, ແຂງແຮງທັງທາງດ້ານຮ່າງກາຍ ແລະ ຈິດໃຈ, ໃຫ້ມີຄວາມຮູ້ ແລະ ທັກສະເພື່ອການດຳລົງຊີວິດ, ເພື່ອຊຸກຍູ້ຄອບຄົວ ແລະ ສັງຄົມໃນການຄຳນຶງເຖິງສິດຂອງແມ່ ແລະ ເດັກໂດຍສຸມໃສ່ການປັບປຸງສະພາບຂອງເດັກ ແລະ ການຫລຸດຜ່ອນຄວາມທຸກຍາກ ແລະ ຄວາມດ້ອຍໂອກາດໃນຫຼາຍໆດ້ານຂອງເດັກ, ພ້ອມທັງຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດສູງສຸດຂອງເດັກ.

## 2.2. ທິດທາງ ແລະ ໜ້າທີ່ລວມ

1. ເພື່ອເສີມຂະຫຍາຍທ່າແຮງດ້ານສັງຄົມ, ດ້ານອາລົມ, ວັດທະນະທຳ ແລະ ທຶນມະນຸດຂອງເດັກ ແລະ ຊາວໜຸ່ມສຳລັບການພັດທະນາປະເທດຊາດຮອດປີ 2030.

2. ເພື່ອສ້າງຄວາມເຂັ້ມແຂງດ້ານການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ ເພື່ອຈັດຕັ້ງປະຕິບັດວຽກງານສິດທິເດັກຢູ່ ສປປ ລາວ ແລະ ເພື່ອຮັບປະກັນໃຫ້ບັນລຸຕາມເປົ້າໝາຍທີ່ວາງໄວ້.

## 2.3. ແຜນງານ

**ເພື່ອບັນລຸເປົ້າໝາຍລວມ, ແຜນດໍາເນີນງານແຫ່ງຊາດ ຈະສຸມໃສ່ໃນການຈັດຕັ້ງປະຕິບັດ 5 ແຜນງານຕົ້ນຕໍ ຄືດັ່ງນີ້:**

1) **ແຜນງານທີ 1:** ສົ່ງເສີມ, ປົກປ້ອງ ແລະ ສ້າງໂອກາດທີ່ເທົ່າທຽມກັນແກ່ເດັກ ແລະ ເສີມຂະຫຍາຍຄວາມເປັນຢູ່ທີ່ດີຂອງເດັກ.
2) **ແຜນງານທີ 2:** ການໂຄສະນາເຜີຍແຜ່, ປູກຈິດສໍານຶກ, ການສ້າງຖານຂໍ້ມູນ ແລະ ການສຶກສາຄົ້ນຄວ້າ.
3) **ແຜນງານທີ 3:** ທົບທວນນະໂຍບາຍ ແລະ ນິຕິກໍາ ແລະ ການຈັດຕັ້ງປະຕິບັດພັນທະຕໍ່ສາກົນ ແລະ ພາກພື້ນ.
4) **ແຜນງານທີ 4:** ສ້າງຄວາມເຂັ້ມແຂງໃຫ້ກົງຈັກການຈັດຕັ້ງ ແລະ ບຸກຄະລາກອນທີ່ເຮັດວຽກສິດທິເດັກ.
5) **ແຜນງານທີ 5:** ຫຼຸດຜ່ອນຈໍານວນເດັກທີ່ທຸກຍາກ ແລະ ດ້ອຍໂອກາດໃນຫຼາຍໆດ້ານ ຫຼື ເດັກທີ່ຢູ່ໃນຄົວເຮືອນທຸກຍາກຢູ່ ສປປ ລາວ.

*ໃນບັນດາ 5 ແຜນງານນີ້ ຈະປະກອບມີ 16 ແຜນວຽກຈຸດສຸມ.*

## 2.4. ແຜນວຽກຈຸດສຸມຂອງແຜນດໍາເນີນງານແຫ່ງຊາດ ເພື່ອແມ່ແລະເດັກ ຄັ້ງທີ III (2021-2025)

### 2.4.1 ແຜນງານທີ 1: ສົ່ງເສີມ, ປົກປ້ອງ ແລະ ສ້າງໂອກາດທີ່ເທົ່າທຽມກັນແກ່ເດັກ ແລະ ເສີມຂະຫຍາຍຄວາມເປັນຢູ່ທີ່ດີຂອງເດັກ

### 2.4.1.1 ແຜນວຽກຈຸດສຸມ 1.1: ການສົ່ງເສີມສິດໃນການຢູ່ລອດ

## ເປົ້າໝາຍ ແລະ ຕົວຊີ້ວັດ:

**ດ້ານໂພຊະນາການ:**

- ອັດຕາເດັກລຸ່ມ 5 ປີ ທີ່ນໍ້າໜັກຕໍ່າກວ່າມາດຕະຖານ ໃຫ້ຫລຸດລົງ ຍັງເຫຼືອ 12%.
- ອັດຕາເດັກລຸ່ມ 5 ປີ ທີ່ຮ່າງກາຍເຕີບໂຕຊ້າ ໃຫ້ຫລຸດລົງ ຍັງເຫຼືອ 25%.
- ອັດຕາການລ້ຽງລູກດ້ວຍນົມແມ່ພຽງຢ່າງດຽວສໍາລັບເດັກອາຍຸແຕ່ 0-6 ເດືອນ ໃຫ້ເພີ່ມຂຶ້ນເປັນ 60%.
- ອັດຕາການເປັນເລືອດຈາງ ເດັກຕໍ່າກວ່າ 5 ປີ ໃຫ້ຫຼຸດລົງເຫຼືອ 20%
- ອັດຕາເດັກຍິງ ອາຍຸລະຫວ່າງ 15-19 ປີ ທີ່ເປັນພະຍາດເລືອດຈາງ ໃຫ້ຫລຸດລົງ ຍັງເຫຼືອ 15%.

**ດ້ານສຸຂະພາບ:**

- ອັດຕາການເກີດລູກໂດຍມີແພດຜູ້ຊໍານານຊ່ວຍເກີດ ໃຫ້ກວມ 85%.
- ອັດຕາການໄດ້ຮັບການສັກຢາກັນພະຍາດຄົບກ່ອນອາຍຸຮອດ 1 ປີ ໃຫ້ກວມ 95%.

- ອັດຕາການຕາຍຂອງເດັກກຸ່ມ 1 ປີ ໃຫ້ຫລຸດລົງ ຍັງເຫຼືອ 20 ຕໍ່ ເດັກເກີດມີຊີວິດ 1,000 ຄົນ.
- ອັດຕາການຕາຍຂອງເດັກກຸ່ມ 5 ປີ ໃຫ້ຫລຸດລົງ ຍັງເຫຼືອ 30 ຕໍ່ເດັກເກີດມີຊີວິດ 1,000 ຄົນ.
- ອັດຕາການຕາຍຂອງແມ່ ໃຫ້ຫລຸດລົງ ຍັງເຫຼືອ 100/100,000.
- ອັດຕາການເຂົ້າເຖິງສຸຂາພິບານ ໃຫ້ບັນລຸ 85%.
- ສູ້ຊົນສ້າງບ້ານແບບຢ່າງສາທາລະນະສຸກ ໃຫ້ກວມເອົາ 85% ຂອງບ້ານທັງໝົດໃນທົ່ວປະເທດ.
- ອັດຕາສ່ວນຂອງສະຖານບໍລິການສຸຂະພາບ ຈະເລີນພັນຂອງໄວໜຸ່ມ ໃຫ້ບັນລຸໄດ້ 45%.
- ອັດຕາການມີລູກຂອງເດັກຍິງອາຍຸຕໍ່າກວ່າ 18 ປີ ໃຫ້ຫລຸດລົງ ຍັງເຫຼືອ 65%.
- ອັດຕາການເກີດລູກຂອງໄວໜຸ່ມ ໃຫ້ຫລຸດລົງ ຍັງເຫຼືອ 32 ຄັ້ງ ຕໍ່ເດັກຍິງ (15-18 ປີ) 1,000 ຄົນ.
- ອັດຕາການຝາກທ້ອງຂອງແມ່ຍິງຖືພາ ຢ່າງໜ້ອຍ 4 ຄັ້ງກ່ອນເກີດ ໃຫ້ບັນລຸໄດ້ 80%.
- ອັດຕາການຄຸມກຳເນີດດ້ວຍວິທີທັນສະໄໝ (ອາຍຸລະຫວ່າງ 15-49 ປີ) ໃຫ້ເພີ່ມຂຶ້ນເປັນ 70%.
- ອັດຕາການຄຸມກຳເນີດດ້ວຍວິທີທັນສະໄໝຂອງຄູ່ຜົວເມຍທີ່ແຕ່ງດອງແລ້ວ (ອາຍຸລະຫວ່າງ 15-19 ປີ) ໃຫ້ເພີ່ມຂຶ້ນເປັນ 45%.
- ອັດຕາການຄຸມກຳເນີດແບບທັນສະໄໝໃນກຸ່ມອາຍຸ 15-24 ປີ ໃຫ້ເພີ່ມຂຶ້ນ 35%.
- ກຸ່ມແມ່ຍິງອາຍຸລະຫວ່າງ 15-19 ປີ ທີ່ມີຄວາມຕ້ອງການໃນການວາງແຜນຄອບຄົວແຕ່ບໍ່ໃຊ້ບໍລິການ ວິທີທັນສະໄໝ ໃຫ້ຫລຸດລົງ ຍັງເຫຼືອ 15%.
- ເພີ່ມອັດຕາການປົກຄຸມຂອງການປະກັນສຸຂະພາບສຳລັບແມ່ ແລະ ເດັກ ໃຫ້ບັນລຸໄດ້ 96%.
- ຈຳນວນແມ່ຍິງຖືພາ ແລະ ເດັກໃນຊ່ວງໄລຍະ 1.000 ມື້ທຳອິດ ທີ່ສາມາດເຂົ້າເຖິງສິດຜົນປະໂຫຍດສຳລັບເດັກ ໃຫ້ບັນລຸໄດ້ 1.400 ຄົນ.
  ສະໜອງຄູ່ມືການຮັກສາສຸຂະພາບແບບລະອຽດຄົບຖ້ວນ ເພື່ອໃຫ້ແມ່ສາມາດປ້ອງກັນຕົນເອງ ແລະ ປົກປ້ອງລູກຈາກພະຍາດອັກເສບປອດ COVID-19 ແລະ ການປັບຕົວໃຫ້ເຂົ້າກັບເງື່ອນໄຂສະພາບແວດລ້ອມໃໝ່ຍ້ອນການແຜ່ລະບາດຂອງພະຍາດດັ່ງກ່າວ.
- ສະໜອງເອກະສານກ່ຽວກັບຂໍ້ມູນ, ໃຫ້ຄວາມຮູ້ ແລະ ວິທີປະຕິບັດໃນການຕິດຕໍ່ພົວພັນແບບໃໝ່ເພື່ອປ້ອງກັນຕົນເອງຈາກພະຍາດ COVID-19 ໂດຍມີຈຸດປະສົງເພື່ອໃຫ້ຄຳແນະນຳ ແລະ ວິທີການປັບຕົວໃຫ້ເຂົ້າກັບແບບແຜນ/ວິຖີການດຳລົງຊີວິດແບບໃໝ່ ໂດຍຜ່ານການອອກອາກາດທາງວິທະຍຸ, ໂທລະພາບ, ວາລະສານ, ໂປສເຕີ້, ແຜ່ນພັບ ແລະ ເຟສບຸກ ຈາກສູນສື່ສານເພື່ອສຸຂະພາບ ແລະ ສຸຂະສຶກສາ ລວມໄປເຖິງໂທລະໂຄ່ງສາທາລະນະ.

## ດ້ານນ້ຳສະອາດ:

- ອັດຕາການເຂົ້າເຖິງນ້ຳສະອາດຂັ້ນພື້ນຖານ ໃຫ້ບັນລຸ 95%.
- ອັດຕາການຊົມໃຊ້ນ້ຳດື່ມບໍລິສຸດ ໃຫ້ບັນລຸ 95%.

## ດ້ານສຸຂະອະນາໄມ:

- ອັດຕາສ່ວນຂອງຄົວເຮືອນທີ່ມີອຸປະກອນການລ້າງມື ເຊັ່ນ ກ໊ອກ, ອ່າງລ້າງມື ພ້ອມທັງນ້ຳ ແລະ ສະບູໃຫ້ບັນລຸ 80%
- ອັດຕາສ່ວນໂຮງຮຽນ ແລະ ສະຖານບໍລິການສຸຂະພາບ ທີ່ມີອຸປະກອນ ກອັກ, ອ່າງລ້າງມື ພ້ອມທັງນ້ຳ ແລະ ສະບູໃຫ້ບັນລຸ 95%.
- ຄົວເຮືອນທີ່ນຳໃຊ້ສຸຂາພິບານຂັ້ນພື້ນຖານ ໃຫ້ກວມອັດຕາສ່ວນ ສູງກວ່າ 80%.

# ວຽກບຸລິມະສິດ:

**ດ້ານໂພຊະນາການ:**

- ປັບປຸງການບໍລິການປິ່ນປົວພະຍາດເລືອດຈາງ ສໍາລັບເດັກຍິງ ແລະ ໄວໜຸ່ມ.
- ສະໜັບສະໜູນງົບປະມານສໍາລັບເຂດທີ່ຄວາມບໍ່ໝັ້ນຄົງດ້ານສະບຽງອາຫານ ຫາກແກ່ຍາວເປັນເວລາດົນ ຫຼື ໄດ້ຮັບຜົນກະທົບຈາກໄພພິບັດທໍາມະຊາດ.
- ຊຸກຍູ້ການຜະລິດກະສິກໍາໃນລະດັບຊຸມຊົນ ຫຼື ຄົວເຮືອນ ດ້ວຍການຕອບສະໜອງດ້ານແນວພັນ ຫຼື ອຸປະກອນການຜະລິດ ເພື່ອສົ່ງເສີມຄວາມຫຼາກຫຼາຍຂອງກິດຈະກໍາການທໍາມາຫາກິນ ໃນຂະແໜງກະສິກໍາ ແລະ ຂະແໜງທີ່ບໍ່ແມ່ນກະສິກໍາ.
- ໂດຍສົມທົບກັບການຊ່ວຍເຫຼືອທີ່ເປັນສະບຽງອາຫານ ຫຼື ການຊ່ວຍເຫຼືອທີ່ເປັນເງິນ, ການຊຸກຍູ້ການຜະລິດ.
- ໃຫ້ຄວາມຮູ້ ຫຼື ປູກຈິດສໍານຶກດ້ານໂພຊະນາການ ແລະ ການມີປະລິມານອາຫານທີ່ມີຄຸນຄ່າທາງດ້ານໂພຊະນາການ, ໂດຍສະເພາະແມ່ນຢູ່ເຂດທີ່ປະສົບກັບພາວະຂາດສານອາຫານທີ່ຮຸນແຮງ ແລະ ຊໍ້າເຮື້ອ.

**ດ້ານສຸຂະພາບ:**

- ໃຫ້ຄວາມຮູ້ດ້ານໂພຊະນາການ/ໂພຊະນາການສຶກສາ.
- ລົງທຶນຢ່າງຕໍ່ເນື່ອງ ແລະ ມີລັກສະນະຍືນຍົງ ເຂົ້າໃນການເສີມສ້າງຄວາມອາດສາມາດໃຫ້ແກ່ລະບົບສາທາລະນະສຸກ ເພື່ອໃຫ້ສາມາດສະໜອງການບໍລິການຮັກສາສຸຂະພາບຢ່າງເປັນປົກກະຕິ, ໄປຄຽງຄູ່ກັບກ້ານຮັບປະກັນການຮັບມືກັບວິກິດການຂອງການລະບາດວິທະຍາ ແລະ ວິກິດການອື່ນໆ.
- ຂະຫຍາຍແຜນງານການປະກັນສຸຂະພາບແຫ່ງຊາດ ໃຫ້ຄອບຄຸມເຖິງການຮັກສາສຸຂະພາບຂອງແມ່ ແລະ ເດັກ, ລວມທັງການເບິ່ງແຍງກ່ອນເກີດ (ການຝາກທ້ອງ), ສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ລວມທັງການປິ່ນປົວພະຍາດຊໍ້າເຮື້ອ.
- ສະໜອງງົບປະມານທີ່ຍືນຍົງ ເພື່ອການສະໜອງການບໍລິການສຸຂະພາບຂັ້ນພື້ນຖານ ແລະ ຈໍາເປັນ ເຊັ່ນ: ສຸຂະພາບຂອງແມ່ ແລະ ເດັກ, ເພດ ແລະ ສຸຂະພາບຈະເລີນພັນ, ການເບິ່ງແຍງຄົນເຈັບໜັກ, ແລະ ການປິ່ນປົວພະຍາດຊໍ້າເຮື້ອ.
- ສະໜອງງົບປະມານ ແລະ ຊັບພະຍາກອນມະນຸດ ຫຼາຍຂຶ້ນກວ່າລະດັບປະຈຸບັນ ເພື່ອສະໜັບສະໜູນ ວຽກງານຕິດຕາມ ແລະ ແກ້ໄຂບັນຫາສຸຂະພາບທາງເພດ ແລະ ສຸຂະພາບຈິດ, ໂດຍສະເພາະໃນໄວ ໜຸ່ມ, ແມ່ຍິງ ແລະ ເດັກ.
- ປຸກລະດົມຊຸມຊົນ ໃນການສັກຢາກັນພະຍາດ ຢູ່ ສຸກສາລາ ຫຼື ໂຮງໝໍ.
- ລົງທຶນໃສ່ການສ້າງຍຸດທະສາດ ບົນພື້ນຖານການມີສ່ວນຮ່ວມຂອງຊຸມຊົນ ເພື່ອເປັນການດຸ່ນດ່ຽງການແບກຫາບພາລະໃນການດູແລຮັກສາສຸຂະພາບ ລະຫວ່າງຂະແໜງສາທາລະນະສຸກທີ່ມີຊັບພະຍາກອນ ຈໍາກັດ ແລະ ພາກລັດຢູ່ຂັ້ນທ້ອງຖິ່ນ ຊຸມຊົນຕ່າງໆ.
- ສ້າງມາດຕະການບົນພື້ນຖານການມີສ່ວນຮ່ວມຂອງຊຸມຊົນ ແລະ ສ້າງຄວາມເຂັ້ມແຂງໃນການປະສານເຊື່ອມໂຍງກັບສູນກາງສະຫະພັນແມ່ຍິງ ແລະ ສູນກາງຊາວໜຸ່ມ ເພື່ອຕິດຕາມ ແລະ ແກ້ໄຂບັນຫາການລ່ວງລະເມີດທາງເພດ ແລະ ການໃຊ້ຄວາມຮຸນແຮງທາງເພດ.
- ເພີ່ມທະວີການສື່ສານໃຫ້ຄວາມຮູ້ກ່ຽວກັບການປ້ອງກັນພະຍາດ -19 ແລະ ຄວາມສ່ຽງຕໍ່ສຸຂະພາບຈິດ, ການເຜີຍແຜ່ຂໍ້ມູນຂ່າວສານດ້ານການເຂົ້າເຖິງການຮັກສາສຸຂະພາບທີ່ຈໍາເປັນ ທີ່ເປັນພາສາຊົນເຜົ່າ ແລະ ໃຊ້ວິທີການທີ່ປະຊາຊົນທຸກຊົນເຜົ່າສາມາດເຂົ້າເຖິງໄດ້ງ່າຍ, ໂດຍມີການປັບໃຫ້ແທດເໝາະກັບລະດັບການຮູ້ໜັງສື ແລະ ລະດັບວຸດທິພາວະຂອງແຕ່ລະກຸ່ມຄົນ.
- ປັບປຸງການບໍລິການດ້ານສຸຂະພາບຈະເລີນພັນ, ສຸຂະພາບຂອງແມ່, ເດັກເກີດໃໝ່, ເດັກ ແລະ ໄວໜຸ່ມ.
- ສືບຕໍ່ແກ້ໄຂເພື່ອຫລຸດຜ່ອນຊ່ອງຫວ່າງດ້ານການພັດທະນາເດັກ ແລະ ໂພຊະນາການສໍາລັບເດັກ.
- ສືບຕໍ່ແກ້ໄຂບັນຫາໄຂ້ມາລາເຣຍຊະນິດດື້ຢາຫຼາຍຂະໜານ (ບໍ່ຕອບສະໜອງຕໍ່ຢາ).

- ຫຼຸດຜ່ອນ ແລະ ລົບລ້າງບັນຫາການເສຍຊີວິດ ແລະ ການເຈັບປ່ວຍທີ່ເກີດຈາກພະຍາດ ທີ່ສາມາດປ້ອງກັນໄດ້ ໂດຍສະເພາະແມ່ນໃນເດັກກຸ່ມ 1 ປີ ແລະ ລຸ່ມ 5 ປີ.
- ເສີມສ້າງທັກສະການຜະດຸງຄັນ ພ້ອມທັງກຳນົດມາດຕະຖານດ້ານຄຸນນະພາບ ສຳລັບການເບິ່ງແຍງແມ່ແລະ ເດັກເກີດໃໝ່.
- ຝຶກອົບຮົມເພື່ອພັດທະນາ ແລະ ຍົກລະດັບດ້ານຄຸນນະພາບຂອງບຸກຄະລາກອນທາງການແພດ, ໂດຍສະເພາະແມ່ນຢູ່ເຂດຫ່າງໄກສອກຫຼີກ.
- ສ້າງໂຄງການຕົວແບບດ້ານການສະໜອງງົບປະມານ ໃນການເບິ່ງແຍງຮັກສາສຸຂະພາບຂອງເດັກໂດຍພໍ່ແມ່/ຜູ້ປົກຄອງ ນັບຕັ້ງແຕ່ຖືພາ ຈົນຮອດອາຍຸ 2 ປີ ຢູ່ ແຂວງສະຫວັນນະເຂດ (ເມືອງນອງ); ແຂວງຜົ້ງສາລີ (ເມືອງຂວາ, ເມືອງໃໝ່, ເມືອງສຳພັນ ແລະ ເມືອງບູນໃຕ້); ແຂວງອຸດົມໄຊ (ເມືອງຫຼາ, ເມືອງນາໝໍ້); ແຂວງຫົວພັນ (ເມືອງຫົວເມືອງ, ເມືອງຊ່ອນ, ເມືອງຊຳໃຕ້, ເມືອງກວັນ) ແລະ ແຂວງຊຽງຂວາງ (ເມືອງໜອງແຮດ ແລະ ເມືອງຄຳ).
- ນຳໃຊ້ນະໂຍບາຍສຸຂະພາບຈະເລີນພັນສຳລັບໄວໜຸ່ມ ແລະ ລວມເອົາການສຶກສາດ້ານສຸຂະພາບຈະເລີນພັນ ເຂົ້າໃນຫຼັກສູດການສຶກສາພາກບັງຄັບຕັ້ງແຕ່ອາຍຸຍັງນ້ອຍ, ການປ້ອງກັນການຖືພາກ່ອນໄວອັນຄວນ ແລະ ການປ້ອງກັນພະຍາດຕິດຕໍ່ທາງເພດສຳພັນ.
- ປັບປຸງ ເນື້ອໃນ ແລະ ທັດສະນະຂອງແຜນງານ ນາງນ້ອຍ ກ່ຽວກັບເພດສຶກສາ, ການນຳໃຊ້ສື່ທີ່ປອດໄພ ແລະ ທັກສະໃນການດຳລົງຊີວິດຂອງເດັກ.
- ສຳຫຼວດລະບົບນ້ຳປະປາຕົວເມືອງນ້ອຍຢູ່ຂັ້ນບ້ານ.

## 2.4.1.2 ແຜນວຽກຈຸດສຸມ 1.2: ສົ່ງເສີມສິດໃນການໄດ້ຮັບການສຶກສາ ແລະ ການພັດທະນາ

### ບັນດາຕົວຊີ້ວັດ ແລະ ຄາດໝາຍ

- ອັດຕາການເຂົ້າກຽມຄວາມພ້ອມກ່ອນໄວຮຽນຂອງເດັກ ອາຍຸລະຫວ່າງ 36-59 ເດືອນ ໃຫ້ບັນລຸ 60%.
- ອັດຕາການເຂົ້າກຽມຄວາມພ້ອມກ່ອນໄວຮຽນ ໃຫ້ບັນລຸ 86%.
- ເພີ່ມ ຫຼື ຈັດສັນງົບປະມານຢ່າງຍືນຍົງໃຫ້ແກ່ຂະແໜງສຶກສາ ໃຫ້ບັນລຸ 18  20%.
- ອັດຕາສ່ວນເດັກ ອາຍຸລະຫວ່າງ 7-14 ປີ ທີ່ມີປຶ້ມອ່ານ 3 ຫົວຂຶ້ນໄປ ໃຫ້ບັນລຸ 50%.
- ອັດຕາເຂົ້າຮຽນຊັ້ນປະຖົມ ໃຫ້ບັນລຸ 99%.
- ອັດຕາເຂົ້າຮຽນຊັ້ນປະຖົມສຸດທິ ໃຫ້ບັນລຸ 90%.
- ອັດຕາເຂົ້າຮຽນຊັ້ນມັດທະຍົມຕອນຕົ້ນສຸດທິ ໃຫ້ບັນລຸ 80%.
- ອັດຕາເຂົ້າຮຽນຊັ້ນມັດທະຍົມຕອນຕົ້ນສຸດທິ ໃຫ້ບັນລຸ 60%.
- ອັດຕາປະລະການຮຽນຊັ້ນປະຖົມ ໃຫ້ຕ່ຳກວ່າ 2%.
- ອັດຕາຄ້າງຫ້ອງຊັ້ນປະຖົມ ໃຫ້ຕ່ຳກວ່າ 2%.
- ອັດຕາຮຽນຈົບຊັ້ນມັດທະຍົມ ໃຫ້ບັນລຸ 80%.
- ອັດຕາເລື່ອນຊັ້ນປະຖົມຂຶ້ນມັດທະຍົມຕອນຕົ້ນຢ່າງມີປະສິດທິພາບ ໃຫ້ບັນລຸ 100%.
- ອັດຕາເຂົ້າຮຽນຊັ້ນມັດທະຍົມຕອນຕົ້ນສຸດທິ ໃຫ້ບັນລຸ 80%.
- ສູ້ຊົນໃຫ້ນັກສຶກສາຮຽນຈົບລະດັບວິຊາຊີບໃນສາຂາຕ່າງໆ ໃຫ້ໄດ້ 30,000 ຄົນ.
- ອັດຕາສ່ວນຂອງໄວໜຸ່ມຍິງ ອາຍຸລະຫວ່າງ 15-24 ປີ ທີ່ໄດ້ເຂົ້າໂຮງຮຽນ 94% ສຳລັບແມ່ຍິງ ແລະ 88% ສຳລັບຜູ້ຊາຍ.

# ວຽກບູລິມະສິດ

- ເພີ່ມອັດຕາການເຂົ້າຮຽນ ແລະ ປັບປຸງຄຸນນະພາບການສຶກສາ ລວມທັງການສຶກສາກ່ອນໄວຮຽນ, ການສຶກສາຊັ້ນປະຖົມ, ມັດທະຍົມ ແລະ ອາຊີວະສຶກສາ ແລະ ການສຶກສາຊັ້ນສູງ.
- ສະໜອງການຝຶກອົບຮົມທີ່ມີຄຸນນະພາບໃຫ້ແກ່ຄູ, ໂດຍສະເພາະແມ່ນຄູຢູ່ເຂດຫ່າງໄກສອກຫຼີກ.
- ຮັບປະກັນໃຫ້ເດັກທຸກຄົນໄດ້ເຂົ້າເຖິງການພັດທະນາທີ່ມີຄຸນນະພາບ, ການດູແລເບິ່ງແຍງ ແລະ ການສຶກສາກ່ອນໄວຮຽນ.
- ສະໜອງທີ່ພັກ ແລະ ທຶນການສຶກສາ ໃຫ້ແກ່ນັກຮຽນຊັ້ນມັດທະຍົມປາຍຢູ່ເຂດຫ່າງໄກສອກຫຼີກ.
- ເອົາໃຈໃສ່ຕິດຕາມ ແລະ ກວດກາການພັດທະນາການສຶກສາກ່ອນໄວຮຽນ (ເດັກອາຍຸຕ່ຳກວ່າ 3 ປີ).
- ປັບປຸງໂພຊະນາການຂອງນັກຮຽນຊັ້ນປະຖົມ ດ້ວຍການປັບປຸງໂຄງການອາຫານໃນໂຮງຮຽນ ໂດຍສະເພາະແມ່ນສຳລັບນັກຮຽນຢູ່ເຂດຫ່າງໄກສອກຫຼີກ ແລະ ເຂົ້າເຖິງຍາກ.
- ປູກຈິດສຳນຶກໃຫ້ພໍ່ແມ່ ຫຼື ຜູ້ປົກຄອງ ໃຫ້ເຫັນໄດ້ຄວາມສຳຄັນຂອງການສຶກສາຂອງລູກຫຼານ ໂດຍສະເພາະແມ່ນເດັກຍິງ.
- ຊຸກຍູ້ສົ່ງເສີມຄວາມຮູ້ຄວາມ ແລະ ຄວາມສາມາດຂອງເດັກ ກ່ຽວກັບການສຶກສາສຸຂະພາບຈະເລີນພັນ ສຳລັບເດັກ ແລະ ເຍົາວະຊົນ ເພື່ອປ້ອງກັນການຖືພາໃນໄວເດັກ.
- ປັບປຸງຫຼັກສູດການສຶກສາ ລວມທັງຫຼັກສູດເຕັກນິກວິຊາຊີບ ແລະ ອາຊີວະສຶກສາເພື່ອຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງຕະຫຼາດ, ໃນດ້ານຄວາມເປັນໄປໄດ້ ແລະ ຄວາມສາມາດປັບຕົວກຽມຄວາມພ້ອມໃຫ້ເດັກເພື່ອໂອກາດໃນການມີວຽກເຮັດງານທຳທີ່ດີກວ່າ.
- ປັບປຸງຫຼັກສູດສຳລັບນັກຮຽນກຸ່ມທີ່ມີຄວາມຕ້ອງການພິເສດ ແລະ ຜູ້ທີ່ອອກໂຮງຮຽນຍ້ອນຄວາມພິການ.
- ສະໜອງການສຶກສາດ້ານສິດທິເດັກທີ່ເໝາະສົມ ໃນທຸກລະດັບຂອງລະບົບການສຶກສາ.
- ສະໜອງການສຶກສາທີ່ມີຄຸນນະພາບໃຫ້ແກ່ເດັກທຸກຄົນ.
- ຊຸກຍູ້ທັງເດັກຍິງ ແລະ ເດັກຊາຍໃຫ້ເຂົ້າໂຮງຮຽນ ແລະ ຮຽນຈົບການສຶກສາພາກບັງຄັບ.
- ສືບຕໍ່ຈັດການຮຽນ-ການສອນ ທີ່ຄຳນຶງເຖິງເດັກຍິງ ແລະ ເດັກຊາຍໄດ້ຮຽນວິຊາວິທະຍາສາດທຳມະຊາດໃຫ້ຫຼາຍຂຶ້ນ.
- ສຶກສາຄົ້ນຄວ້າກ່ຽວກັບອຸປະສັກ ທີ່ກີດຂວາງການຮຽນຈົບຊັ້ນປະຖົມພາກບັງຄັບຂອງເດັກ, ໂດຍສະເພາະແມ່ນເດັກຍິງ.
- ຕ້ອງດຳເນີນການປະຕິຮູບຄຸນນະພາບການສຶກສາ ໂດຍການເພີ່ມງົບປະມານຢ່າງພຽງພໍ ແລະ ຍືນຍົງສຳລັບວຽກງານສຶກສາ.
- ລົງທຶນໃສ່ການນຳໃຊ້ລະບົບ ແລະ ອຸປະກອນດິຈິຕອລ໌ ແລະ ການສຶກສາທາງໄກ ພ້ອມທັງສົ່ງເສີມການສ້າງທັກສະສຳລັບສະຕະວັດທີ 21.
- ໃຫ້ບູລິມະສິດໃນການລົງທຶນໃສ່ການສຶກສາກ່ອນໄວຮຽນ ແລະ ການສຶກສາຊັ້ນປະຖົມ ທີ່ມີຄຸນນະພາບ, ໂດຍສະເພາະແມ່ນຢູ່ບັນດາເມືອງທີ່ດ້ອຍໂອກາດ ທີ່ນັກຮຽນມີຜົນການຮຽນຕ່ຳ ຫຼື ຫລຸດຄາດ ໝາຍ.
- ລົງທຶນໃສ່ການປັບປຸງຄຸນນະພາບຂອງການສຶກສາຊັ້ນປະຖົມ ແລະ ການເຂົ້າເຖິງການສຶກສາກ່ອນໄວຮຽນທີ່ມີຄຸນນະພາບ ເພື່ອປັບປຸງຄວາມພ້ອມໃນການຮຽນ ດັ່ງທີ່ໄດ້ລະບຸໄວ້ໃນຮ່າງຍຸດທະສາດຂອງກະຊວງສຶກສາ ໄລຍະ 2021 2025.
- ລົງທຶນໃສ່ວຽກງານ/ໂຄງການຊ່ວຍເຫຼືອທີ່ເປັນເປົ້າໝາຍ ເພື່ອຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການໃນການຮຽນຮູ້ຂອງເດັກຈາກຄອບຄົວທຸກຍາກຢູ່ເຂດຊົນນະບົດ ຫ່າງໄກສອກຫຼີກ, ເດັກຈາກຄົວເຮືອນທີ່ບໍ່ເວົ້າພາສາລາວ, ເດັກຍິງທີ່ອາຍຸເກີນ, ແລະ ຜູ້ພິການ ທີ່ທີ່ມີໂອກາດໜ້ອຍກວ່າໃນເຂົ້າເຖິງການສຶກສາໃນທຸກລະດັບ.

## 2.4.1.3 ແຜນວຽກຈຸດສຸມທີ 1.3: ການປົກປ້ອງເດັກ

# ບັນດາຕົວຊີ້ວັດ ແລະ ຄາດໝາຍ

- ເພີ່ມອັດຕາການຈົດທະບຽນການເກີດ ໃຫ້ບັນລຸ 75%.
- ອັດຕາການແຕ່ງດອງກ່ອນໄວອັນຄວນ (ອາຍຸຕໍ່າກວ່າ 18 ປີ) ໃຫ້ຫລຸດລົງ ຍັງເຫຼືອ 16%.
- ອັດຕາສ່ວນເດັກຍິງ ອາຍຸລະຫວ່າງ 15-18 ປີ ທີ່ແຕ່ງດອງແລ້ວ ໃຫ້ຫລຸດລົງ ຍັງເຫຼືອ 9%.
- ອັດຕາສ່ວນຂອງເດັກອາຍຸລະຫວ່າງ 5-17 ປີ ທີ່ມີສ່ວນພົວພັນກັບການໃຊ້ແຮງງານເດັກ ໃຫ້ຫລຸດລົງ ຍັງເຫຼືອ 16.3%.
- ການປະຕິບັດວິໄນ ຫຼື ລົງໂທດທີ່ຮຸນແຮງ (ອັດຕາສ່ວນຂອງເດັກອາຍຸລະຫວ່າງ 1-14 ປີ ທີ່ຖືກຜູ້ປົກຄອງລົງໂທດທາງດ້ານຮ່າງກາຍ ແລະ/ທຳຮ້າຍຈິດໃຈ) ໃຫ້ຫລຸດລົງ 21%.
- ກວດກາການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍແຮງງານຂອງຫົວໜ່ວຍແຮງງານ ໃຫ້ໄດ້ 12.500 ຄັ້ງ.
- ອັດຕາສ່ວນຂອງເດັກທີ່ເຮັດວຽກ ຫຼື ອອກແຮງງານໃນເງື່ອນໄຂສະພາບແວດລ້ອມທີ່ເປັນອັນຕະລາຍ ໃຫ້ຫລຸດລົງເປັນ 0%.
- ສູ້ຊົນຂະຫຍາຍຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ ຂັ້ນເມືອງ 35 ເມືອງ ແລະ ຂັ້ນບ້ານ 500 ບ້ານ ພ້ອມທັງຈັດຝຶກອົບຮົມວຽກປົກປ້ອງ ແລະ ຊ່ວຍເຫຼືອເດັກ ໃຫ້ໄດ້ຢ່າງໜ້ອຍ 500 ຄົນ, ສະເລ່ຍ 100 ຄົນຕໍ່ປີ.
- ມີໜ່ວຍງານໃຫ້ຄຳປຶກສາ ເພື່ອຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໃນທຸກແຂວງ.
- ມີລະບົບຕິດຕາມການລ່ວງລະເມີດທາງອິນເຕີເນັດ ແລະ ການເຜີຍແຜ່ສິ່ງລາມົກອານາຈານເດັກ.
- ມີຄຳແນະນຳ ກ່ຽວກັບການຕ້ານການລ່ວງລະເມີດທາງເພດເດັກ ໃຫ້ແກ່ນັກເດີນທາງ ແລະ ນັກທ່ອງທ່ຽວ.
- ເອົາໃຈໃສ່ໃນການເບິ່ງແຍງລ້ຽງດູເດັກ ທີ່ອາໃສໃນບ້ານເດັກເອັສໂອເອັສ ໃຫ້ໄດ້ຈຳນວນ 1.003 ຄົນ.
- ເອົາໃຈໃສ່ໃຫ້ການຊ່ວຍເຫຼືອເດັກ-ໄວໜຸ່ມ ດ້ອຍໂອກາດ ແລະ ຜູ້ທີ່ມີຄວາມສ່ຽງຈາກການຄ້າປະເວນີເດັກ ຢູ່ໃນຊຸມຊົນ ໄດ້ຮັບການຝຶກອົບຮົມວິຊາຊີບ, ການປະກອບອາຊີບ ແລະ ຊອກວຽກເຮັດງານທຳໃຫ້ໄດ້ 500 ຄົນ.
- ເພີ່ມທະວີການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດວຽກລະເບີດຕົກຄ້າງບໍ່ທັນແຕກ ໃຫ້ມີປະສິດທິຜົນ ເພື່ອຫຼຸດຜ່ອນການບາດເຈັບ ແລະ ເສຍຊີວິດຂອງເດັກຈາກລູກລະເບີດບໍ່ທັນແຕກໃຫ້ຫລຸດລົງແຕ່ລະປີ.
- ປັບປຸງຊີວິດການເປັນຢູ່ ຂອງຜູ້ຖືກເຄາະຮ້າຍຈາກລະເບີດບໍ່ທັນແຕກ ຕົກຄ້າງ ແລະ ຄອບຄົວຂອງເຂົາເຈົ້າ ພ້ອມທັງໂຄສະນາປູກຈິດສຳນຶກສິດທິຄົນພິການ ຈາກ ລະເບີດບໍ່ທັນແຕກ ໃຫ້ໄດ້ຈຳນວນທັງໝົດ 5.750 ຄົນ
- ມີຄຳແນະນຳກ່ຽວກັບການປົກປ້ອງເດັກໃຫ້ປອດໄພຈາກການໃຊ້ສື່ອອນລາຍ, ໄພສັງຄົມ, ໄພພິບັດ ແລະ ພະຍາດ COVID-19, ລວມທັງພະຍາດຕາມລະດູການ.
- ມີຄຳແນະນຳກ່ຽວກັບທາງເລືອກໃນການເບິ່ງແຍງເດັກ ແລະ ການກຳນົດມາດຕະຖານຂັ້ນຕ່ຳສຳລັບການເບິ່ງແຍງເດັກ.
- ມີລະບົບຄຸ້ມຄອງຂໍ້ມູນທີ່ພ້ອມໃຊ້ງານ ກ່ຽວກັບການປົກປ້ອງເດັກ.

# ວຽກບຸລິມະສິດ:

- ແກ້ໄຂບັນຫາຕ່າງໆທີ່ເປັນສາເຫດຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ, ດ້ານຈິດໃຈ ແລະ ຄວາມຮຸນແຮງທາງເພດ.
- ປູກຈິດສໍານຶກ ກ່ຽວກັບການລ່ວງລະເມີດທາງເພດ ແລະ ຮັບປະກັນວ່າ ເດັກທີ່ຖືກລ່ວງລະເມີດນັ້ນໃຫ້ຖືວ່າເປັນຜູ້ໄດ້ຮັບເຄາະຮ້າຍ ບໍ່ແມ່ນຜູ້ກະທໍາຜິດ.
- ສ້າງກົນໄກການຮ້ອງທຸກທີ່ເປັນມິດກັບເດັກ ເພື່ອຮ້ອງທຸກກ່ຽວກັບການລ່ວງລະເມີດ, ການໃຊ້ຄວາມຮຸນແຮງ ແລະ ການຂູດຮີດເອົາລັດເອົາປຽບເດັກ.
- ຄັດເລືອກ ແລະ ປັບປຸງກົນໄກການຕິດຕາມການຢັ້ງຢືນຮັບຮອງເດັກ, ການໝັ້ນໝາຍແອບແຝງ (ຫຼອກລວງ), ການແຕ່ງງານແອບແຝງກັບຄົນຕ່າງປະເທດ ແລະ ຖືພາຂອງເດັກ.
- ຝຶກອົບຮົມໃຫ້ພະນັກງານ ກ່ຽວກັບການລາຍງານກໍລະນີການລ່ວງລະເມີດທາງດ້ານຮ່າງກາຍ, ດ້ານຈິດໃຈ ແລະ ລ່ວງລະເມີດທາງເພດເດັກ ເພື່ອຮັບປະກັນໃຫ້ເດັກໄດ້ຮັບການປົກປ້ອງຢ່າງມີປະສິດທິພາບ.
- ເພີ່ມການຕິດຕາມ ແລະ ກວດກາການໃຊ້ມາດຕະການ ແລະ ການສືບສວນ.
- ຊຸກຍູ້ອໍານາດການປົກຄອງທຸກຂັ້ນ ໃນການບັງຄັບໃຊ້ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແລະ ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ.
- ປັບປຸງວຽກງານຕ້ານການຄ້າເດັກ ແລະ ການຄ້າປະເວນີເດັກ, ພ້ອມທັງສ້າງຕັ້ງໜ່ວຍງານໃຫ້ຄໍາປຶກສາ ເພື່ອຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.
- ເອົາໃຈໃສ່ປົກປ້ອງເດັກໃຫ້ປອດໄພຈາກການໃຊ້ສື່ອອນລາຍ ແລະ ການເຂົ້າເຖິງຂໍ້ມູນທີ່ບໍ່ປອດໄພ.
- ຝຶກອົບຮົມໃຫ້ແກ່ເຈົ້າໜ້າທີ່, ພະນັກງານລັດ, ຜູ້ເຮັດທຸລະກິດທ່ອງທ່ຽວ ແລະ ຜູ້ອື່ນໆທີ່ກ່ຽວຂ້ອງ ໃນການບັງຄັບໃຊ້ກົດໝາຍກ່ຽວກັບການລ່ວງລະເມີດທາງເພດເດັກໂດຍນັກເດີນທາງ ແລະ ນັກທ່ອງທ່ຽວ ຢ່າງໜ້ອຍໃຫ້ໄດ້ 5 ຄັ້ງ.
- ເອົາໃຈໃສ່ຕໍ່ການຮັບແຈ້ງ/ລາຍງານ, ການຮ້ອງທຸກ ແລະ ການດໍາເນີນການທັນທີເພື່ອຊ່ວຍເຫຼືອຜູ້ທີ່ໄດ້ຮັບເຄາະຮ້າຍ.
- ຈັດກອງປະຊຸມເພື່ອລະດົມແນວຄວາມຄິດ ແລະ ສົນທະນາແລກປ່ຽນຄໍາຄິດຄໍາເຫັນ ລະຫວ່າງພາກລັດ ແລະ ພາກທຸລະກິດກ່ຽວກັບການຕ້ານການລ່ວງລະເມີດທາງເພດເດັກໂດຍນັກເດີນທາງ ແລະ ນັກທ່ອງທ່ຽວ ເພື່ອສ້າງເປັນຄູ່ມືແນະນໍາທີ່ຄົບຖ້ວນສົມບູນ.
- ສະໜອງສະຖານທີ່ພັກທີ່ປອດໄພໃຫ້ແກ່ເດັກໃນເວລາທີ່ເກີດມີໄພພິບັດ ຫຼື ໃນເວລາທີ່ມີຄວາມລໍາບາກທາງສັງຄົມ.
- ສ້າງຄູ່ມືແນະນໍາສໍາລັບເດັກ ເພື່ອປົກປ້ອງເຂົາເຈົ້າໃຫ້ປອດໄພຈາກສື່ສັງຄົມອອນລາຍ, ໄພສັງຄົມ, ໄພພິບັດ ແລະ ພະຍາດ (COVID-19) ລວມທັງພະຍາດຕາມລະດູການ.
- ສ້າງຄູ່ມື ແລະ ຝຶກອົບຮົມທາງເລືອກໃນການດູແລເດັກ ແລະ ກໍານົດມາດຕະຖານຂັ້ນຕໍ່າ.
- ກວດກາແຮງງານ ໄດ້ຮັບການຈັດຕັ້ງປະຕິບັດຢ່າງທົ່ວເຖິງ ແລະ ເຂົ້າສູ່ຫົວໜ່ວຍແຮງງານຫຼາຍຂຶ້ນ, ຝຶກອົບຮົມໃຫ້ເຈົ້າໜ້າທີ່ມີຄວາມເຂັ້ມແຂງດ້ານວິຊາການ ແລະ ມີຄວາມຮັບຜິດຊອບ, ສະໜອງສິ່ງອໍານວຍຄວາມສະດວກ ຢ່າງເໝາະສົມ.
- ເອົາໃຈໃສ່ປົກປ້ອງສິດ ແລະ ຜົນປະໂຫຍດ ຂອງຜູ້ອອກແຮງງານທີ່ມີລັກສະນະເພາະ ເປັນຕົ້ນ ແຮງງານເພດຍິງ, ແຮງງານໄວໜຸ່ມ, ຜູ້ດ້ອຍໂອກາດອື່ນໆ ເພື່ອຄວາມສະເໝີພາບ ແລະ ບໍ່ຈໍາແນກ ໃນການສະຖານທີ່ເຮັດວຽກ.
- ຊຸກຍູ້ໃຫ້ມີການເຂົ້າຮ່ວມຂອງພາກທຸລະກິດເອກະຊົນ ແລະ ຊຸມຊົນ ໃນການປົກປ້ອງການໃຊ້ແຮງງານເດັກ.
- ສ້າງຄວາມເຂັ້ມແຂງໃຫ້ແກ່ອົງການຮ່ວມມືສາມຝ່າຍ ເພື່ອເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ສາຍພົວພັນແຮງງານ ໂດຍການສ້າງຕັ້ງກົນໄກການປະສານງານ ແລະ ເວທີສົນທະນາສາມຝ່າຍ ເພື່ອປະຕິບັດພາລະບົດບາດຂອງອົງການດັ່ງກ່າວ.
- ສ້າງ ແລະ ປັບປຸງຮ່າງແບບຟອມ ສໍາລັບການເກັບກໍາສະຖິຕິຄະດີອາຍາ, ການສອບປາກຄໍາ ແລະ ການຮຽບຮຽງຄະດີໃຫ້ຖືກຕາມຫຼັກການດ້ານເຕັກນິກ, ປັບປຸງລະບົບການປະກອບເອກະສານ ແລະ ການແຈ້ງຄວາມ/ການຮ້ອງຟ້ອງ.
- ສຸມໃສ່ວຽກເກັບກໍາຂໍ້ມູນ, ການຢັ້ງຢືນຕົວຕົນຄົນທ້ອງຖິ່ນ ແລະ ຄົນຕ່າງດ້າວ, ການຕິດຕາມກວດກາ,ການສອບປາກຄໍາ ແລະ ການເກັບກໍາຂໍ້ມູນ ກ່ຽວກັບເປົ້າໝາຍທີ່ລະບຸໄວ້ໃນລາຍການສືບສວນ-ສອບສວນ, ສ້າງເປັນລາຍການ ຫຼື ຈັດລຽງປະເພດຄວາມສ່ຽງ ແລະ ຄວາມອ່ອນໄຫວ.
- ສຸມໃສ່ແກ້ໄຂຄະດີທີ່ ກ່ຽວຂ້ອງກັບເດັກທີ່ຍັງຄ້າງ ແລະ ຄະດີໃໝ່ໃຫ້ສໍາເລັດ.

- ຕິດຕາມ, ກວດກາ ແລະ ຊຸກຍູ້ວຽກງານດ້ານເຕັກນິກ, ແກ້ໄຂ ແລະ ດໍາເນີນຄະດີການຄ້າມະນຸດ ແລະ ການຄ້າປະເວນີ.
- ຮ່ວມມືກັບຕ່າງປະເທດ ໃນການກໍານົດແຜນງານ/ໂຄງການ ແລະ ກິດຈະກໍາ ກ່ຽວກັບການປົກປ້ອງ ແລະ ຊ່ວຍເຫຼືອເດັກ ທີ່ໄດ້ຮັບເຄາະຮ້າຍ/ຕົກເປັນເຫຍື່ອຂອງການຄ້າມະນຸດ.
- ຝຶກອົບຮົມອາສາສະໝັກບ້ານ ກ່ຽວກັບວຽກງານປົກປ້ອງ ແລະ ຊ່ວຍເຫຼືອເດັກ ໃນກໍລະນີເດັກ ທີ່ຖືກເຄາະຮ້າຍ ແລະ ຕິດຕາມປະເມີນຜົນ.
- ໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ສັງຄົມແກ່ເດັກທີ່ກະທໍາຜິດ ຢູ່ໃນລະດັບຊຸມຊົນ.
- ໃຫ້ການສະໜັບສະໜູນແກ່ເດັກພິການ ແລະ ປັບປຸງຄຸນນະພາບຂອງການບໍລິການ/ການຊ່ວຍເຫຼືອເດັກພິການ ແລະ ຄອບຄົວຂອງເຂົາເຈົ້າ.
- ຈັດຝຶກອົບຮົມໃຫ້ພະນັກງານທີ່ກ່ຽວຂ້ອງ ທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ກ່ຽວກັບການປົກປ້ອງ ແລະ ຊ່ວຍເຫຼືອເດັກ ທີ່ໄດ້ຮັບເຄາະຮ້າຍ/ຕົກເປັນເຫຍື່ອຂອງການຄ້າມະນຸດ ແລະ ການໃຫ້ຄໍາປຶກສາແກ່ແມ່ຍິງ ແລະ ເດັກ.
- ສ້າງໜ່ວຍງານຊ່ວຍເຫຼືອເຄື່ອນທີ່ ເພື່ອໃຫ້ຄວາມຊ່ວຍເຫຼືອ ແລະ ຟື້ນຟູເດັກທີ່ໄດ້ຮັບເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ ແລະ ການຄ້າມະນຸດ.
- ປັບປຸງປະມວນກົດໝາຍອາຍາ, ອະທິບາຍຄໍາສັບ ຫຼື ກໍານົດຄໍານິຍາມຂອງທຸກຮູບການລົງໂທດເດັກ ແລະ ທຸກຮູບການລົງໂທດທີ່ຫ້າມສໍາລັບເດັກໃນທຸກກາລະຖານ.
- ສົ່ງເສີມການລ້ຽງດູເດັກແບບສ້າງສັນ ແລະ ປາສະຈາກຄວາມຮຸນແຮງ ແລະ ການປະຕິບັດວິໄນຕໍ່ເດັກ, ລວມທັງການປູກຈິດສໍານຶກໃຫ້ພໍ່ແມ່, ຜູ້ປົກຄອງ, ພະນັກງານ ແລະ ປະຊາຊົນທົ່ວໄປ ໃນການໃຫ້ເດັກມີສ່ວນຮ່ວມໃນການເລືອກວິທີປະຕິບັດວິໄນ.
- ໃຫ້ຄໍາປຶກສາ ແລະ ຄໍາແນະນໍາ ແກ່ພໍ່ແມ່/ຜູ້ປົກຄອງ ແລະ ເດັກ ໃນການຫລຸດຜ່ອນບັນຫາຕ່າງໆ, ການຊ່ວຍເຫຼືອເພື່ອແກ້ໄຂ ແລະ ການສົ່ງເສີມການຍື່ນມືເຂົ້າມາຊ່ວຍຕັ້ງແຕ່ຕົ້ນ ຕໍ່ກັບບັນຫາຕ່າງໆທີ່ອາດນໍາໄປສູ່ຄວາມສ່ຽງທີ່ຫຼາຍຂຶ້ນໃນການປົກປ້ອງເດັກ.
- ສ້າງໃຫ້ມີການປູກຈິດສໍານຶກທີ່ເປັນມິດກັບເດັກ ຜົນກະທົບຕໍ່ຮ່າງກາຍ ແລະ ຈິດໃຈ ຂອງການລົງໂທດທາງດ້ານຮ່າງກາຍ.
- ບັງຄັບໃຊ້ກົດໝາຍຄອບຄົວ ທີ່ໄດ້ກໍານົດອາຍຸຂັ້ນຕໍ່າສໍາລັບການແຕ່ງງານແມ່ນ 18 ປີ, ປູກຈິດສໍານຶກໃຫ້ແກ່ເດັກ, ຄອບຄົວ, ສັງຄົມ, ອໍານາດການປົກຄອງທ້ອງຖິ່ນ, ຜູ້ນໍາສາສະໜາ ແລະ ຫົວໜ້າເຜົ່າ/ເຈົ້າກົກເຈົ້າເຫຼົ່າ, ຜູ້ພິພາກສາ ແລະ ໄອຍະການ ກ່ຽວກັບຜົນກະທົບດ້ານລົບຂອງການແຕ່ງດອງກ່ອນໄວອັນຄວນ ຕໍ່ສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈ ແລະ ຄວາມເປັນຢູ່ທີ່ດີຂອງເດັກ; ສ້າງກົນໄກການລາຍງານສໍາລັບເດັກ ຜ່ານສາຍດ່ວນ ຫຼື ຕາໜ່າງປົກປ້ອງເດັກ (ຕປດ) ເພື່ອຊອກຫາວິທີການຊ່ວຍເຫຼືອໃນກໍລະນີການແຕ່ງງານກ່ອນໄວອັນຄວນ.
- ເອົາໃຈໃສ່ປັບປຸງລະບົບການຈົດທະບຽນ ໃຫ້ສະດວກ ແລະ ງ່າຍດາຍ ແກ້ໄຂ, ລົບລ້າງທຸກຂໍ້ຫຍຸ້ງຍາກທີ່ເປັນອຸປະສັກຕໍ່ການຈົດທະບຽນ ພ້ອມທັງເອົາໃຈໃສ່ຕໍ່ການສ້າງຕັ້ງ ແລະ ປັບປຸງ ໜ່ວຍງານທະບຽນເຄື່ອນທີ່.
- ສ້າງກົນໄກ ການລາຍງານຂອງເດັກ ຜ່ານຕາໜ່າງປົກປ້ອງເດັກ (ຕປດ) ເພື່ອຂໍຄວາມຊ່ວຍເຫຼືອ ກໍລະນີ ການແຕ່ງດອງແຕ່ອາຍຸຍັງນ້ອຍ.
- ສ້າງຄວາມອາດສາມາດໃຫ້ແກ່ຕາໜ່າງປົກປ້ອງເດັກຂັ້ນບ້ານ, ໜ່ວຍງານໄກ່ເກ່ຍຂັ້ນບ້ານ ທີ່ມີພາລະບົດບາດໃນການເປັນກົນໄກການປົກປ້ອງເດັກຢູ່ຂັ້ນບ້ານ ເພື່ອປ້ອງກັນບໍ່ໃຫ້ເດັກແຕ່ງງານກ່ອນອາຍຸ 18 ປີ.
- ປູກຈິດສໍານຶກ ແລະ ສົ່ງເສີມ ການເບິ່ງແຍງລ້ຽງດູລູກຫຼານຢ່າງມີຄວາມຮັບຜິດຊອບ ແລະ ສົ່ງເສີມ ໃຫ້ຄໍາແນະນໍາກ່ຽວກັບພຶດຕິກໍາທາງເພດທີ່ເໝາະສົມ, ໂດຍສະເພາະແມ່ນເດັກຊາຍ.
- ແກ້ໄຂບັນຫາການໃຊ້ສານເສບຕິດຂອງເດັກ ແລະ ຊາວໜຸ່ມ ດ້ວຍການໃຫ້ຂໍ້ມູນຢ່າງຖືກຕ້ອງ ແລະ ເປັນກາງ, ການສຶກສາກ່ຽວກັບທັກສະການດໍາລົງຊີວິດໃຫ້ເດັກ ແລະ ຊາວໜຸ່ມໃນການຕ້ານຢາເສບຕິດ.
- ສ້າງເຄື່ອງມື ແລະ ຝຶກອົບຮົມກ່ຽວກັບການນໍາໃຊ້ສື່ສັງຄົມອອນລາຍຢ່າງປອດໄພສໍາລັບເດັກ.
- ສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະກໍາມະການຊີ້ນໍາຂັ້ນສູນກາງ ແລະ ທ້ອງຖິ່ນ, ອົງການຈັດຕັ້ງຕ່າງໆທີ່ຮັບຜິດຊອບ ເພື່ອຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກຢ່າງມີປະສິດທິຜົນ.

## 2.4.1.4 ແຜນວຽກຈຸດສຸມທີ 1.4: ການມີສ່ວນຮ່ວມຂອງເດັກ

### ບັນດາຕົວຊີ້ວັດ ແລະ ຄາດໝາຍ

- ຈຳນວນຄັ້ງຂອງການຈັດຕັ້ງຂັ້ນທ້ອງຖິ່ນ ແລະ ຮາກຖານ ທີ່ເດັກມີສ່ວນຮ່ວມ ຫຼື ໄດ້ເຂົ້າຮ່ວມ.
- ຈຳນວນຄັ້ງໃນການຝຶກອົບຮົມ ກ່ຽວກັບການມີສ່ວນຮ່ວມຂອງເດັກ ຂັ້ນສູນກາງ ແລະ ທ້ອງຖິ່ນ. ຈຳນວນໂຮງຮຽນຕໍ່ແຂວງທີ່ຈັດໃຫ້ມີສະຖານທີ່ເຮັດກິດຈະກຳຂອງເດັກ/ໄວໜຸ່ມ (ຢ່າງໜ້ອຍ 1 ໂຮງຮຽນ/ແຂວງ). ອັດຕາສ່ວນຂອງເດັກຍິງ ແລະ ເດັກຊາຍ, ເດັກພິການ ແລະ ເດັກກຸ່ມບອບບາງອື່ນໆ ທີ່ຫ້າວຫັນເຂົ້າຮ່ວມໃນການວາງແຜນຢູ່ຂັ້ນທ້ອງຖິ່ນ.
- ຈຳນວນໂຮງຮຽນທີ່ສ້າງຕົວແບບການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃຫ້ໄດ້ຢ່າງໜ້ອຍ ແຂວງລະ 1 ໂຮງຮຽນ.
- ອັດຕາສ່ວນຂອງເດັກ (ທັງຍິງ ແລະ ຊາຍ) ທີ່ສະແດງຄວາມເພິ່ງພໍໃຈຕໍ່ການມີສ່ວນຮ່ວມຂອງເຂົາເຈົ້າ ໃນຂັ້ນທ້ອງຖິ່ນ.
- ກົນໄກການມີສ່ວນຮ່ວມຂອງເດັກ ໃນການພັດທະນາຢູ່ຂັ້ນທ້ອງຖິ່ນ, ແຜນການລະດັບຊາດ ຫຼື ລະດັບທ້ອງຖິ່ນ ທີ່ສົ່ງຜົນຕໍ່ຜູ້ທີ່ດ້ອຍໂອກາດທີ່ສຸດ ແລະ ຜູ້ທີ່ຖືກແບ່ງແຍກຈາກສັງຄົມ.

### ວຽກບຸລິມະສິດ

- ຈັດຕັ້ງປະຕິບັດໂຄງການສົ່ງເສີມການມີສ່ວນຮ່ວມຂອງເດັກຢ່າງມີຄວາມໝາຍສຳຄັນ ແລະ ສ້າງເງື່ອນໄຂທ່າແຮງ/ກາລະໂອກາດໃຫ້ເດັກທຸກຄົນໃນຄອບຄົວ, ໃນສັງຄົມ ແລະ ໃນໂຮງຮຽນ, ລວມທັງສະມາຄົມ/ສະພານັກຮຽນ ໃຫ້ມີສ່ວນຮ່ວມຫຼາຍຂຶ້ນ ໂດຍເອົາໃຈໃສ່ພິເສດຕໍ່ເດັກຍິງ ແລະ ເດັກທີ່ບອບບາງ ຫຼື ເດັກທີ່ຕົກຢູ່ໃນຄວາມສ່ຽງ.
- ສ້າງຕົວແບບຂອງແຜນວຽກ ແລະ ແຜນງົບປະມານທີ່ຕິດພັນກັບເດັກ ແລະ ການມີສ່ວນຮ່ວມຂອງເດັກໃນການຕັດສິນໃຈ ຢູ່ຂັ້ນບ້ານຂອງແຂວງສະຫວັນນະເຂດ.
- ຊຸກຍູ້ສົ່ງເສີມໃຫ້ເດັກເຂົ້າມາມີສ່ວນຮ່ວມ ແລະ ເພື່ອສະແດງໃຫ້ເຫັນເຖິງຄວາມເປັນເຈົ້າການຂອງເດັກ ໃນການປະຕິບັດສິດ ແລະ ພັນທະຂອງເຂົາເຈົ້າ.
- ຕອບສະໜອງດ້ານວັດຖຸອຸປະກອນ ແລະ ການຝຶກອົບຮົມໃຫ້ແກ່ເດັກກຸ່ມຕ່າງໆ ເພື່ອຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນການປະກອບສ່ວນຕໍ່ການພັດທະນາບຸກຄົນ, ພັດທະນາສັງຄົມ ແລະ ພັດທະນາສິ່ງແວດລ້ອມ ໂດຍອີງໃສ່ທ່າແຮງຂອງແຕ່ລະຄົນໃນທຸກສະຖານະການ.
- ຝຶກອົບຮົມ ໃຫ້ແກ່ຜູ້ທີ່ເຮັດວຽກໃນຂະບວນການຍຸຕິທຳທາງອາຍາ ກ່ຽວກັບສິດຂອງເດັກໃນການຖືກຮັບຟັງໃນຂະບວນການພິຈາລະນາຄະດີ, ສ້າງລະບຽບ/ຂັ້ນຕອນຂອງສານ ຮ່ວມກັບນັກສັງຄົມສົງເຄາະ ກ່ຽວກັບວິທີເຮັດວຽກກັບເດັກ ຫຼື ເຮັດວຽກເພື່ອເດັກ.
- ສ້າງເງື່ອນໄຂໃນການອຳນວຍຄວາມສະດວກໃຫ້ເດັກ ແລະ ຊາວໜຸ່ມໄດ້ແລກປ່ຽນແນວຄວາມຄິດສຳລັບການພັດທະນາສັງຄົມ.
- ຈັດໃຫ້ມີການແຂ່ງຂັນດົນຕີ, ການສະແດງລະຄອນ ແລະ ການແຂ່ງຂັນອື່ນໆທີ່ກ່ຽວກັບສົນທິສັນຍາ ວ່າດ້ວຍສິດທິເດັກ ແລະ ບັນດາອະນຸສັນຍາເພີ່ມເຕີມ.
- ຈັດຝຶກອົບຮົມຢ່າງເປັນລະບົບ ກ່ຽວກັບວິທີການເຮັດວຽກກັບເດັກ ຫຼື ເຮັດວຽກເພື່ອເດັກ ໃຫ້ແກ່ເຈົ້າໜ້າທີ່ຕຳຫຼວດ, ຄູ/ອາຈານ, ແພດໝໍ, ນັກສັງຄົມສົງເຄາະ ແລະ ພະນັກງານທີ່ເຮັດວຽກຢູ່ສະຖານລ້ຽງເດັກ.

- ຈັດກອງປະຊຸມໃຫຍ່ລະດັບຊາດຂອງເດັກ ເພື່ອເດັກລາວຂຶ້ນທຸກໆປີ ໂດຍການເຂົ້າຮ່ວມຂອງເດັກທີ່ເປັນຕົວແທນໃຫ້ແກ່ເດັກ ແລະ ໄວໜຸ່ມ ຈາກທຸກແຂວງໃນຂອບເຂດທົ່ວປະເທດ.
- ສະໜັບສະໜູນ ແລະ ຊຸກຍູ້ສົ່ງເສີມເດັກບັນດາເຜົ່າ, ສ້າງແຮງບັນດານໃຈໃຫ້ແກ່ເຂົາເຈົ້າ, ເຮັດໃຫ້ເຂົາເຈົ້າ ຮັກລະບອບໃໝ່ ແລະ ກາຍເປັນຜູ້ສືບທອດພາລະກິດຂອງຊາດ.
- ສົ່ງເສີມເດັກທຸກຄົນໂດຍບໍ່ຈຳແນກ, ອະນຸຍາດໃຫ້ເດັກເຂົ້າຮ່ວມກັບຜູ້ໃຫຍ່ໃນກິດຈະກຳສຳຄັນຕ່າງໆ.
- ສ້າງຕົວແບບຂອງແຜນວຽກ ແລະ ແຜນງົບປະມານທີ່ຕິດພັນກັບເດັກ ແລະ ການມີສ່ວນຮ່ວມຂອງເດັກໃນການຕັດສິນໃຈ ຢູ່ຂັ້ນບ້ານຂອງແຂວງສະຫວັນນະເຂດ.
- ປັບປຸງສູນວັດທະນະທຳເດັກ ໃຫ້ເປັນສູນເພື່ອການຮຽນຮູ້ຮອບດ້ານ, ການຮຽນຮູ້ດ້ານທັກສະຕ່າງໆ ແລະ ການຮຽນຮູ້ແບບແຜນ/ວິຖີການດຳລົງຊີວິດ.

## 2.4.1.5 ແຜນວຽກຈຸດສຸມທີ 1.5: ສ້າງສະພາບແວດລ້ອມທີ່ເປັນມິດກັບເດັກ

### ບັນດາຕົວຊີ້ວັດ ແລະ ຄາດໝາຍ

- ຈຳນວນເດັກທີ່ເຂົ້າເຖິງອຸປະກອນ, ເອກະສານ/ເນື້ອໃນ ຫຼື ວິທີການກ່ຽວກັບການປ່ຽນແປງສະພາບດິນຟ້າອາກາດ ແລະ ການປົກປັກຮັກສາສິ່ງແວດລ້ອມ (ໃຫ້ບັນລຸ 100.000 ຄົນ).
- ອັດຕາສ່ວນຂອງເດັກທີ່ເສຍຊີວິດຍ້ອນອຸບັດເຫດຕາມທ້ອງຖະໜົນ, ຄິດໄລ່ເປັນ % ຂອງການເສຍຊີວິດຍ້ອນອຸບັດເຫດຕາມທ້ອງຖະໜົນທັງໝົດ ໃຫ້ຫລຸດລົງເຄິ່ງໜຶ່ງ.
- ຈຳນວນຄັ້ງຂອງການຈັດງານ/ຈັດກິດຈະກຳເຜີຍແຜ່ຂໍ້ມູນຂ່າວສານ ເພື່ອໃຫ້ເດັກມີຄວາມສຳນຶກຫຼາຍຂຶ້ນກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ການປ່ຽນແປງສະພາບດິນຟ້າອາກາດ (ຢ່າງໜ້ອຍ 10 ຄັ້ງຕໍ່ປີ).

### ວຽກບຸລິມະສິດ

- ສ້າງສວນສາທາລະນະ ແລະ ສະຖານທີ່ປອດໄພຢູ່ໃນຊຸມຊົນໄດ້ຫຼາຍຂຶ້ນ ເຊັ່ນ: ເດີ່ນ/ສະໜາມຫຼິ້ນ, ສະຖານທີ່ສຳລັບຈັດກິດຈະກຳດ້ານວັດທະນະທຳ, ກິດຈະກຳພັກຜ່ອນຢ່ອນໃຈ ແລະ ກິດຈະກຳສ້າງສັນ, ໂດຍສຸມໃສ່ເດັກດ້ອຍໂອກາດ ແລະ ເດັກທີ່ອາໄສຢູ່ນຳ "ວັດວາອາຮາມ".
- ສ້າງກິດຈະກຳປູກຈິດສຳນຶກໃຫ້ແກ່ເດັກ ເພື່ອໃຫ້ຄຳນຶງເຖິງສິ່ງແວດລ້ອມ ເປັນຕົ້ນ: ວັນສິ່ງແວດລ້ອມໂລກ, ວັນປູກຕົ້ນໄມ້ແຫ່ງຊາດ ແລະ ວັນອື່ນໆ ເພື່ອເປັນປູກຈິດສຳນຶກ ກ່ຽວກັບການຫຼຸດຜ່ອນການຕັດໄມ້ທຳລາຍປ່າ.
- ປັບປຸງພື້ນຖານໂຄງລ່າງ ລວມທັງສະຖານທີ່ຕ່າງໆ ພ້ອມທັງປະກອບເຄື່ອງມື ແລະ ອຸປະກອນທີ່ຈຳເປັນໃຫ້ພຽງພໍ.
- ປັບປຸງລະບົບຄວາມປອດໄພໃນການສັນຈອນສຳລັບເດັກ ດ້ວຍການລວມເອົາຄວາມຮູ້ກ່ຽວກັບເຄື່ອງໝາຍ/ປ້າຍສັນຍານຈະລາຈອນ ແລະ ມາດຕະການດ້ານຄວາມປອດໄພເຂົ້າໃນຫຼັກສູດຂອງໂຮງຮຽນ.
- ເອົາໃຈໃສ່ປັບປຸງລະບົບໄຟຕາມຖະໜົນຫົນທາງ. ເອົາໃຈໃສ່ເຮັດໃຫ້ນັກຮຽນໄດ້ຮຽນຮູ້ ແລະ ເຂົ້າໃຈກ່ຽວກັບຫຼັກການອະນາໄມ 3 ສະອາດ.

## 2.4.2 ແຜນງານທີ 2: ການໂຄສະນາເຜີຍແຜ່, ປູກຈິດສຳນຶກ, ສ້າງຖານຂໍ້ມູນ ແລະ ສຶກສາຄົ້ນຄວ້າ

### 2.4.2.1 ແຜນວຽກຈຸດສຸມທີ 2.1: ການໂຄສະນາເຜີຍແຜ່ ແລະ ການປູກຈິດສຳນຶກ

#### ບັນດາຕົວຊີ້ວັດ ແລະ ຄາດໝາຍ

- ເຜີຍແຜ່ເນື້ອໃນຂອງສົນທິສັນຍາ ວ່າດ້ວຍສິດທິເດັກ ແລະ ອານຸສັນຍາເພີ່ມເຕີມ ໃຫ້ແກ່ພະນັກງານວິຊາການຝ່າຍຕຸລາການ, ເຈົ້າໜ້າທີ່ຕຳຫຼວດ ແລະ ທະຫານ, ຄູ/ອາຈານ, ພະນັກງານຂະແໜງສາທາລະນະສຸກ, ນັກສັງຄົມສົງເຄາະ ແລະ ສື່ມວນຊົນ ໃຫ້ໄດ້ຢ່າງໜ້ອຍ 5 ຄັ້ງ/ປີ.
- ປູກຈິດສຳນຶກໃຫ້ແກ່ເດັກ ແລະ ຄອບຄົວຂອງເຂົາເຈົ້າ ກ່ຽວກັບສົນທິສັນຍາວ່າດ້ວຍສິດທິເດັກ ແລະ ບັນດາອານຸສັນຍາເພີ່ມເຕີມ ຢ່າງໜ້ອຍໃຫ້ໄດ້ 10 ຄັ້ງ/ປີ.
- ເຜີຍແຜ່ຂໍ້ມູນຂ່າວສານ ໃຫ້ແກ່ພະນັກງານລັດ, ປະຊາຊົນທົ່ວໄປ ແລະ ຄອບຄົວຂອງເດັກພິການ ເພື່ອຫລຸດຜ່ອນການແບ່ງແຍກ/ໝິ່ນປະໝາດ ແລະ ເພື່ອສົ່ງເສີມຄວາມເປັນຢູ່ທີ່ດີຂຶ້ນຂອງເດັກພິການ ໃຫ້ໄດ້ຢ່າງໜ້ອຍ 5 ຄັ້ງຕໍ່ປີ.
- ປູກຈິດສຳນຶກໃຫ້ແກ່ເຈົ້າໜ້າທີ່ຕຳຫຼວດທົ່ວປະເທດ ໂດຍສະເພາະແມ່ນເຈົ້າໜ້າທີ່ສືບສວນ-ສອບສວນ ກ່ຽວກັບການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ການຕ້ານການຄ້າຂາຍເດັກ ແລະ ຄ້າປະເວນີເດັກ ໃຫ້ໄດ້ 10 ຄັ້ງ/ປີ.
- ມີເຄື່ອງມື ແລະ ຄຳແນະນຳ ສຳລັບການປູກຈິດສຳນຶກ ກ່ຽວກັບຜົນກະທົບດ້ານລົບຂອງການໃຊ້ຢາເສບຕິດ ຜ່ານທາງອອນລາຍ, ພ້ອມທັງຈັດກິດຈະກຳເພື່ອປູກຈິດສຳນຶກໃຫ້ແກ່ເດັກ ແລະ ໄວໜຸ່ມ ໃຫ້ຫ່າງໄກຈາກຢາເສບຕິດ.
- ປູກຈິດສຳນຶກກ່ຽວກັບຄວາມສຳຄັນຂອງໃບຢັ້ງຢືນການເກີດ ໃຫ້ໄດ້ 50 ບ້ານ / ປີ.
- ປູກຈິດສຳນຶກໃຫ້ແກ່ເດັກ ກ່ຽວກັບຜົນກະທົບຂອງການໃຊ້ສານເສບຕິດ, ສຸຂະພາບຈະເລີນພັນ, ອຸປະຕິເຫດເທິງທ້ອງຖະໜົນ ແລະ ການນຳໃຊ້ສື່ອອນລາຍຢ່າງປອດໄພ ໃຫ້ໄດ້ຢ່າງໜ້ອຍ 10 ຄັ້ງ/ປີ.
- ປູກຈິດສຳນຶກ ໃຫ້ແກ່ເດັກ, ຄອບຄົວ, ຊຸມຊົນ/ສັງຄົມ, ອຳນາດການປົກຄອງທ້ອງຖິ່ນ, ຜູ້ນຳສາສະໜາ ແລະ ຫົວໜ້າເຜົ່າ/ເຈົ້າກົກເຈົ້າເຫຼົ່າ, ຜູ້ພິພາກສາ ແລະ ໄອຍະການ ກ່ຽວກັບຜົນກະທົບຂອງການແຕ່ງດອງໃນໄວເດັກຕໍ່ສຸຂະພາບກາຍ, ສຸຂະພາບໃຈ ແລະ ຄວາມເປັນຢູ່ທີ່ດີຂອງເດັກ ໃຫ້ໄດ້ຢ່າງໜ້ອຍ 10 ຄັ້ງ/ປີ.
- ເອົາໃຈໃສ່ຊຸກຍູ້ ແລະ ສົ່ງເສີມການໂຄສະນາແບບເຄື່ອນທີ່ ໃຫ້ໄດ້ 3.000 ເທື່ອບ້ານ; ເຊື່ອມສານວຽກງານການໂຄສະນາ ແລະ ຂະຫຍາຍການສິດສອນໃນສະຖາບັນການສຶກສາຕ່າງໆ ໃຫ້ໄດ້ 500 ແຫ່ງ ແລະ ສົ່ງເສີມການໂຄສະນາຜ່ານທາງວິທະຍຸ, ໂທລະໂຄ່ງ ແລະ ອື່ນໆ ໃຫ້ໄດ້ 8 ແຂວງ ແລະ ນະຄອນຫລວງວຽງຈັນ ເພື່ອຫຼຸດຜ່ອນຈຳນວນຜູ້ໄດ້ຮັບເຄາະຮ້າຍຈາກລະເບີດບໍ່ທັນແຕກ ໃຫ້ຕ່ຳກວ່າ 40 ຄົນ/ປີ.
- ເອົາໃຈໃສ່ໃນການປູກຈິດສຳນຶກໃນທົ່ວສັງຄົມໃຫ້ມີຄວາມຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບແຮງງານເດັກ ໂດຍສະເພາະ ຄວາມເຂົ້າໃຈຂອງເດັກເອງ, ພໍ່ແມ່ຜູ້ປົກຄອງ ແລະ ຊຸມຊົນ ລວມທັງຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ ຢ່າງໜ້ອຍປີລະຄັ້ງ.

#### ວຽກບຸລິມະສິດ

- ຈັດຕັ້ງຂະບວນການປູກຈິດສຳນຶກກ່ຽວກັບເນື້ອໃນຂອງສົນທິສັນຍາ ວ່າດ້ວຍສິດທິເດັກ ແລະ ບັນດາອານຸສັນຍາເພີ່ມເຕີມ ໃຫ້ແກ່ສະມາຊິກສະພາ ແລະ ຜູ້ພິພາກສາ ເພື່ອຮັບປະກັນການຈັດຕັ້ງປະຕິບັດສົນທິສັນຍາດັ່ງກ່າວ ໃນການດຳເນີນຄະດີ ແລະ ຂະບວນການຍຸຕິທຳ.

- ຈັດຕັ້ງຂະບວນການປູກຈິດສຳນຶກ ໃຫ້ແກ່ເຈົ້າໜ້າທີ່ຕຳຫຼວດທົ່ວປະເທດ, ໂດຍສະເພາະແມ່ນເຈົ້າໜ້າທີ່ສືບສວນ-ສອບສວນ ກ່ຽວກັບການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ການຕ້ານການຄ້າຂາຍເດັກ ແລະ ຄ້າປະເວນີເດັກ.
- ສ້າງເຄື່ອງມືສຳລັບການປູກຈິດສຳນຶກ ກ່ຽວກັບຜົນກະທົບດ້ານລົບຂອງການໃຊ້ຢາເສບຕິດ ຜ່ານທາງອອນລາຍ, ພ້ອມທັງຈັດກິດຈະກຳເພື່ອປູກຈິດສຳນຶກຂອງຊຸມຊົນ ກ່ຽວກັບຜົນກະທົບດ້ານລົບຂອງການໃຊ້ຢາເສບຕິດປະເພດຕ່າງໆ ຜ່ານທາງອອນລາຍ, ໂທລະພາບ, ພ້ອມທັງປູກຈິດສຳນຶກໃຫ້ແກ່ເດັກ ແລະ ໄວໜຸ່ມ ໃຫ້ຫ່າງໄກຈາກຢາເສບຕິດ.
- ປູກຈິດສຳນຶກ ກ່ຽວກັບວິທີການລົງໂທດດ້ານບວກ ເພື່ອປ້ອງກັນບໍ່ໃຫ້ມີການລົງໂທດທາງດ້ານຮ່າງກາຍຢູ່ໃນຂະແໜງສຶກສາ.
- ຈັດຕັ້ງເຜີຍແຜ່ ເນື້ອໃນຂອງສົນທິສັນຍາວ່າດ້ວຍສິດທິເດັກ ແລະ ບັນດາອະນຸສັນຍາເພີ່ມເຕີມ ໃຫ້ແກ່ພະນັກງານວິຊາການຝ່າຍຕຸລາການ, ເຈົ້າໜ້າທີ່ຕຳຫຼວດ ແລະ ທະຫານ, ຄູ/ອາຈານ, ພະນັກງານຂະແໜງສາທາລະນະສຸກ, ນັກສັງຄົມສົງເຄາະ ແລະ ສື່ມວນຊົນ.
- ຈັດງານວັນເດັກສາກົນ ແລະ ວັນເດັກໂລກ ຮ່ວມກັບການໂຄສະນາຕ້ານການໃຊ້ຄວາມຮຸນແຮງຕໍ່ເດັກ ໃນທຸກໆປີ.
- ຈັດກິດຈະກຳ ວັນຕ້ານການນຳໃຊ້ແຮງງານເດັກສາກົນ ວັນທີ 12 ມິຖຸນາ ຂຶ້ນທຸກໆປີ ໂດຍສະແດງອອກຜ່ານສື່ໂຄສະນາຕ່າງໆ ໃນງານພິທີ ແລະ ກິດຈະກຳອື່ນໆ ຕາມເງື່ອນໄຂຕົວຈິງ ໃນຂັ້ນສູງກາງ ແລະ ທ້ອງຖິ່ນ.
- ປູກຈິດສຳນຶກໃນການສົ່ງເສີມການມີສ່ວນຮ່ວມຂອງເດັກຢ່າງມີຄວາມໝາຍສຳຄັນ ແລະ ສ້າງເງື່ອນໄຂທ່າແຮງ/ກາລະໂອກາດ ໃຫ້ເດັກທຸກຄົນໃນຄອບຄົວ, ໃນສັງຄົມ ແລະ ໃນໂຮງຮຽນ, ລວມທັງສະມາຄົມ/ສະພານັກຮຽນ ໃຫ້ມີສ່ວນຮ່ວມຫຼາຍຂຶ້ນ ໂດຍເອົາໃຈໃສ່ພິເສດຕໍ່ເດັກຍິງ ແລະ ເດັກທີ່ບອບບາງ ລວມທັງເດັກຍິງ ແລະ ເດັກຊາຍທີ່ຕົກຢູ່ໃນຄວາມສ່ຽງ.
- ປູກຈິດສຳນຶກກ່ຽວກັບຄວາມສຳຄັນຂອງການຈົດທະບຽນການເກີດ.
- ປູກຈິດສຳນຶກກ່ຽວກັບບັນຫາການລ່ວງລະເມີດທາງເພດ ແລະ ຮັບປະກັນວ່າເດັກທີ່ຖືກລ່ວງລະເມີດນັ້ນໃຫ້ຖືວ່າເປັນຜູ້ໄດ້ຮັບເຄາະຮ້າຍ ບໍ່ແມ່ນຜູ້ກະທຳຜິດ.
- ປູກຈິດສຳນຶກໃຫ້ແກ່ເດັກ, ຄອບຄົວ, ຊຸມຊົນ/ສັງຄົມ, ອຳນາດການປົກຄອງທ້ອງຖິ່ນ, ຜູ້ນຳສາສະໜາ ແລະ ຫົວໜ້າເຜົ່າ/ເຈົ້າກົກເຈົ້າເຫຼົ່າ, ຜູ້ພິພາກສາ ແລະ ໄອຍະການ ໃຫ້ເຫັນໄດ້ເຖິງຜົນກະທົບດ້ານລົບຂອງການແຕ່ງງານໃນໄວເດັກ ຫຼື ແຕ່ງງານກ່ອນໄວອັນຄວນ ຕໍ່ສຸຂະພາບກາຍ, ສຸຂະພາບໃຈ ແລະ ຄວາມເປັນຢູ່ທີ່ດີຂອງເດັກ.
- ປູກຈິດສຳນຶກໃຫ້ແກ່ພະນັກງານລັດ, ປະຊາຊົນທົ່ວໄປ ແລະ ຄອບຄົວຂອງເດັກພິການ ເພື່ອບໍ່ໃຫ້ເດັກທີ່ພິການນັ້ນຖືກຈຳແນກ ແລະ ດູຖູກ/ໝິ່ນປະໝາດ ດ້ວຍການສົ່ງເສີມພາບລັກທີ່ດີຂອງເດັກພິການ.
- ປູກຈິດສຳນຶກໃນການສົ່ງເສີມການເບິ່ງແຍງລ້ຽງດູລູກຫຼານຢ່າງມີຄວາມຮັບຜິດຊອບ ພ້ອມທັງສົ່ງເສີມ/ໃຫ້ຄຳແນະນຳກ່ຽວກັບພຶດຕິກຳທາງເພດທີ່ເໝາະສົມ ໂດຍສະເພາະແມ່ນເດັກຊາຍ.
- ປູກຈິດສຳນຶກໃນໂຮງຮຽນ ແລະ ຊຸມຊົນ/ສັງຄົມ ໃຫ້ເຫັນໄດ້ເຖິງຜົນກະທົບທີ່ເປັນອັນຕະລາຍຂອງການໃຊ້ແຮງງານເດັກ ແລະ ຄຸນຄ່າຂອງການສຶກສາ ເພື່ອປ້ອງບໍ່ໃຫ້ມີການໃຊ້ແຮງງານເດັກ.
- ສ້າງໃຫ້ມີການປູກຈິດສຳນຶກຢ່າງເປັນລະບົບ ເພື່ອສະກັດກັ້ນການກະທຳຜິດດັ່ງທີ່ໄດ້ກຳນົດໄວ້ຢູ່ໃນອະນຸສັນຍາເພີ່ມເຕີມນີ້ ພ້ອມທັງນຳໃຊ້ມາດຕະການປ້ອງກັນ ໂດຍແນໃສ່ເດັກທີ່ຖືກແບ່ງແບ່ງແຍກຈາກສັງຄົມແລະ ເດັກດ້ອຍໂອກາດ.
- ປຸກລະດົມເພື່ອໃຫ້ຄວາມຮູ້ແກ່ຊຸມຊົນ ກ່ຽວກັບຄວາມສ່ຽງຂອງລະເບີດບໍ່ທັນແຕກ ແລະ ຂະຫຍາຍໄປສູ່ຊຸມຊົນ ແລະ ເດັກໃນວົງກວ້າງ ພ້ອມທັງໃຫ້ການຊ່ວຍເຫຼືອຫຼາຍຂຶ້ນແກ່ຜູ້ທີ່ໄດ້ຮັບເຄາະຮ້າຍ.
- ຈັດຝຶກອົບຮົມໃຫ້ແກເດັກກ່ຽວກັບຄວາມປອດໄພຕາມທ້ອງຖະໜົນ, ປັດໄຈສ່ຽງຕ່າງໆທີ່ພາໃຫ້ເກີດອຸບັດເຫດ ແລະ ພຶດຕິກຳການຂັບຂີ່ທີ່ປອດໄພ ເພື່ອປ້ອງກັນອຸບັດເຫດ.
- ສືບຕໍ່ປູກຈິດສຳນຶກກ່ຽວກັບຄວາມປອດໄພຕາມທ້ອງຖະໜົນ ແລະ ເຂັ້ມງວດການປະຕິບັດກົດລະບຽບຈະລາຈອນ.
- ສະໜອງໂທລະໂຄ່ງຊຸມຊົນ ແລະ ວັດຖຸອຸປະກອນອື່ນໆ ສຳລັບການຝຶກອົບຮົມ ແລະ ກິດຈະກຳການປູກຈິດສຳນຶກ, ເພື່ອໃຫ້ສັງຄົມມີຄວາມເຂົ້າໃຈຫຼາຍຂຶ້ນ ແລະ ໃຫ້ຄວາມສຳຄັນຕໍ່ການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍສິດທິເດັກ ແລະ ບັນດາອະນຸສັນຍາເພີ່ມເຕີມ.
- ສ້າງອຸປະກອນ/ແຜ່ນໂປສເຕີ/ແຜ່ນພັບ ເພື່ອການໃຫ້ຂໍ້ມູນ, ໃຫ້ຄວາມຮູ້ ແລະ ການສື່ສານ ແລະ ຜະລິດຕະພັນສື່ຕ່າງໆ ເພື່ອເຜີຍແຜ່ນະໂຍບາຍຂອງພັກ-ລັດ, ນິຕິບັນຍັດ, ບັນດາກົດໝາຍທີ່ກ່ຽວຂ້ອງກັບວຽກງານແມ່ ແລະ ເດັກ ລວມທັງກົດໝາຍທີ່ກ່ຽວຂ້ອງກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຜ່ານທາງສື່, ສິ່ງພິມຕ່າງໆ, ໜັງສືພິມ, ບົດລະຄອນ, ບົດເພງ/ດົນຕີ ແລະ ຊ່ອງທາງການສື່ສານອື່ນໆ.
- ສ້າງ ແລະ ປັບປຸງລາຍການວິທະຍຸ ແລະ ລາຍການໂທລະພາບກ່ຽວກັບການປະຕິບັດສົນທິສັນຍາວ່າດ້ວຍສິດທິເດັກ ແລະ ບັນດາອານຸສັນຍາເພີ່ມເຕີມ; ຈັດຝຶກອົບຮົມໃຫ້ແກ່ນັກຈັດລາຍການວິທະຍຸ ແລະ ໂທລະພາບ ໃຫ້ເຂົ້າໃຈບັນດາກົດໝາຍ, ນິຕິບັນຍັດ, ໄພອັນຕະລາຍ ແລະ ຜົນກະທົບຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ; ຈັດຝຶກອົບຮົມກ່ຽວກັບວິທີ

ໂຄສະນາ/ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບກົດໝາຍຕ່າງໆ, ບົດບັນຍັດ, ໄພອັນຕະລາຍ ແລະ ຜົນກະທົບຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຜ່ານຫຼາຍສື່ອອນລາຍ.

- ໂຄສະນະສຶກສາອົບຮົມຄວາມສ່ຽງຈາກລະເບີດບໍ່ທັນແຕກ ໃຫ້ຊຸມຊົນ ແລະ ເດັກ ຢ່າງກວ້າງ ຂວາງ ແລະ ໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ໃຫ້ຫຼາຍຂຶ້ນ.

## 2.4.2.2 ແຜນວຽກຈຸດສຸມທີ 2.2: ສ້າງຖານຂໍ້ມູນ ແລະ ການສຶກສາ/ຄົ້ນຄວ້າຕ່າງໆ

### ບັນດາຕົວຊີ້ວັດ ແລະ ຄາດໝາຍ

- ມີຖານຂໍ້ມູນທີ່ເປັນລະບົບ ຢູ່ ສປປ ລາວ ກ່ຽວກັບເດັກ.
- ມີລະບົບຕິດຕາມ ບັນດາຕົວຊີ້ວັດທາງດ້ານສັງຄົມທີ່ແຍກຂໍ້ມູນ ກ່ຽວກັບເດັກ.
- ມີການບໍລິການຈົດທະບຽນການເກີດເພື່ອທຸກຄົນ ແລະ ບໍ່ໄດ້ເສຍຄ່າ ໃນການຈົດທະບຽນພົນລະເມືອງ.
- ສ້າງຖານຂໍ້ມູນ ກ່ຽວກັບເດັກ ໂດຍແຍກຕາມ ເພດ, ອາຍຸ, ຊົນເຜົ່າ ແລະ ເຂດທີ່ຕັ້ງພູມສັນຖານ.
- ສ້າງຖານຂໍ້ມູນ ແລະ ເກັບກຳສະຖິຕິ ກ່ຽວກັບເດັກທີ່ຖືກເຄາະຮ້າຍຈາກການຄ້າປະເວນີເດັກ, ເດັກທີ່ຕົກເປັນຜູ້ຕ້ອງຫາ, ອຸບັດເຫດ ກ່ຽວກັບເດັກ ແລະ ເດັກທີ່ພົວພັນກັບຢາເສບຕິດ ໂດຍແຍກຕາມເພດ, ອາຍຸ, ຊົນເຜົ່າ, ເຂດທີ່ຕັ້ງພູມສັນຖານ.
- ເຊື່ອມສານເອົາບັນດາຕົວຊີ້ວັດທີ່ຕິດພັນກັບເດັກ ໂດຍແຍກຕາມເພດ, ອາຍຸ, ຄວາມພິການ, ເຂດທີ່ຕັ້ງພູມສັນຖານ, ຊົນເຜົ່າ ແລະ ສະຖານະພາບດ້ານເສດຖະກິດ-ສັງຄົມ ໃນທຸກການສຳຫຼວດລະດັບປະເທດ ແລະ ລະດັບແຂວງ.

### ວຽກບຸລິມະສິດ

- ພັດທະນາ ແລະ ສ້າງລະບົບການເກັບກຳຂໍ້ມູນດ້ານສິດທິເດັກໃນລະດັບປະເທດ ພ້ອມທັງຮັບປະກັນການແລກປ່ຽນຂໍ້ມູນ ແລະ ບັນດາຕົວຊີ້ວັດ ລະຫວ່າງກະຊວງຕ່າງໆ ເພື່ອສ້າງເປັນນະໂຍບາຍ ແລະ ແຜນງານ ເພື່ອຕິດຕາມ ແລະ ປະເມີນການນຳໃຊ້ຂໍ້ມູນຂ່າວສານ ແລະ ບັນດາຕົວຊີ້ວັດ ເພື່ອການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍສິດທິເດັກ.
- ສະໜັບສະໜູນການເກັບຂໍ້ມູນປະຈຳ ແລະ ການນຳໃຊ້ຂໍ້ມູນດ້ານການສຶກສາ ໂດຍແຍກຕາມເພດ, ອາຍຸ, ຄວາມພິການ, ເຂດທີ່ຕັ້ງພູມສັນຖານ, ຊົນເຜົ່າ ແລະ ຄວາມພິການຂອງເດັກ.
- ດຳເນີນການສຳຫຼວດເພື່ອເກັບກຳຂໍ້ມູນ ກ່ຽວກັບສາເຫດ/ສິ່ງທີ່ເປັນແຮງຊຸກດັນຂອງການແຕ່ງດອງໃນໄວເດັກ ແລະ ການຖືພາໃນໄວເດັກ ຢູ່ ສປປ ລາວ.
- ຄົ້ນຄວ້ານິຕິກຳ ກ່ຽວກັບການປ້ອງກັນການຖືພາກ່ອນໄວອັນຄວນ, ການໃຫ້ຖືພາແທນ ແລະ ການໃຫ້ຫຼູລູກ.
- ເກັບກຳ, ຮຽບຮຽງ ແລະ ວິເຄາະຂໍ້ມູນຂ່າວສານກ່ຽວກັບເດັກໂດຍຖືກຕ້ອງຕາມກົດໝາຍ.
- ດຳເນີນການສຳຫຼວດ ແລະ ເກັບກຳຂໍ້ມູນ ກ່ຽວກັບເດັກທີ່ມີຄວາມພິການ.
- ປັບປຸງການເກັບກຳຂໍ້ມູນ, ການວິເຄາະ ແລະ ການນຳໃຊ້ຂໍ້ມູນຂ່າວສານດ້ານໂພຊະນາການຂອງເດັກ.

- ເກັບກຳຂໍ້ມູນຂ່າວສານຢ່າງເປັນລະບົບ ກ່ຽວກັບການກະທຳຜິດທີ່ພົວພັນເຖິງການຄ້າ (ຊື້-ຂາຍ) ເດັກ, ການຄ້າປະເວນີເດັກ ແລະ ສິ່ງລາມົກອະນາຈານກ່ຽວກັບເດັກ ລວມທັງການລາຍງານ, ການສືບສວນ-ສອບສວນ, ການດຳເນີນຄະດີ ແລະ ການລົງໂທດຕໍ່ຜູ້ກະທຳຜິດ.
- ເກັບກຳຂໍ້ມູນ ກ່ຽວກັບເດັກທີ່ມີຄວາມພິການ ເພື່ອສ້າງເປັນນະໂຍບາຍ ແລະ ແຜນງານທີ່ແທດເໝາະກັບເດັກພິການ, ໂດຍສະເພາະແມ່ນຜູ້ພິການ/ມີຄວາມບົກພ່ອງທາງຈິດ ແລະ ບົກພ່ອງທາງສະຕິປັນຍາ, ລວມທັງເດັກຊົນເຜົ່າທີ່ພິການ ແລະ ຜູ້ທີ່ຢູ່ເຂດຊົນນະບົດ.
- ມີການແລກປ່ຽນ, ນຳໃຊ້ຂໍ້ມູນຂ່າວສານ ແລະ ບັນດາຕົວຊີ້ວັດ ຮ່ວມກັນກັບກະຊວງຕ່າງໆ ເພື່ອສ້າງເປັນນະໂຍບາຍ ແລະ ແຜນງານ ເພື່ອຕິດຕາມ ແລະ ປະເມີນວຽກງານກ່ຽວກັບເດັກ.
- ດຳເນີນການຄົ້ນຄວ້າລົງເລິກ ໃນດ້ານຕ່າງໆທີ່ຍັງບໍ່ທັນມີຂໍ້ມູນ ເຊັ່ນ: ເດັກພິການ, ການຄ້າຂາຍເດັກ ແລະ ການຂູດຮີດ ຫຼື ເອົາລັດເອົາປຽບທາງເພດ, ເດັກຢູ່ສູນຟື້ນຟູ/ສະຖານກັກຂັງ ແລະ ເດັກທີ່ບໍ່ໄດ້ຮັບການເບິ່ງແຍງລ້ຽງດູຈາກຜູ້ປົກຄອງ.
- ສ້າງລະບົບການນຳໃຊ້ບັນດາຕົວຊີ້ວັດດ້ານສິດທິມະນຸດ ເພື່ອຈັດຕັ້ງປະຕິບັດ ແລະ ວັດແທກ (ກຳນົດ ຫຼື ວາງກອບເວລາ) ການເກັບກຳ ແລະ ເຜີຍແຜ່ຂໍ້ມູນສະຖິຕິ.
- ດຳເນີນການສຳຫຼວດ, ຄົ້ນຄວ້າ ແລະ ສ້າງຖານຂໍ້ມູນທີ່ຕິດພັນກັບການຈັດຕັ້ງປະຕິບັດ ສົນທິສັນຍາ ວ່າດ້ວຍສິດທິເດັກ ລວມທັງສອງອານຸສັນຍາເພີ່ມເຕີມ.



## 2.4.3 ແຜນງານທີ 3: ທົບທວນນະໂຍບາຍ - ນິຕິກຳ ແລະ ການຈັດຕັ້ງປະຕິບັດພັນທະຕໍ່ສາກົນ ແລະ ພາກພື້ນ

### 2.4.3.1 ແຜນວຽກຈຸດສຸມທີ 3.1: ທົບທວນນະໂຍບາຍ - ນິຕິກຳ ພາຍໃນ ເພື່ອໃຫ້ສອດຄ່ອງກັບນິຕິກຳສາກົນ ທີ່ ສປປ ລາວ ເປັນພາຄີ.

## ບັນດາຕົວຊີ້ວັດ ແລະ ຄາດໝາຍ

- ມີຂັ້ນຕອນ ແລະ ການຊ່ວຍເຫຼືອ ເດັກທີ່ຖືກຕ້ອງຕາມກົດໝາຍ ທີ່ໄດ້ນຳໃຊ້ເຂົ້າໃນການຊ່ວຍເຫຼືອ ແລະ ສົ່ງຕໍ່ເດັກ ໂດຍສອດຄ່ອງຕາມຫຼັກການສາກົນ.
- ມີກົດໝາຍສະບັບປັບປຸງ ເພື່ອສົ່ງເສີມການປູກຈິດສຳນຶກ ກ່ຽວກັບໄພອັນຕະລາຍ ແລະ ຜົນສະທ້ອນ/ຜົນກະທົບ ຂອງການຄ້າມະນຸດ.
- ມີການທົບທວນ, ປັບປຸງ ແລະ ສ້າງນະໂຍບາຍທີ່ເປັນມິດກັບເດັກ, ລະບຽບ-ກົດໝາຍ ທີ່ແທດເໝາະກັບເງື່ອນໄຂສະພາບແວດລ້ອມຂອງການພັດທະນາ ເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.

## ວຽກບູລິມະສິດ

- ສະໜັບສະໜູນການກຳນົດມາດຕະການ ເພື່ອສະກັດກັ້ນ ແລະ ລຶບລ້າງການສໍ້ລາດບັງຫຼວງ ລວມເຖິງການຄຸ້ມຄອງຊັບພະຍາກອນທີ່ບໍ່ມີປະສິດທິພາບ ທີ່ສົ່ງຜົນຕໍ່ການຈັດຕັ້ງປະຕິບັດວຽກງານສິດທິເດັກ, ໂດຍສອດຄ່ອງກັບເປົ້າໝາຍ ທີ 16.5 ຂອງເປົ້າໝາຍການພັດທະນາແບບຍືນຍົງກ່ຽວກັບການສໍ້ລາດບັງຫຼວງ ແລະ ສິນບົນທຸກຮູບແບບ.
- ສ້າງສຸດທະສາດທີ່ກວມລວມທຸກດ້ານທີ່ລວມເອົາບັນດາກິດຈະກຳ ແລະ ໜ້າວຽກສະເພາະທີ່ມີຈຸດປະສົງ ແລະ ເປົ້າໝາຍ, ລວມທັງວຽກງານດ້ານສັງຄົມ ເພື່ອລຶບລ້າງການຈຳແນກຕໍ່ເດັກທີ່ຖືກສັງຄົມແບ່ງແຍກ ຫຼື ເດັກທີ່ບອບບາງ/ຕົກຢູ່ໃນຄວາມສ່ຽງ, ໂດຍສະເພາະແມ່ນເດັກຍິງ, ເດັກຊົນເຜົ່າ ແລະ ເດັກຢູ່ເຂດຫ່າງໄກສອກຫຼີກ.
- ສຶກສາຄົ້ນຄວ້າເພື່ອທົບທວນທຸກກົດໝາຍ ແລະ ນະໂຍບາຍ ກ່ຽວກັບການແຕ່ງງານໃນໄວເດັກ ແລະ ການແຕ່ງງານກ່ອນໄວອັນຄວນ ໂດຍແນໃສ່ປັບປຸງລະບົບການຈັດຕັ້ງປະຕິບັດ ແລະ ການຕອບແກ້ໄຂບັນຫາເຫຼົ່ານີ້.
- ເອົາໃຈໃສ່ໃນການປັບປຸງລະບົບຕິດຕາມການຈັດຕັ້ງປະຕິບັດ ບັນດາກົດໝາຍ ແລະ ນະໂຍບາຍທີ່ກ່ຽວຂ້ອງກັບເດັກ, ລວມທັງການປະເມີນຜົນກະທົບຕໍ່ເດັກ ກ່ອນ ແລະ ຫຼັງການປະກາດໃຊ້ກົດໝາຍ ແລະ ນະໂຍບາຍ.
- ສະໜັບສະໜູນການປະຕິບັດສົນທິສັນຍາ ວ່າດ້ວຍສິດທິເດັກຢູ່ໃນຂະບວນການພິຈາລະນາໃນສານ, ຕອບສະໜອງດ້ານງົບປະມານ ແລະ ຊັບພະຍາກອນທີ່ພຽງພໍ ເພື່ອຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດອັນສູງສຸດຂອງເດັກ.
- ສະໜັບສະໜູນການມີສ່ວນຮ່ວມ ໃນການປັບປຸງທາງເລືອກຂອງການເບິ່ງແຍງລ້ຽງດູເດັກໂດຍພິຈາລະນາເຖິງຄວາມຕ້ອງການຂອງເດັກ.

- ສ້າງກົນໄກການປະສານງານ ແລະ ການຍັ້ງຢືນ, ປັບປຸງຄຸນນະພາບຂອງການຊ່ວຍເຫຼືອເພື່ອເດັກພິການ ແລະ ຄອບຄົວຂອງເຂົາເຈົ້າ, ລວມທັງການລະບຸຄວາມພິການ ແລະ ໃຫ້ການຊ່ວຍເຫຼືອຕັ້ງແຕ່ຫົວທີ ໂດຍເປົ້າໝາຍແມ່ນແນໃສ່ເດັກຊົນເຜົ່າ, ເດັກຢູ່ເຂດຊົນນະບົດ ແລະ ເດັກຜູ້ທີ່ທຸກຍາກ.
- ສ້າງມາດຕະການເພື່ອພັດທະນາການສຶກສາຮອບດ້ານໃຫ້ເປັນບູລິມະສິດ ແທນທີ່ຈະຈັດໃຫ້ເດັກຢູ່ສະຖາບັນ ຫຼື ຫ້ອງຮຽນສະເພາະ.
- ສະໜັບສະໜູນ ການປັບປຸງກົດໝາຍ ວ່າດ້ວຍການຕ້ານການຄ້າມະນຸດ ແລະ ນຳເອົາຜູ້ກະທຳຜິດມາດຳເນີນຄະດີ.
- ຮັບຮອງເອົາຍຸດທະສາດ ແລະ ນະໂຍບາຍແຫ່ງຊາດ ທີ່ພົວພັນເຖິງສິດຂອງເດັກທຸກຄົນ ດັ່ງທີ່ໄດ້ລະບຸໄວ້ຢູ່ໃນສົນທິສັນຍາ ວ່າດ້ວຍສິດທິເດັກ, ລວມທັງການສ້າງລະບົບປົກປ້ອງເດັກ.

## 2.4.3.2 ແຜນວຽກຈຸດສຸມ 3.2: ການຈັດຕັ້ງປະຕິບັດພັນທະສາກົນ

### ບັນດາຕົວຊີ້ວັດ ແລະ ຄາດໝາຍ

- ສົ່ງບົດລາຍງານສະບັບທີ 7 ຂອງລັດພາຄີ ກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາ ວ່າດ້ວຍສິດທິເດັກ ໃນປີ 2023.
- ປັບປຸງກົດໝາຍ ວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດ ຂອງເດັກ ທີ່ຄຳນຶງເຖິງສິດຂອງເດັກໃນການຖືກຮັບຟັງໃນຂະບວນການດຳເນີນຄະດີແພ່ງ ແລະ ຄະດີປົກຄອງທີ່ມີຜົນຕໍ່ເຂົາເຈົ້າ (ສອດຄ່ອງກັບມາດຕາ 12 ຂອງ ສົນທິສັນຍາ ວ່າດ້ວຍສິດທິເດັກ).
- ເຊື່ອມສານເອົາຂໍ້ສະເໜີແນະຂອງສະຫະປະຊາຊາດ ເຂົ້າໃນການສ້າງກົດໝາຍ, ຍຸດທະສາດ, ແຜນດຳເນີນງານ, ແຜນງານຂອງຂະແໜງການ ແລະ ທ້ອງຖິ່ນ ໃນແຕ່ລະໄລຍະ.

### ວຽກບຸລິມະສິດ

- ສ້າງບົດລາຍງານສະບັບທີ 7 ຂອງລັດພາຄີ ກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາ ວ່າດ້ວຍສິດທິເດັກແລະ ສອງອານຸສັນຍາເພີ່ມເຕີມ.
- ຈັດສັນງົບປະມານການລົງທຶນຈາກງົບປະມານຂອງລັດ ແລະ ການຊ່ວຍເຫຼືອລ້າຈາກຕ່າງປະເທດ ເພື່ອຈັດຕັ້ງປະຕິບັດສົນທິສັນຍາ ວ່າດ້ວຍສິດທິເດັກແລະ ສອງອານຸສັນຍາເພີ່ມເຕີມ.
- ປັບປຸງຄຸນນະພາບຂອງກົນໄກການປະສານງານຢູ່ແຕ່ລະຂັ້ນ ຜ່ານລະບົບທີ່ທັນສະໄໝ, ປັບປຸງຄຸນນະພາບຂອງບຸກຄະລາກອນເພື່ອຮັບປະກັນການສ້າງແຜນການຮ່ວມມື ທີ່ພົວພັນເຖິງສິດທິເດັກ ໃຫ້ສອດຄ່ອງກັບເປົ້າໝາຍຂອງຜູ້ໃຫ້ທຶນໃນລະດັບພາກພື້ນ ແລະ ໃນພາກພື້ນອາຊຽນ ທັງໃຫ້ສອດຄ່ອງກັບນະໂຍບາຍຕ່າງໆຂອງ ສປປ ລາວ.
- ສະໜັບສະໜູນ ແລະ ຕິດຕາມບັນດາຂະແໜງການ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດສົນທິສັນຍາສາກົນ, ບັນດາຂໍ້ຕົກລົງ ແລະ ອານຸສັນຍາເພີ່ມເຕີມ, ລວມທັງບັນດາເປົ້າໝາຍການພັດທະນາແບບຍືນຍົງທີ່ພົວພັນເຖິງສິດທິເດັກ.
- ຮ່ວມມືກັບບັນດາຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ, ທັງພາຍໃນ ແລະ ສາກົນ ເພື່ອຊອກຫາການສະໜັບສະໜູນດ້ານການເງິນ ແລະ ດ້ານວິຊາການ ສຳລັບການຈັດຕັ້ງປະຕິບັດວຽກງານສິດທິເດັກ.

## 2.4.3.3 ແຜນວຽກຈຸດສຸມ 3.3: ການຈັດຕັ້ງປະຕິບັດພັນທະອາຊຽນ

### ບັນດາຕົວຊີ້ວັດ ແລະ ຄາດໝາຍ

- ມີລະບົບຕິດຕາມ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ບັນດາພັນທະຜູກພັນຂອງລັດຖະບານຕໍ່ສົນທິສັນຍາ, ຖະແຫຼງການ ອາຊຽນ ທີ່ພົວພັນເຖິງສິດທິເດັກ.
- ຈຳນວນຄັ້ງ ທີ່ເດັກມີສ່ວນຮ່ວມໃນກອບວຽກຂອງ ຄະນະກຳມະການອາຊຽນ ສົ່ງເສີມ ແລະ ປົກປ້ອງສິດທິຂອງແມ່ຍິງ ແລະ ເດັກ.
- ມີບົດລາຍງານການຈັດຕັ້ງປະຕິບັດຖະແຫຼງການ ອາຊຽນ ກ່ຽວກັບສິດທິເດັກ ໃນແຈ່ລະໄລຍະ.

### ວຽກບຸລິມະສິດ

- ສະໜັບສະໜູນການເຊື່ອມສານ ແລະ ການຈັດຕັ້ງປະຕິບັດຖະແຫຼງການພາກພື້ນ ແລະ ຖະແຫຼງການ ອາຊຽນ ທີ່ພົວພັນເຖິງສິດທິເດັກ ດ້ວຍການເພີ່ມທະວີການຮ່ວມມືສອງຝ່າຍ ຫຼື ຫຼາຍຝ່າຍກັບບັນດາປະເທດໃນພາກພື້ນ ແລະ ບັນດາປະເທດສະມາຊິກອາຊຽນ.
- ສະໜັບສະໜູນການເຜີຍແຜ່ຂໍ້ມູນ ແລະ ຂ່າວສານກ່ຽວກັບສິດທິເດັກໃນພາກພື້ນອາຊຽນ.
- ລະດົມເອົາການຊ່ວຍເຫຼືອດ້ານງົບປະມານ ແລະ ດ້ານວິຊາການຈາກບັນດາປະເທດພາກພື້ນອາຊຽນ.

## 2.4.3.4 ແຜນວຽກຈຸດສຸມທີ 3.4: ການຮ່ວມມືກັບບັນດາ ປະເທດໃນພາກພື້ນອາຊີ-ປາຊີຟິກ

### ບັນດາຕົວຊີ້ວັດ ແລະ ຄາດໝາຍ

- ຈຳນວນຄັ້ງຂອງການຢ້ຽມຢາມ ຕາມຂອບການຮ່ວມມື ໃຕ້-ໃຕ້ ຂອງບັນດາປະເທດອາຊີ-ປາຊີຟິກ ໃນດ້ານ (i) ການຫລຸດຜ່ອນຄວາມສ່ຽງຈາກໄພພິບັດ; (ii) ການປົກປ້ອງເດັກ ແລະ ລະບົບສະຫວັດດີການຕ່າງໆ; ແລະ (iii) ຮັບປະກັນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີຄວາມສະເໝີພາບ ແລະ ເຂົ້າເຖິງເດັກທຸກຄົນ ໃຫ້ໄດ້ຢ່າງໜ້ອຍ 2 ຄັ້ງຕໍ່ປີ.

### ວຽກບູລິມະສິດ

- ປັບປຸງລະບົບປົກປ້ອງເດັກຢູ່ ສປປ ລາວ, ໂດຍສະເພາະແມ່ນລະບົບປົກປ້ອງ ແລ ະຊ່ວຍເຫຼືອເດັກຢູ່ຂັ້ນບ້ານ ແລະ ໃນໂຮງຮຽນ.
- ສືບຕໍ່ປູກຈິດສຳນຶກ ເພື່ອໃຫ້ສັງຄົມຄຳນຶງເຖິງ/ມີຄວາມສຳນຶກ ແລະ ເຂົ້າໃຈ ຕໍ່ຜົນສະທ້ອນຂອງການໃຊ້ຄວາມຮຸນແຮງຕໍ່ເດັກ.
- ໃຫ້ບູລິມະສິດໃນການປັບປຸງ ການບໍລິການຮັກສາສຸຂະພາບແບບຄົບວົງຈອນ ຢູ່ເຂດຫ່າງໄກສອກຫຼີກ.
- ເຂົ້າຮ່ວມແລກປ່ຽນ ແລະ ຖອດຖອນບົດຮຽນ ກ່ຽວກັບການຈັດຕັ້ງປະຕິບັດຖະແຫຼງການ ພາຍໃຕ້ຂອບການຮ່ວມມື ໃຕ້-ໃຕ້ ຈາກບັນດາປະເທດໃນພາກພື້ນ.



## 2.4.4 ແຜນງານທີ 4: ສ້າງຄວາມເຂັ້ມແຂງໃຫ້ກົງຈັກການຈັດຕັ້ງ ແລະ ບຸກຄະລາກອນທີ່ເຮັດວຽກ ສິດທິເດັກ.

### 2.4.4.1 ແຜນວຽກຈຸດສຸມທີ 4.1: ສ້າງຄວາມເຂັ້ມແຂງ ໃຫ້ກົງຈັກ ການຈັດຕັ້ງ ຂອງຄະນະກຳມະການເພື່ອຄວາມກ້າວໜ້າ ຂອງແມ່ຍິງ ແລະ ແມ່-ເດັກ ແຕ່ລະຂັ້ນ.

#### ບັນດາຕົວຊີ້ວັດ ແລະ ຄາດໝາຍ

- ມີໂຄງຮ່າງການຈັດຕັ້ງທີ່ເປັນລະບົບຄົບຊຸດ ສຳລັບຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ແລະ ໜ່ວຍງານຊ່ວຍວຽກຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ.
- ຈຳນວນຄັ້ງຂອງການຈັດຝຶກອົບຮົມກ່ຽວກັບສິດທິເດັກ ໃຫ້ແກ່ພະນັກງານຂອງຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າ ຂອງແມ່ຍິງ ແລະ ແມ່-ເດັກ ແລະ ພະນັກງານໃນໜ່ວຍງານຊ່ວຍວຽກຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ໄດ້ຢ່າງໜ້ອຍ 3 ຄັ້ງຕໍ່ປີ.
- ອັດຕາການເພີ່ມຂຶ້ນຂອງງົບປະມານສຳລັບການພັດທະນາຊັບພະຍາກອນມະນຸດ ຂອງຄະນະກຳມາທິການແຫ່ງຊາດເພື່ອຄວາມ ກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຢູ່ແຕ່ລະຂັ້ນ ຢ່າງໜ້ອຍ 8  10 % ຂອງງົບປະມານ ຂອງຂະແໜງການ.

#### ວຽກບຸລິມະສິດ

- ສ້າງໂຄງຮ່າງການຈັດຕັ້ງທີ່ເປັນລະບົບຄົບຊຸດ ສຳລັບຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຢູ່ແຕ່ລະຂັ້ນໃນຂອບເຂດທົ່ວປະເທດ ພ້ອມທັງປະເມີນຜົນການປະຕິບັດວຽກງານຂອງຄະນະກຳມາທິການແຫ່ງຊາດເພື່ອ ຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ໃນນາມເປັນເສນາທິການໃຫ້ແກ່ການນຳຂັ້ນແຂວງ ໃນການປະຕິບັດວຽກງານ ດ້ານຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ວຽກງານພັດທະນາເດັກ ກໍ່ຄື ການຈັດຕັ້ງປະຕິບັດສົນທິສັນຍາ ວ່າດ້ວຍການ ລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (CEDAW) ແລະ ສົນທິສັນຍາ ວ່າດ້ວຍສິດທິເດັກ (CRC).
- ຕອບສະໜອງດ້ານງົບປະມານ ແລະ ຊັບພະຍາກອນມະນຸດ ໃຫ້ແກ່ຄະນະກຳມະການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຢູ່ແຕ່ລະຂັ້ນ ເພື່ອໃຫ້ສາມາດຕັດຕັ້ງປະຕິບັດວຽກງານສົ່ງເສີມ ແລະ ພັດທະນາເດັກ ໃນແຕ່ລະໄລຍະ.
- ສ້າງຄວາມເຂັ້ມແຂງໃຫ້ແກ່ກອງເລຂາຊ່ວຍວຽກ ຂອງຄະນະກຳມະການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຢູ່ ແຕ່ລະຂັ້ນ, ໃນການຕິດຕາມ, ການຈັດຕັ້ງປະຕິບັດ, ການລາຍງານການສະຫຼຸບ ແລະ ຕີລາຄາການຈັດຕັ້ງປະຕິບັດກົດໝາຍ, ຍຸດທະສາດ, ແຜນການ ແລະ ແຜນງານ ກ່ຽວກັບການສົ່ງເສີມ ແລະ ພັດທະນາເດັກ.
- ສ້າງຄວາມເຂັ້ມແຂງໃຫ້ແກ່ກອງເລຂາຊ່ວຍວຽກຢູ່ແຕ່ລະຂັ້ນ ໃນການຕິດຕາມ, ການຈັດຕັ້ງປະຕິບັດ, ການລາຍງານການ ສະຫຼຸບ ແລະ ຕີລາຄາການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍສິດທິເດັກ ແລະ 2 ອະນຸສັນຍາເພີ່ມເຕີມ, ການປະຕິບັດບັນດາ ເປົ້າໝາຍການພັດທະນາແບບຍືນຍົງ ແລະ ຖະແຫຼງການສາກົນ ແລະ ພາກພື້ນ ກ່ຽວກັບການສົ່ງເສີມ ແລະ ພັດທະນາເດັກ.
- ສ້າງຄວາມເຂັ້ມແຂງໃຫ້ແກ່ກອງເລຂາຊ່ວຍວຽກຢູ່ແຕ່ລະຂັ້ນ ໃນການເຊື່ອມສານແຜນດຳເນີນງານແຫ່ງຊາດ ເພື່ອແມ່ແລະເດັກ ເຂົ້າໃນແຜນວຽກຂອງຂະແໜງການ ແລະ ທ້ອງຖິ່ນ, ລວມທັງແຜນເງິນ ແລະ ແຜນຄົນ.

## 2.4.4.2 ແຜນວຽກຈຸດສຸມທີ 4.2: ປັບປຸງກົນໄກການປະສານງານ ພາກສ່ວນຕ່າງໆທີ່ເຮັດວຽກສິດທິເດັກ

### ບັນດາຕົວຊີ້ວັດ ແລະ ຄາດໝາຍ

- ມີຖອດຖອນບົດຮຽນ ກົນໄກການປະສານງານ, ກົນໄກການຈັດຕັ້ງປະຕິບັດ ແລະ ກົນໄກການລາຍງານກ່ຽວກັບວຽກງານດ້ານສິດທິເດັກ ຢ່າງໜ້ອຍປີລະ 1 ຄັ້ງ.

### Priority actions

- ຈັດກອງປະຊຸມຮ່ວມລະຫວ່າງຂະແໜງການ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອລາຍງານການຈັດຕັ້ງປະຕິບັດວຽກງານດ້ານສິດທິເດັກ ທຸກໆ 2 ປີ ຊຶ່ງລວມມີ: ຄະນະສະມາຊິກສະພາແຫ່ງຊາດເພດຍິງ, ສະຫະພັນແມ່ຍິງ, ສູນກາງສະຫະພັນແມ່ຍິງລາວ ແລະ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ເພື່ອເຮັດໃຫ້ການປະສານງານມີຄວາມໂລ່ງລ່ຽນ ແລະ ເປັນເອກະພາບຫຼາຍຂຶ້ນ ຕາມພາລະບົດບາດຂອງແຕ່ລະພາກສ່ວນ.
- ປັບປຸງກົນໄກການປະສານງານລະຫວ່າງ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ແລະ ກອງເລຂາຢູ່ແຕ່ລະຂັ້ນ ໃຫ້ມີຄວາມວ່ອງໄວ, ທັນສະໄໝ ແລະ ມີປະສິດທິຜົນ.
- ປັບປຸງກົນໄກການປະສານງານລະຫວ່າງ ຄະນະກຳມະການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຂອງຂະແໜງການ ແລະ ຂອງພະແນກການ ແລະ ກົມກອງຕ່າງໆໃນຂະແນງການດຽວກັນ; ຄະນະກຳມະການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຢູ່ຂັ້ນທ້ອງຖິ່ນ ແລະ ບັນດາພະແນກການອ້ອມຂ້າງຂັ້ນແຂວງ ແລະ ຂັ້ນເມືອງ.

## 2.4.4.3 ແຜນວຽກຈຸດສຸມທີ 4.3: ບຸກຄະລາກອນທີ່ເຮັດວຽກດ້ານສິດທິເດັກ

### ບັນດາຕົວຊີ້ວັດ ແລະ ຄາດໝາຍ

- ມີບົດລາຍງານປະຈຳປີ ກ່ຽວກັບຜົນການຈັດຕັ້ງປະຕິບັດບັນດາຂໍ້ສະເໜີແນະ ຂອງ ສປຊ ແລະ ການປະຕິບັດແຜນດຳເນີນງານແຫ່ງຊາດ.

### Priority actions

- ຮັບສະໝັກພະນັກງານ/ບຸກຄະລາກອນ ແລະ ສ້າງຄວາມອາດສາມາດໃຫ້ແກ່ກອງເລຂາ, ທັງຂັ້ນແຂວງ ແລະ ຂັ້ນເມືອງ ເພື່ອໃຫ້ສາມາດປະຕິບັດພາລະບົດບາດ ແລະ ໜ້າທີ່ຂອງເຂົາເຈົ້າ ຢູ່ແຕ່ລະຂັ້ນ.
- ໃຫ້ລາງວັນ ຫຼື ຍ້ອງຍໍ ບຸກຄົນທີ່ມີຜົນງານພົ້ນເດັ່ນໃນການຈັດຕັ້ງປະຕິບັດວຽກງານສິດທິເດັກ ຢູ່ ສປປ ລາວ (ປະຈຳປີ).

## 2.4.5 ແຜນງານທີ 5: ຫຼຸດຜ່ອນຈຳນວນເດັກທີ່ທຸກຍາກ ແລະ ດ້ອຍໂອກາດໃນຫຼາຍໆດ້ານ ຫຼື ເດັກທີ່ຢູ່ໃນຄົວເຮືອນທຸກຍາກ.

2.4.5.1 ແຜນວຽກຈຸດສຸມທີ 5.1. ສ້າງຄວາມອາດສາມາດໃຫ້ແກ່ພະນັກງານ ແລະ ອຳນາດການປົກຄອງທຸກຂັ້ນ ເພື່ອຫຼຸດຜ່ອນຄວາມທຸກຍາກຂອງເດັກໃນທຸກໆດ້ານ.

### ບັນດາຕົວຊີ້ວັດ ແລະ ຄາດໝາຍ:

- ອັດຕາຄວາມທຸກຍາກຂອງເດັກຢູ່ແຕ່ລະແຂວງ ຫຼື ດ້ອຍໂອກາດຢ່າງໜ້ອຍ 3 ດ້ານ ໃຫ້ຫລຸດລົງ ຫຼື 25%.
- ເປີເຊັນ ຫຼື ອັດຕາສ່ວນຂອງພາກເອກະຊົນທີ່ປະຕິບັດຕາມຫຼັກການດຳເນີນທຸລະກິດ ແລະ ຫຼັກການດ້ານສິດທິເດັກ ໃຫ້ເພີ່ມຂຶ້ນໃນແຕ່ລະປີ.
- ກຳນົດມາດຕະຖານເພື່ອວັດແທກຄວາມທຸກຍາກຂອງເດັກ ໂດຍໃຊ້ມາດຕະຖານວັດແທກທີ່ຄິດໄລ່ເປັນເງິນ ແລະ ມາດຕະຖານດ້ານເງື່ອນໄຂໃນການເຂົ້າເຖິງຄວາມຈຳເປັນພື້ນຖານໃນການດຳລົງຊີວິດ ແລະ ການບໍລິການຕ່າງໆ.
- ມີການສະໜັບສະໜູນ ແລະ ການຖືເອົາບັນຫາຄວາມທຸກຍາກຂອງເດັກ ໃຫ້ເປັນວຽກງານບູລິມະສິດ.

### ວຽກບຸລິມະສິດ

- ຈັດກອງປະຊຸມປະຈຳປີເພື່ອທົບທວນການປະຕິບັດຂໍ້ລິເລີ່ມຄົນລາວ ລຸ້ນປີ 2030 ຮ່ວມກັບການສະເຫຼີມສະຫຼອງວັນເດັກໂລກ ວັນທີ 20 ພະຈິກ, ໂດຍການເຂົ້າຮ່ວມຂອງພາກສ່ວນຕ່າງໆທີ່ກ່ຽວຂ້ອງ, ອົງການຈັດຕັ້ງຂອງລັດຖະບານ, ອຳນາດການປົກຄອງຂັ້ນສູນກາງ ແລະ ທ້ອງຖິ່ນ, ອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ພາກເອກະຊົນ, ບັນດາຄູ່ຮ່ວມພັດທະນາ, ເດັກ ແລະ ໄວໜຸ່ມ.
- ຈັດກອງປະຊຸມປະຈຳປີ ເພື່ອສະຫຼຸບຜົນການຈັດຕັ້ງປະຕິບັດຄວາມໝາຍໝັ້ນ ຂອງບັນດາຮອງເຈົ້າແຂວງ.
- ຈັດກອງປະຊຸມປະຈຳປີ ເພື່ອສະຫຼຸບຜົນການຈັດຕັ້ງປະຕິບັດຄວາມໝາຍໝັ້ນ ຂອງພາກທຸລະກິດເອກະຊົນ.
- ຈັດກອງປະຊຸມປະຈຳປີ ເພື່ອສະຫຼຸບຜົນການຈັດຕັ້ງປະຕິບັດຄວາມໝາຍໝັ້ນ ຂອງບັນດາອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ.
- ສ້າງຄວາມອາດສາມາດໃຫ້ແກ່ສູນສະຖິຕິແຫ່ງຊາດ ແລະ ວິຊາການທີ່ເຮັດວຽກກ່ຽວກັບການວັດແທກຄວາມທຸກຍາກ ແລະ ຕິດຕາມສະພາບຄວາມທຸກຍາກ ແລະ ຄວາມດ້ອຍໂອກາດໃນດ້ານຕ່າງໆຂອງເດັກ.

  ສະໜັບສະໜູນການຄິດໄລ່ ອັດຕາຄວາມທຸກຍາກໃນຫຼາຍດ້ານຂອງເດັກຢ່າງເປັນປະຈຳ ເທົ່າທີ່ມີຂໍ້ມູນ (LECS, LSIS)

## 2.4.5.2 ແຜນວຽກຈຸດສຸມທີ 5.2: ປັບປຸງກົນໄກການປະສານງານ ແລະ ລະບົບປົກປ້ອງສັງຄົມເພື່ອແມ່ ແລະ ເດັກ ຢູ່ ສປປ ລາວ.

### ບັນດາຕົວຊີ້ວັດ ແລະ ຄາດໝາຍ

- ຈຳນວນເດັກໃນຊ່ວງອາຍຸ 1.000 ມື້ທຳອິດ ທີ່ໄດ້ຮັບເງິນອຸດໜູນ ໃນແຕ່ລະປີ.
- ມີກົນໄກການປະສານງານຂັ້ນສູນກາງ ແລະ ທ້ອງຖິ່ນສຳລັບວຽກງານປົກປ້ອງສັງຄົມ.
- ຈຳນວນແມ່ຍິງຈາກບັນດາບ້ານທີ່ທຸກຍາກທີ່ສຸດ ທີ່ໄດ້ຮັບການຊ່ວຍເຫຼືອ/ສະໜັບສະໜູນດ້ານທຶນຮອນ ແລະ ທັກສະໃນການລິເລີ່ມທຸລະກິດ ໃນແຕ່ລະປີ.
- ຈຳນວນແມ່ຍິງຖືພາທີ່ໄດ້ຮັບຜົນປະໂຫຍດ ຈາກການບໍລິການຮັກສາສຸຂະພາບໂດຍບໍ່ເສຍຄ່າ ໃນແຕ່ລະປີ.
- ອັດຕາສ່ວນຂອງຄົວເຮືອນທີ່ໄດ້ເຂົ້າລະບົບປະກັນສຸຂະພາບແຫ່ງຊາດ ໃນແຕ່ລະປີ.
- ອັດຕາສ່ວນການປະກອບທຶນສົມທົບຂອງລັດຖະບານເຂົ້າກອງທຶນປົກປ້ອງສັງຄົມ ຫຼື ກອງທຶນປະກັນສັງຄົມ (2 5% ຂອງງົບປະມານທັງໝົດຂອງລັດຖະບານ) ໃນແຕ່ລະປີ.

### ວຽກບູລິມະສິດ

- ສະໜັບສະໜູນການຈັດຕັ້ງປະຕິບັດ ແລະ ຂະຫຍາຍກອງທຶນຊ່ວຍເຫຼືອລ້າເພື່ອການສຶກສາກ່ອນໄວຮຽນ ໃຫ້ແກ່ຄອບຄົວ/ຄົວເຮືອນທຸກຍາກ.

  ພັດທະນາທັກສະວິຊາຊີບ ແລະ ກອງທຶນຊ່ວຍເຫຼືອລ້າໃນການເລີ່ມຕົ້ນທຸລະກິດ ໃຫ້ແກ່ແມ່ຍິງຢູ່ຂັ້ນບ້ານ.
- ລິເລີ່ມໂຄງການປະກັນສັງຄົມ ແລະ ປະກັນສຸຂະພາບຊຸມຊົນ ຢູ່ ສປປ ລາວ.
- ດຳເນີນການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ.
- ຄົ້ນຄວ້າດ້ານງົບປະມານ ແລະ ຜົນໄດ້ຮັບຈາກການລົງທຶນເຂົ້າໃນວຽກງານການປົກປ້ອງສັງຄົມ ຢູ່ ສປປ ລາວ ໃຫ້ມີຄວາມຄືບໜ້າ ແລະ ປາກົດຜົນເປັນຈິງ.

# ພາກທີ III

## ກົນໄກການຈັດຕັ້ງປະຕິບັດ ແຜນດຳເນີນງານແຫ່ງຊາດເພື່ອແມ່ແລະເດັກ 5 ປີ ຄັ້ງທີ III (2021-2025)

### 1. ແຫຼ່ງງົບປະມານ

ແຫຼ່ງງົບປະມານທີ່ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດ ແຜນດຳເນີນງານແຫ່ງຊາດໃນຄັ້ງນີ້ ແມ່ນມາຈາກພາຍນອກ (ການກູ້ຢືມຈາກຕ່າງປະເທດ) ແລະ ຈາກການຊ່ວຍເຫຼືອລ້າ.

**ແຫຼ່ງງົບປະມານຈາກພາຍໃນ:** ກະຊວງແຜນການ ແລະ ການລົງທຶນ, ໂດຍສົມທົບກັບກະຊວງການເງິນ, ຈະທົບທວນ ແລະ ຈັດສັນງົບປະມານທີ່ເໝາະສົມ ໃຫ້ແຕ່ລະຂະແໜງການ ແລະ ຂັ້ນທ້ອງຖິ່ນ ສຳລັບການຈັດຕັ້ງປະຕິບັດ ແຜນດຳເນີນງານແຫ່ງຊາດ ເພື່ອແມ່ແລະເດັກ 5 ປີ ຄັ້ງທີ (2021-2025). ບັນດາຂະແໜງການ ແລະ ທ້ອງຖິ່ນ ຈະຕ້ອງຈັດສັນງົບປະມານຂອງຕົນ ເພື່ອການຈັດຕັ້ງປະຕິບັດວຽກງານແມ່ແລະເດັກ, ລວມທັງວຽກງານສິດທິເດັກ.

**ແຫຼ່ງງົບປະມານຈາກການຊ່ວຍເຫຼືອລ້າ:** ຕ້ອງເພີ່ມທະວີການຮ່ວມມືກັບບັນດາປະເທດໃກ້ຄຽງ, ບັນດາອົງການຈັດຕັ້ງສາກົນ, ສະຖາບັນການເງິນຕ່າງໆ, ບັນດາອົງການຈັດຕັ້ງທາງສັງຄົມ, ບຸກຄົນ ແລະ ນິຕິບຸກຄົນ, ທັງພາຍໃນ ແລະ ຕ່າງປະເທດ ເພື່ອຊອກຫາການຊ່ວຍເຫຼືອດ້ານແຫຼ່ງທຶນ/ງົບປະມານ ແລະ ດ້ານວິຊາການ.

# 2. ກົນໄກການຈັດຕັ້ງປະຕິບັດ

## 2.1 ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ

ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ມີພາລະບົດບາດໃນການຊີ້ນຳ-ນຳພາການຈັດຕັ້ງປະຕິບັດ ແຜນດຳເນີນງານແຫ່ງຊາດ ເພື່ອແມ່ແລະເດັກ 5 ປີ ຄັ້ງທີ III (2021-2025) ແລະ ສ້າງເປັນແຜນວຽກລະອຽດ, ໂຄງການ ແລະ ກິດຈະກຳຕ່າງໆຂອງແຕ່ລະຂົງເຂດວຽກງານ. ຫ້ອງການກອງເລຂາ ຂອງຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ມີບົດບາດໃນການສະໜັບສະ ໜູນ ແລະ ປະສານງານ ກັບພະແນກສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຂອງບັນດາກະຊວງ ແລະ ອົງການຕ່າງໆ ແລະ ປະສານສົມທົບກັບຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ເພື່ອໃຫ້ແຕ່ລະພາກສ່ວນປະຕິບັດພາລະບົດບາດ ໃນການຜັນຂະຫຍາຍ ແຜນດຳເນີນງານແຫ່ງຊາດວຽກ ເພື່ອແມ່ແລະເດັກ 5 ປີ ຄັ້ງທີ III (2021-2025) ໃຫ້ເປັນແຜນວຽກ, ໂຄງການ ແລະ ກິດຈະກຳລະອຽດ/ສະເພາະຂອງແຕ່ລະພາກສ່ວນ. ພ້ອມດຽວກັນນັ້ນ, ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຈະຊອກຫາຊັບພະຍາກອນທີ່ສອດຄ່ອງກັບງົບປະມານຂອງລັດ ເພື່ອຮັບປະກັນການຈັດຕັ້ງປະຕິບັດ ແລະ ເພື່ອບັນລຸບັນດາເປົ້າໝາຍຂອງແຜນຍຸດທະສາດດັ່ງກ່າວ.

## 2.2 ຄະນະກຳມະການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຂັ້ນກະຊວງ/ຂະແໜງການ ແລະ ທ້ອງຖິ່ນ

ຄະນະກຳມະການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຂັ້ນກະຊວງ/ຂະແໜງການ ແລະ ທ້ອງຖິ່ນ ເປັນອົງການ/ຕົວແທນຈັດຕັ້ງປະຕິບັດ ແລະ ເປັນຈຸດປະສານງານ ຢູ່ແຕ່ລະກະຊວງ, ຂະແໜງການ ແລະ ທ້ອງຖິ່ນ ເພື່ອຈັດຕັ້ງຜັນຂະຫຍາຍແຜນດຳເນີນງານແຫ່ງຊາດ ຄັ້ງທີ III ໃຫ້ເປັນແຜນການ, ແຜນງານ, ໂຄງການ ແລະ ແຜນເງິນ/ແຜນງົບປະມານ ທີ່ສອດຄ່ອງຕາມແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນ ໃນແຕ່ລະໄລຍະ.

## 2.3 ບັນດາຂະແໜງການ ແລະ ອົງການຂັ້ນສູນກາງ ແລະ ທ້ອງຖິ່ນ

**ສູນກາງແນວລາວສ້າງຊາດ** ຮັບຜິດຊອບໃນການສຶກສາອົບຮົມ/ໃຫ້ຄວາມຮູ້ ແລະ ເຜີຍແຜ່ຂໍ້ມູນຂ່າວສານ, ໂດຍສະເພາະແມ່ນປະຊາຊົນບັນດາເຜົ່າທີ່ຢູ່ເຂດຫ່າງໄກສອກຫຼີກ ເພື່ອເຮັດໃຫ້ເຂົາເຈົ້າເຂົ້າໃຈນະໂຍບາຍຕ່າງໆຂອງພັກ ແລະ ລັດຖະບານ ກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດສູງສຸດຂອງເດັກ.

**ຂະແໜງແຜນການ ແລະ ການລົງທຶນ** ຮັບຜິດຊອບໃນການເຊື່ອມສານ ແຜນດຳເນີນງານແຫ່ງຊາດວຽກງານແມ່ ແລະ ເດັກ 5 ປີ ຄັ້ງທີ (2021-2025) ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ ໃນແຕ່ລະໄລຍະ. ປະສານສົມທົບກັບບັນດາພາກສ່ວນກ່ຽວຂ້ອງ ເພື່ອເກັບກຳຂໍ້ມູນ ແລະ ສ້າງຖານຂໍ້ມູນກ່ຽວກັບແມ່ ແລະ ເດັກທີ່ລະອຽດຄົບຖ້ວນ ແລະ ເຊື່ອຖືໄດ້ ເພື່ອໃຊ້ເປັນບ່ອນອີງພື້ນຖານໃຫ້ແກ່ການວາງນະໂຍບາຍ, ຍຸດທະສາດ ແລະ ກົດໝາຍ ກ່ຽວກັບການພັດທະນາເດັກໃນແຕ່ລະໄລຍະ.

**ຂະແໜງການເງິນ** ຮັບຜິດຊອບໃນການຈັດສັນ ແລະ ສະໜອງງົບປະມານຂອງລັດຢ່າງເໝາະສົມ ເພື່ອຮັບປະກັນຜົນສຳເລັດຂອງການຈັດຕັ້ງປະຕິບັດ ແຜນດຳເນີນງານແຫ່ງຊາດວຽກງານແມ່ ແລະ ເດັກ 5 ປີ ຄັ້ງທີ (2021-2025).

**ຂະແໜງສຶກສາທິການ ແລະ ກິລາ** ຮັບຜິດຊອບກ່ຽວກັບການສຶກສາຂອງເດັກ ເປັນຕົ້ນແມ່ນ ສ້າງເງື່ອນໄຂສະພາບແວດລ້ອມໃຫ້ເດັກທຸກຄົນໄດ້ຮຽນຈົບການສຶກສາຊັ້ນປະຖົມ ແລະ ມັດທະຍົມພາກບັງຄັບ ແລະ ປັບປຸງຄຸນນະພາບຂອງການສຶກສາ ເພື່ອໃຫ້ເດັກເຫັນໄດ້ທ່າແຮງດ້ານຄວາມຮູ້ຄວາມສາມາດຂອງເຂົາເຈົ້າ ເມື່ອກາຍເປັນຜູ້ໃຫຍ່ໃນອະນາຄົດ.

**ຂະແໜງສາທາລະນະສຸກ** ຮັບຜິດຊອບໃນການຮັບປະກັນ ການສະໜອງການບໍລິການດ້ານສຸຂະພາບທີ່ມີຄຸນນະພາບໃຫ້ແກ່ປະຊາຊົນ ການເສຍຊີວິດຂອງແມ່ ແລະ ເດັກ, ທັງຫລຸດຜ່ອນການຂາດສານອາຫານຂອງແມ່ ແລະ ເດັກ, ໂດຍອີງໃສ່ຍຸດທະສາດ ແລະ ແຜນດໍາເງີນງານແຫ່ງຊາດ ໄລຍະ 2016-2020 ແລະ ຍຸດທະສາດຮອດ 2025 ສໍາລັບວຽກງານການບໍລິການສຸຂະພາບແບບຄົບວົງຈອນໃນດ້ານສຸຂະພາບຈະເລີນພັນ, ສຸຂະພາບຂອງແມ່, ສຸຂະພາບຂອງເດັກ ແລະ ເດັກເກີດໃໝ່.

**ກະຊວງແຮງງານ ແລະ ສະຫວັດດີການສັງຄົມ** ຮັບຜິດຊອບໃນການປັບປຸງລະບົບປົກປ້ອເດັກ ດ້ວຍການສ້າງຄວາມເຂັ້ມແຂງໃຫ້ວຽກງານປົກປ້ອງເດັກ ແລະ ຂະຫຍາຍຕາໜ່າງເພື່ອໃຫ້ເຂົ້າເຖິງເດັກໃນທຸກລະດັບ, ລວມທັງເພີ່ມຈໍານວນນັກສັງຄົມສົງເຄາະ ແລະ ການຈັດສັນງົບປະມານສໍາລັບການຈັດຕັ້ງປະຕິບັດວຽກງານປົກປ້ອງເດັກ ແລະ ການຊ່ວຍເຫຼືອເດັກໃນຂອບເຂດທົ່ວປະເທດ.

**ຂະແໜງພາຍໃນ** ຮັບຜິດຊອບໃນການເຜີຍແຜ່ຂໍ້ມູນຂ່າວສານທີ່ລະອຽດ ແລະ ເລິກເຊິ່ງ ເພື່ອສ້າງຄວາມເຂົ້າໃຈໃນການຈົດທະບຽນການເກີດ ພ້ອມທັງສ້າງໜ່ວຍງານຈົດທະບຽນເຄື່ອນທີ່ ສໍາລັບເດັກຢູ່ເຂດຫ່າງໄກສອກຫຼີກ.

**ຂະແໜງຖະແຫຼ່ງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ** ຮັບຜິດຊອບໃນການເຜີຍແຜ່ ແຜນດໍາເນີນງານແຫ່ງຊາດວຽກງານແມ່ ແລະ ເດັກ, ວຽກງານສິດທິເດັກ, ຜົນກະທົບຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ຜົນກະທົບຂອງການຖືພາກ່ອນໄວອັນຄວນ ແລະ ການສິ່ງລາມົກອະນາຈານ ລວມທັງສື່ທີ່ຂັດກັບກົດໝາຍຂອງລັດ ແລະ ຮີດຄອງປະເພນີອັນດີງາມຂອງຊາດ.

**ຂະແໜງຍຸຕິທໍາ** ຮັບຜິດຊອບໃນການປະສານງານກັບທຸກພາກສ່ວນທີ່ກ່ຽວຂ້ອງ ໃນການທົບທວນ, ສ້າງ ແລະ ປັບປຸງກົດໝາຍໃຫ້ແທດເໝາະກັບສະພາບຄວາມເປັນຈິງຫຼາຍຂຶ້ນ ທັງໃຫ້ສອດຄ່ອງກັບສົນທິສັນຍາສາກົນກ່ຽວກັບເດັກ, ແນ່ໃສ່ເພີ່ມຄວາມເຄົາລົບ ແລະ ການປະຕິບັດຕາມກົດໝາຍ.

**ຂະແໜງປ້ອງກັນຄວາມສະຫງົບ** ຮັບຜິດຊອບໃນການສືບສວນ (ການສອບສວນ, ການຕິດຕາມ, ການຊອກຫາຫຼັກຖານ ແລະ ດໍາເນີນຄະດີຕໍ່ຜູ້ກະທໍາຜິດໃນການໃຊ້ຄວາມຮຸນແຮງຕໍ່ເດັກ, ການສຶກສາອົບຮົມ, ການຕັກເຕືອນ, ການກໍາກັບ ແລະ ການຄຸ້ມຄອງ) ແລະ ວິທີການ ຫຼື ມາດຕະການສອບສວນ ເພື່ອປົກປ້ອງຜູ້ທີ່ໄດ້ຮັບເຄາະຮ້າຍ, ເປັນຕົ້ນແມ່ນການຈັບກຸມ ແລະ ກັກຂັງຜູ້ຕ້ອງຫາ, ຊ່ວຍເຫຼືອ ແລະ ກອບກູ້ເອົາຜູ້ທີ່ໄດ້ຮັບເຄາະຮ້າຍ, ແລະ ປະສານສົມທົບກັບພາກສ່ວນອື່ນໆທີ່ກ່ຽວຂ້ອງເພື່ອຄົ້ນຫາຜູ້ກະທໍາຜິດ ແລະ ນໍາເຂົ້າສູ່ຂະບວນການຍຸຕິທໍາ, ລວມທັງການຄຸ້ມຄອງຜູ້ຍ້າຍຖິ່ນຖານ.

**ອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດ** ຮັບຜິດຊອບຂະບວນການດໍາເນີນຄະດີເດັກ ແລະ ເຍົາວະຊົນໃຫ້ທັນຕາມກໍານົດເວລາ, ປະສານສົມທົບກັບບັນດາພາກສ່ວນກ່ຽວຂ້ອງເພື່ອຈັດຝຶກອົບຮົມກ່ຽວກັບກົດໝາຍ ໃຫ້ແກ່ພະນັກງານທີ່ກ່ຽວຂ້ອງ ເພື່ອສ້າງຄວາມເຂັ້ມແຂງໃນການຕິດຕາມການບັງຄັບໃຊ້ກົດໝາຍ.

**ສະຫະພັນແມ່ຍິງລາວ (ສຍລ)** ຮັບຜິດຊອບການບໍລິການໃຫ້ຄໍາປຶກສາແກ່ເດັກ ແລະ ຄອບຄົວ, ການປົກປ້ອງ ແລະ ການຊ່ວຍເຫຼືອຜູ້ທີ່ໄດ້ຮັບເຄາະຮ້າຍ; ໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍໂດຍບໍ່ເສຍຄ່າ; ພ້ອມທັງເອົາໃຈໃສ່ຕໍ່ການຟື້ນຟູຜູ້ທີ່ໄດ້ຮັບເຄາະຮ້າຍ ເພື່ອຊ່ວຍໃຫ້ເຂົາເຈົ້າສາມາດກັບຄືນມາດໍາລົງຊີວິດໄດ້ຢ່າງປົກກະຕິໃນສັງຄົມ.

# 3. ການຕິດຕາມ, ການຕີລາຄາ ແລະ ການລາຍງານ

ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ໃນທຸກຂັ້ນ ແລະ ທຸກຂະ ແໜງການ ຕ້ອງມີສ່ວນຮ່ວມ/ສ່ວນກ່ຽວຂ້ອງໃນການຕິດຕາມ ແລະ ຕີລາຄາຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ແຜນດຳເນີນງານ ແຫ່ງຊາດ ເພື່ອແມ່ແລະເດັກ 5 ປີ ຄັ້ງທີ III (2021-2025) ຄືດັ່ງລຸ່ມນີ້:

- ຫ້ອງການກອງເລຂາ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ເປັນຈຸດປະສານງານ/ໃຈກາງໃນການປະສານງານ ກ່ຽວກັບການຈັດຕັ້ງປະຕິບັດ ແຜນດຳເນີນງານແຫ່ງຊາດເພື່ອແມ່ ແລະ ເດັກ 5 ປີ ຄັ້ງທີ III (2021-2025) ໃນຂອບເຂດທົ່ວປະເທດ.
- ສ້າງເຄື່ອງມື ແລະ ລະບົບທີ່ຄົບວົງຈອນ/ຄົບຊຸດ ສຳລັບການຕິດຕາມ ແລະ ຕີລາຄາ ແຜນດຳເນີນງານແຫ່ງຊາດເພື່ອແມ່ ແລະ ເດັກ ຢ່າງເປັນລະບົບ, ລວມທັງການເຜີຍແຜ່ ແລະ ຝຶກອົບຮົມກ່ຽວກັບວິທີການນຳໃຊ້ລະບົບ ແລະ ເຄື່ອງມືເຫຼົ່ານັ້ນ.
- ຄະນະກຳມະການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຂອງກະຊວງ ແລະ ອົງການຕ່າງໆ ລວມທັງຄະນະກຳມະການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກຂັ້ນແຂວງ/ເມືອງ ຈະດຳເນີນການຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ແຜນດຳເນີນງານແຫ່ງຊາດເພື່ອແມ່ ແລະ ເດັກ 5 ປີ ຄັ້ງທີ III (2021-2025) ຕາມສາຍຕັ້ງຢູ່ບັນດາຂະແໜງການ ແລະ ທ້ອງຖິ່ນ, ໂດຍມີພະແນກສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ໃນນາມເປັນກອງເລຂາ ເພື່ອລາຍງານຕໍ່ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຢ່າງເປັນປົກກະຕິ.
- ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ໃນທຸກຂັ້ນ ຈະດຳເນີນກອງປະຊຸມສຳລັບແຕ່ລະໄລຍະ ຢ່າງເປັນປົກກະຕິ ເພື່ອແລກປ່ຽນບົດຮຽນກ່ຽວກັບການຈັດຕັ້ງປະຕິບັດວຽກງານ ແລະ ສະ ໜອງຂໍ້ມູນຂ່າວສານ ໃຫ້ແກ່ກອງເລຂາຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ.
- ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຈະປະສານສົມທົບກັບກະຊວງແຜນການ ແລະ ການລົງທຶນ ເພື່ອຮັບປະກັນໃຫ້ວຽກງານສິດທິເດັກ ໄດ້ຖືກເຊື່ອມສານເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

  ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ (NRA) ຈະປະສານສົມທົບກັບກະຊວງແຜນການ ແລະ ການລົງທຶນ ເພື່ອຮັບປະກັນສິດຂອງເດັກ ໄດ້ຖືກເຊື່ອມສານເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.
- ບັນດາພະແນກ, ຂະແໜງການ ແລະ ໜ່ວຍງານຕ່າງໆ ຈະຈັດກອງປະຊຸມເປັນປະຈຳທຸກໆໄຕມາດ/ກອງປະຊຸມປະຈຳໄຕມາດ;
- ຫ້ອງການກອງເລຂາຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຈະຈັດກອງປະຊຸມຮ່ວມກັບຄະນະກຳມະການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຂອງບັນດາກະຊວງ, ບັນດາອົງການ ແລະ ອົງການຈັດຕັ້ງຕ່າງໆ ທຸກໆ 3 ເດືອນ, ແລະ ຈັດກອງປະຊຸມທຸກໆ 2 ປີ ຮ່ວມກັບ ຮ່ວມກັບຄະນະກຳມະການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຂອງບັນດາກະຊວງ, ບັນດາອົງການ ແລະ ແຂວງຕ່າງໆ ທຸກໆ 6 ເດືອນ ເພື່ອທົບທວນຄວາມຄືບໜ້າຂອງວຽກງານ.
- ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຈະຈັດກອງປະຊຸມຄົບຄະນະ ປີລະຄັ້ງ.

  ຫ້ອງການກອງເລຂາຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ໂດຍປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ, ຈະດຳເນີນການທົບທວນກາງສະໄໝ (ໃນປີ 2023) ແລະ ທົບທວນທ້າຍສະໄໝ (ໃນປີ 2025) ເພື່ອປະເມີນການຈັດຕັ້ງປະຕິບັດ ແຜນດຳເນີນງານແຫ່ງຊາດເພື່ອແມ່ ແລະ ເດັກ 5 ປີ ຄັ້ງທີ III (2021-2025), ລວມທັງການຈັດຕັ້ງປະຕິບັດບັນດາເປົ້າໝາຍການພັດທະນາແບບຍືນຍົງທີ່ຕິດພັນກັບສິດທິເດັກ, ການປະຕິບັດພັນທະຂອງລັດພາຄີ ຕໍ່ສົນທິສັນຍາວ່າດ້ວຍສິດທິເດັກ ແລະ 2 ອານຸສັນຍາເພີ່ມເຕີມ; ບັນດາແຜນວຽກດ້ານສິດທິເດັກ ພາຍໃຕ້ຂອບການຮ່ວມມືກັບບັນດາປະເທດໃນພາກພື້ນອາຊີ-ປາຊີຟິກ ແລະ ແຜນວຽກສຳລັບການຮ່ວມມືກັບ ອາຊຽນ (ASEAN) ກ່ຽວກັບສິດທິເດັກ.
- ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຈະທົບທວນ ແລະ ລາຍງານການຈັດຕັ້ງປະຕິບັດແຜນດຳເນີນງານແຫ່ງຊາດ ເພື່ອແມ່ແລະເດັກ 5 ປີ ຄັ້ງທີ III (2021-2025) ຕໍ່ລັດຖະບານ ຢ່າງເປັນປົກກະຕິ.

# ຂອບເຂດຜົນໄດ້ຮັບ

| ຜົນໄດ້ຮັບທີ 1: ການສົ່ງເສີມ, ການປົກປ້ອງ ແລະ ການສ້າງໂອກາດສຳລັບເດັກ | | | | | | |
|---|---|---|---|---|---|---|
| **ວຽກບູລິມະສິດ ແລະ ຜົນການຈັດຕັ້ງປະຕິບັດ** | **ຕົວຊີ້ວັດ** | **ພື້ນຖານປຽບທຽບ** | **ຄາດໝາຍ 2025** | **ແຫຼ່ງຂໍ້ມູນ** | **ຄວາມຖີ່ຂອງການເກັບກຳຂໍ້ມູນ** | **ກະຊວງທີ່ຮັບຜິດຊອບ** |
| **ຂົງເຂດວຽກງານບູລິມະສິດ 1: ສິ່ງເສີມສິດໃນການຢູ່ລອດ** | | | | | | |
| ດ້ານໂພຊະນາການ | ອັດຕາສ່ວນເດັກລຸ່ມ 5 ປີ ທີ່ມີນ້ຳໜັກຕ່ຳກວ່າມາດຕະຖານ/ຫລຸດມາດຕະຖານ | 21,1% | 12% | LSIS | ທຸກໆ 5 ປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ) |
| | ອັດຕາສ່ວນເດັກລຸ່ມ 5 ປີ ທີ່ຂາດອາຫານຊ້ຳເຮື້ອ(ເດັກເຕ້ຍ) | 33,0% | 26% | LSIS | ທຸກໆ 5 ປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ) |
| | ການລ້ຽງລູກແມ່ພຽງຢ່າງດຽວ ສຳລັບເດັກອາຍຸແຕ່ 0-6 ເດືອນ | 44,9% | 60% | LSIS | ທຸກໆ 5 ປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ) |
| ດ້ານສາທາລະນະສຸກ | ອັດຕາການເກີດລູກໂດຍມີແພດຊຳນານງານຊ່ວຍເກີດ | 64,5% | 85% | DHIS 2 | ທຸກໆ 6 ເດືອນ | ກະຊວງສາທາລະນະສຸກ |
| | ອັດຕາການສັກຢາກັນພະຍາດຄົບ | 48,1% | 70% | LSIS | ທຸກໆ 5 ປີ | ກະຊວງສາທາລະນະສຸກ |
| | ອັດຕາການຕາຍຂອງເດັກອ່ອນ | 40/1.000 | 20/1.000 | LSISI/IGMI | ທຸກໆ 5 ປີ/ປະຈຳປີ ຫຼືທຸກປີ | ກະຊວງແຜນການ ແລະ ການລົງທຶນ/ກະຊວງສາທາລະນະສຸກ |
| | ອັດຕາການຕາຍຂອງເດັກລຸ່ມ 5 ປີ | 46/1.000 | 30/1.000 | LSIS/IGMI | ທຸກໆ 5 ປີ/ປະຈຳປີ | ກະຊວງແຜນການ ແລະ ການລົງທຶນ/ກະຊວງສາທາລະນະສຸກ |
| | ອັດຕາການຕາຍຂອງແມ່ | 196/100.000 | 100/100.000 | WHO | ຄາດວ່າທຸກໆປີ | ກະຊວງສາທາລະນະສຸກ |
| | ການນຳໃຊ້ສຸຂາພິບານຂັ້ນພື້ນຖານ | 71% | 85% | LSIS | ທຸກໆ 5 ປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ) |
| | ອັດຕາສ່ວນຄາດໝາຍສູ້ຊົນໃນການສ້າງບ້ານແບບຢ່າງດ້ານສາທາລະນະສຸກ ຕໍ່ຈຳນວນບ້ານທັງໝົດໃນທົ່ວປະເທດ | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | 85% | DHIS2 | | ກະຊວງສາທາລະນະສຸກ |
| | ອັດຕາການຕາຍຂອງໄວໜຸ່ມ | 83/1.000 | 65/1.000 | LSIS | ທຸກໆ 5 ປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ) |
| | ແມ່ຍິງຖືພາຄອນໄດ້ຮັບການຝາກທ້ອງທີ່ມີຄຸນນະພາບ ຢ່າງໜ້ອຍ 4 ຄັ້ງ ກ່ອນເກີດລູກ | 62,2% | 80% | LSIS | ທຸກໆ 5 ປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ) |
| ນ້ຳສະອາດ | ການໃຊ້ບໍລິການນ້ຳດື່ມຂັ້ນພື້ນຖານ | 78% | 95% | LSIS | ທຸກໆ 5 ປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ) |
| ສຸຂະອະນາໄມ | ອັດຕາສ່ວນຂອງສະມາຊິກຄົວເຮືອນ ທີ່ລ້າງມືຢູ່ບ່ອນທີ່ມີພ້ອມທັງນ້ຳ ແລະ ສະບູ | 54,1% | 80% | LSIS | ທຸກໆ 5 ປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ) |
| | ອັດຕາສ່ວນຂອງໂຮງຮຽນ ແລະ ສະຖານບໍລິການສຸຂະພາບ/ສຸກສາລາ ທີ່ມີບ່ອນລ້າງມື/ສິ່ງອຳນວຍຄວາມສະດວກໃນການລ້າງມືທີ່ມີພ້ອມທັງນ້ຳ ແລະ ສະບູ | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | 95% | Report | ປະຈຳປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ) |
| | ການນຳໃຊ້ສຸຂາພິບານຂັ້ນພື້ນຖານ | 71% | 80% | LSIS | ທຸກໆ 5 ປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ) |
| **ຂົງເຂດວຽກງານບູລິມະສິດ 2: ສິ່ງເສີມສິດໃນການພັດທະນາ** | | | | | | |

| | | | | | | |
|---|---|---|---|---|---|---|
| ດ້ານການສຶກສາ | ເຂົ້າກຽມຄວາມພ້ອມກ່ອນໄວຮຽນ | 31,1% | 70% | LSIS | ທຸກໆ 5 ປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ) |
| | ງົບປະມານທີ່ລັດຖະບານຈັດສັນໃຫ້ຂະແໜງສຶກສາ, %ຂອງງົບປະມານທັງໝົດ | >14% | 18 – 20% | ບົດສະຫຼຸບຫຍໍ້ດ້ານນະໂຍບາຍ/NB | ປະຈຳປີ | ກະຊວງການເງິນ |
| | ອັດຕາເຂົ້າຮຽນຊັ້ນປະຖົມ | 73,1% | 99% | LSIS | ທຸກໆ 5 ປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ) |
| | ອັດຕາປະລະການຮຽນຊັ້ນປະຖົມ | 10,4% | 2% | LSIS | ທຸກໆ 5 ປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ) |
| | ອັດຕາຄ້າງຫ້ອງຊັ້ນປະຖົມ | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | 2% | EMIS | | ກະຊວງສຶກສາທິການ ແລະ ກິລາ |
| | ຈຳນວນນັກສຶກສາທີ່ຮຽນຈົບຊັ້ນວິຊາຊີບໃນສາຂາຕ່າງໆ | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | 30.000 | Reports | ປະຈຳປີ | ກະຊວງສຶກສາທິການ ແລະ ກິລາ |
| | ອັດຕາເລື່ອນຊັ້ນປະຖົມຂຶ້ນມັດທະຍົມຕອນຕົ້ນ | 92,6% | 100% | LSIS/school census | ທຸກໆ 5 ປີ/ປະຈຳປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ/ກະຊວງສຶກສາທິການ ແລະ ກິລາ) |
| | ອັດຕາເຂົ້າຮຽນຊັ້ນມັດທະຍົມຕອນຕົ້ນສຸດທິ(ຕົວເລກດັດແກ້) | 60% | 80% | LSIS/school census | ທຸກໆ 5 ປີ/ປະຈຳປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ/ ກະຊວງສຶກສາທິການ ແລະ ກິລາ) |
| | ອັດຕາເຂົ້າຮຽນຊັ້ນມັດທະຍົມຕອນຕົ້ນສຸດທິ(ຕົວເລກດັດແກ້) | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | 8% | LSIS | ທຸກໆ 5 ປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ) |
| | ອັດຕາສ່ວນຜູ້ທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນແລ້ວສືບຕໍ່ເຂົ້າຮຽນສາຍວິຊາຊີບ | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | 80% | LSIS | ທຸກໆ 5 ປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ) |
| | ອັດຕາປະລະການຮຽນຊັ້ນມັດທະຍົມຕອນຕົ້ນ | 16,6% | 5% | LSIS | ທຸກໆ 5 ປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ) |
| **ຂົງເຂດວຽກງານບູລິມະສິດ 3: ການປົກປ້ອງເດັກ** | | | | | | |

| | | | | | | |
|---|---|---|---|---|---|---|
| ການປົກປ້ອງເດັກ | ການປະຕິບັດວິໄນ/ລົງໂທດທີ່ຮຸນແຮງ | 69% | (-21%) | | ທຸກໆ 5 ປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ) |
| | ອັດຕາການຫຼູລູກທີ່ບໍ່ປອດໄພ ແລະ ການຖືພາກ່ອນໄວອັນຄວນ | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | (-10%) | | ຈະລະບຸຕາມພາຍຫຼັງ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ) |
| | ອັດຕາການຈົດທະບຽນການເກີດ | 73% | 90% | LSIS | ທຸກໆ 5 ປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ) |
| | ການແຕ່ງງານກ່ອນໄວອັນຄວນ (ກ່ອນຮອດ 18 ປີ) | 32,7% | 16% | LSIS | ທຸກໆ 5 ປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ) |
| | ອັດຕາສ່ວນຂອງເດັກຍິງ ອາຍຸລະຫວ່າງ 15-18 ປີ ທີ່ແຕ່ງງານແລ້ວ ຫຼື ກຽມແຕ່ງງານ | 23% | 9% | LSIS | ທຸກໆ 5 ປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ) |
| | ອັດຕາສ່ວນຂອງເດັກຍິງ ອາຍຸລະຫວ່າງ 5-17 ທີ່ກ່ຽວຂ້ອງກັບການໃຊ້ແຮງງານເດັກ. | 42,5% | 16,3% | LSIS | ທຸກໆ 5 ປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ |
| | ເດັກທີ່ເຮັດວຽກຢູ່ໃນເງື່ອນໄຂສະພາບແວດລ້ອມທີ່ເປັນອັນຕະລາຍ | 27,6% | 0% | LSIS | ທຸກໆ 5 ປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ |
| | ຈຳນວນຄະນະກຳມະການປົກປ້ອງເດັກຂັ້ນເມືອງທີ່ມີຄວາມອາດສາມາດໃນການໃຫ້ຄວາມຊ່ວຍເຫຼືອແກ່ເດັກໃນຊຸມຊົນ | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | 35 ເມືອງ<br>500 ບ້ານ | | ຈະລະບຸຕາມພາຍຫຼັງ | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| | ມີຄຳແນະນຳ ຫຼື ບົດແນະນຳກ່ຽວກັບການຕ້ານການລ່ວງລະເມີດທາງເພດເດັກໃຫ້ແກ່ນັກທ່ອງທ່ຽວ ແລະ ນັກເດີນທາງ | ບໍ່ມີ | ມີ | | | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| | ຈຳນວນຜູ້ທີ່ໄດ້ຮັບເຄາະຮ້າຍຈາກລະເບີດບໍ່ທັນແຕກ | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | 40 ຄົນ/ປີ | | | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| | ນວນຜູ້ທີ່ໄດ້ຮັບເຄາະຮ້າຍຈາກລະເບີດບໍ່ທັນແຕກທີ່ໄດ້ຮັບການຊ່ວຍເຫຼືອດ້ານຕ່າງໆໃນການດຳລົງຊີວິດ ແລະ ໄດ້ຮັບການບໍລິການຕ່າງໆ | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | 6,000 | | | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| | ມີລະບົບຄຸ້ມຄອງຂໍ້ມູນຂ່າວສານສຳລັບເດັກຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ | ບໍ່ມີ | ມີ | | | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| | ອັດຕາສ່ວນຂອງເດັກທີ່ໄດ້ຮັບການຊ່ວຍເຫຼືອທາງດ້ານຈິດໃຈໃນເວລາມີເຫດການສຸກເສີນ ໄລຍະການແພ່ລະບາດຂອງພະຍາດ | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | 100% | | | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| | ມີຄຳແນະນຳກ່ຽວກັບການປົກປ້ອງເດັກຈາກການໃຊ້ສື່ອອນລາຍ, ໄພສັງຄົມ, ໄພພິບັດ ແລະ ພະຍາດ -19, ລວມທັງພະຍາດລະບາດຕາມລະດູການ | ບໍ່ມີ | ມີ | | | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| | ມີຄຳແນະນຳກ່ຽວກັບທາງເລືອກໃນການເບິ່ງແຍງລ້ຽງດູເດັກ ແລະ ການກຳນົດມາດຕະຖານຂັ້ນຕ່ຳສຳລັບການເບິ່ງແຍງລ້ຽງດູເດັກ | ບໍ່ມີ | ມີ | | | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| **ຂົງເຂດວຽກງານບູລິມະສິດ 4: ການມີສ່ວນຮ່ວມຂອງເດັກ** | | | | | | |

| | | | | | | |
|---|---|---|---|---|---|---|
| | ຈຳນວນແຂວງທີ່ປະຕິບັດຕາມຄຳແນະນຳກ່ຽວກັບຄວາມຖີ່ ຫຼື ຈຳນວນຄັ້ງຂອງກອງປະຊຸມທີ່ມີເດັກເຂົ້າຮ່ວມ | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | 10 | | | ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| | ສ້າງຕົວແບບຂອງແຜນວຽກ ແລະ ແຜນງົບປະມານທີ່ຕິດພັນກັບເດັກ ແລະ ການມີສ່ວນຮ່ວມຂອງເດັກໃນການຕັດສິນໃຈ ຢູ່ຂັ້ນບ້ານຂອງແຂວງສະຫວັນນະເຂດ. | ບໍ່ມີແຜນວຽກ | ໄດ້ສ້າງແຜນວຽກ | | | |
| | ມີບົດແນະນຳກ່ຽວກັບການໃຫ້ເດັກມີສ່ວນຮ່ວມໃນການຕັດໃຈຂອງລັດຖະບານທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ | ບໍ່ມີ | ມີ | | | ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| | ອັດຕາສ່ວນຂອງເດັກຍິງ ແລະ ເດັກຊາຍ, ເດັກພິການ ແລະ ເດັກກຸ່ມບອບບາງອື່ນໆ ຫຼື ເດັກທີ່ຕົກຢູ່ໃນຄວາມສ່ຽງ ທີ່ມີສ່ວນຮ່ວມຢ່າງຫ້າວຫັນ.ໃນການວາງແຜນຂອງທ້ອງຖິ່ນ | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | | | ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| ການມີສ່ວນຮ່ວມຂອງເດັກ | ຈຳນວນໂຮງຮຽນທີ່ສ້າງຕົວແບບຂອງການຊ່ວຍເຫຼືອຊຶ່ງກັນ ແລະ ກັນ ຢ່າງໜ້ອຍແຂວງລະ 1 ໂຮງຮຽນ | 0 | 1ໂຮງຮຽນ/ແຂວງ | | | |
| | ອັດຕາສ່ວນຂອງເດັກ (ທັງຍິງ ແລະ ຊາຍ) ທີ່ສະແດງຄວາມເພິ່ງພໍໃຈຕໍ່ການມີສ່ວນຮ່ວມຂອງເຂົາເຈົ້າ ໃນການປົກຄອງທ້ອງຖິ່ນ | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | 80% | ການສຳຫຼວດຄວາມຄິດເຫັນ | ປະຈຳປີ | ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| | ມີກົນໄກການປະຕິບັດເພື່ອການມີສ່ວນຮ່ວມຂອງເດັກ ທີ່ສົ່ງຜົນຕໍ່ວາລະຂອງການພັດທະນາຢູ່ຂັ້ນທ້ອງຖິ່ນ, ແຜນການລະດັບຊາດ ຫຼື ລະດັບທ້ອງຖິ່ນ ທີ່ສົ່ງຜົນຕໍ່ຜູ້ທີ່ດ້ອຍໂອກາດທີ່ສຸດແລະ ຜູ້ທີ່ຖືກແບ່ງແຍກຈາກສັງຄົມ | ບໍ່ມີ | ມີ | ບົດລາຍງານ | | ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| | ຈຳນວນໂຮງຮຽນຕໍ່ແຂວງທີ່ຈັດໃຫ້ມີບ່ອນ ຫຼື ມີສະຖານທີ່ສຳລັບການພັດທະນາຂອງເດັກ ແລະ ໄວໜຸ່ມ | 0 | 1ໂຮງຮຽນ/ແຂວງ | | | ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| **ຂົງເຂດວຽກງານບູລິມະສິດ 5: ສ້າງສະພາບແວດລ້ອມທີ່ເປັນມິດກັບເດັກ** | | | | | | |
| | ຈຳນວນຄັ້ງຂອງການຈັດງານ/ຈັດກິດຈະກຳເຜີຍແຜ່ຂໍ້ມູນຂ່າວສານ ເພື່ອໃຫ້ເດັກມີຄວາມສຳນຶກຫຼາຍຂຶ້ນກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ການປ່ຽນແປງສະພາບດິນຟ້າອາກາດ | 0 | 10 | ບົດລາຍງານ | ປະຈຳປີ | ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| ສະພາບແວດລ້ອມທີ່ເປັນມິດກັບເດັກ | ຈຳນວນເດັກທີ່ເຂົ້າເຖິງອຸປະກອນ, ເອກະສານ/ເນື້ອໃນ ຫຼື ວິທີການກ່ຽວກັບການປ່ຽນແປງສະພາບດິນຟ້າອາກາດ ແລະ ການປົກປັກຮັກສາສິ່ງແວດລ້ອມ | 0 | 100.000 | | | NCAWMC/MoLSW |
| | ອັດຕາສ່ວນຂອງເດັກທີ່ເສຍຊີວິດຍ້ອນອຸບັດເຫດຕາມທ້ອງຖະໜົນ, ຄິດໄລ່ເປັນ % ຂອງການເສຍຊີວິດຍ້ອນອຸບັດເຫດຕາມທ້ອງຖະໜົນທັງໝົດ ໃຫ້ຫລຸດລົງເຄິ່ງໜຶ່ງ | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | ໃຫ້ຫຼຸດລົງ 50% | | | |
| | | | | | | |

| | | | | | | |
|---|---|---|---|---|---|---|
| **ຜົນໄດ້ຮັບທີ 2: ສົ່ງເສີມການປູກຈິດສຳນຶກ, ການສ້າງຖານຂໍ້ມູນ ແລະ ການຄົ້ນຄວ້າ-ວິໄຈ** | | | | | | |
| **ວຽກບູລິມະສິດ ແລະ ຜົນການຈັດຕັ້ງປະຕິບັດ** | **ຕົວຊີ້ວັດ** | **ພື້ນຖານປຽບທຽບ** | **ຄາດໝາຍ** | | | |
| **ຂົງເຂດວຽກງານບູລິມະສິດ 1: ການສົ່ງເສີມ/ສະໜັບສະໜູນ ແລະ ການປູກຈິດສຳນຶກ** | | | | | | |

| | | | | | | |
|---|---|---|---|---|---|---|
| | ຈຳນວນຄັ້ງຂອງການຈັດງານ/ກິດຈະກຳ ເພື່ອເຜີຍແຜ່ເນື້ອໃນຂອງສົນທິສັນຍາວ່າດ້ວຍສິດທິເດັກ ແລະ ບັນດາອະນຸສັນຍາເພີ່ມເຕີມ ໃຫ້ແກ່ພະນັກງານວິຊາການຝ່າຍຕຸລາການ, ເຈົ້າໜ້າທີ່ຕຳຫຼວດ ແລະ ທະຫານ, ຄູ/ອາຈານ, ພະນັກງານຂະແໜງສາທາລະນະສຸກ, ນັກສັງຄົມສົງເຄາະ ແລະ ສື່ມວນຊົນ ໃຫ້ໄດ້ຢ່າງໜ້ອຍ 5ຄັ້ງ/ປີ | 0 | 5 | ບົດລາຍງານ | ປະຈຳປີ | ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| | ຈຳນວນຄັ້ງຂອງການຈັດງານເພື່ອປູກຈິດສຳນຶກໃຫ້ແກ່ເດັກ ແລະ ຄອບຄົວຂອງເຂົາເຈົ້າ ກ່ຽວກັບສົນທິສັນຍາວ່າດ້ວຍສິດທິເດັກ ແລະ ບັນດາອະນຸສັນຍາເພີ່ມເຕີມ ຢ່າງໜ້ອຍໃຫ້ໄດ້ 10 ຄັ້ງ/ປີ | 0 | 10 | ບົດລາຍງານ | ປະຈຳປີ | ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| | ຈຳນວນຄັ້ງຂອງການຈັດງານ/ກິດຈະກຳເຜີຍແຜ່ຂໍ້ມູນຂ່າວສານ ໃຫ້ແກ່ພະນັກງານລັດ, ປະຊາຊົນທົ່ວໄປ ແລະ ຄອບຄົວຂອງເດັກພິການ ເພື່ອຫລຸດຜ່ອນການແບ່ງແຍກ/ໝິ່ນປະໝາດ ແລະ ເພື່ອສົ່ງເສີມຄວາມເປັນຢູ່ທີ່ດີຂຶ້ນຂອງເດັກພິການ | 0 | 5 | ບົດລາຍງານ | ປະຈຳປີ | ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| | ຈຳນວນຄັ້ງຂອງການຈັດງານ/ກິດຈະກຳ ເພື່ອປູກຈິດສຳນຶກໃຫ້ແກ່ເຈົ້າໜ້າທີ່ຕຳຫຼວດທົ່ວປະເທດ, ໂດຍສະເພາະແມ່ນເຈົ້າໜ້າທີ່ສືບສວນ-ສອບສວນກ່ຽວກັບການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ການຕ້ານການຄ້າຂາຍເດັກ ແລະ ການຄ້າປະເວນີເດັກ | 0 | 10 times/year | | | |
| | ມີເຄື່ອງມື ແລະ ຄຳແນະນຳ ສຳລັບການປູກຈິດສຳນຶກກ່ຽວກັບ ຜົນກະທົບດ້ານລົບຂອງການໃຊ້ຢາເສບຕິດ ຜ່ານທາງອອນລາຍ, ພ້ອມທັງຈັດກິດຈະກຳເພື່ອປູກຈິດສຳນຶກໃຫ້ແກ່ເດັກ ແລະ ໄວໜຸ່ມ ໃຫ້ຫ່າງໄກຈາກຢາເສບຕິດ | ບໍ່ມີ | ມີ | ບົດລາຍງານ/ເຄື່ອງມື | | ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| | ຈຳນວນຄັ້ງຂອງການຈັດງານ/ກິດຈະກຳ ເພື່ອປູກຈິດສຳນຶກກ່ຽວກັບຄວາມສຳຄັນຂອງໃບຢັ້ງຢືນການເກີດ | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | 50 ບ້ານ/ປີ | ບົດລາຍງານ | ປະຈຳປີ | ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| | ຈຳນວນຄັ້ງຂອງການຈັດງານ/ກິດຈະກຳ ເພື່ອປູກຈິດສຳນຶກໃຫ້ແກ່ເດັກ ກ່ຽວກັບຜົນກະທົບຂອງການໃຊ້ສານເສບຕິດ, ສຸຂະພາບຈະເລີນພັນ, ອຸບັດເຫດຕາມທ້ອງຖະໜົນ ແລະ ການນຳໃຊ້ສື່ອອນລາຍຢ່າງປອດໄພ | 0 | 10 | ບົດລາຍງານ | ປະຈຳປີ | ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| | ຈຳນວນຄັ້ງຂອງການຈັດງານ/ກິດຈະກຳເພື່ອປູກຈິດສຳນຶກ ໃຫ້ແກ່ເດັກ, ຄອບຄົວ, ຊຸມຊົນ/ສັງຄົມ, ອຳນາດການປົກຄອງທ້ອງຖິ່ນ, ຜູ້ນຳສາສະໜາ ແລະ ຫົວໜ້າເຜົ່າ/ເຈົ້າກົກເຈົ້າເຫຼົ່າ, ຜູ້ພິພາກສາ ແລະ ໄອຍະການ ກ່ຽວກັບຜົນກະທົບຂອງການແຕ່ງງານໃນໄວເດັກຕໍ່ສຸຂະພາບກາຍ, ສຸຂະພາບໃຈ ແລະ ຄວາມເປັນຢູ່ທີ່ດີຂອງເດັກ | 0 | 10 | ບົດລາຍງານ | ປະຈຳປີ | ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| **ຂົງເຂດວຽກງານບູລິມະສິດ 2:** ສ້າງຖານຂໍ້ມູນ ແລະ ການສຶກສາ/ຄົ້ນຄວ້າຕ່າງໆ | | | | | | |
| | ມີຖານຂໍ້ມູນທີ່ເປັນລະບົບ ຢູ່ ສປປ ລາວ ກ່ຽວກັບສະຫວັດດີການທີ່ຄຸ້ມຄອງຮອບດ້ານ ແລະ ທົ່ວເຖິງ, ຖານຂໍ້ມູນກ່ຽວກັບສິດທິເດັກທີ່ສະໜອງຕອບຕໍ່ເພດ ແລະ ອ່ອນໄຫວຕໍ່ຄວາມພິການ. | ບໍ່ມີຖານຂໍ້ມູນ | ມີ | | | ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ/ສູນສະຖິຕິແຫ່ງຊາດ |
| | ລະບົບຕິດຕາມ ແລະ ປະເມີນ ເພື່ອຕິດຕາມບັນດາຕົວຊີ້ວັດທາງດ້ານສັງຄົມຂອງສິດທິເດັກ | ບໍ່ມີ | ມີ | | | ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ/ກະຊວງແຜນການ ແລະ ການລົງທຶນ |
| | ມີການບໍລິການຈົດທະບຽນການເກີດເພື່ອທຸກຄົນ ແລະ ບໍ່ໄດ້ເສຍຄ່າ ໃນການຈົດທະບຽນພົນລະເມືອງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍຂອງລັດ. | ບໍ່ມີ | ມີ | | | ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| **ຜົນໄດ້ຮັບທີ 3: ທົບທວນນະໂຍບາຍ ແລະ ກົດໝາຍ ແລະ ການຈັດຕັ້ງປະຕິບັດຄຳໝັ້ນສັນຍາ/ສັດຕະຍາບັນລະດັບສາກົນ ແລະ ພາກພື້ນ** | | | | | | |
| **ວຽກບູລິມະສິດ ແລະ ຜົນການຈັດຕັ້ງປະຕິບັດ** | **ຕົວຊີ້ວັດ** | **ພື້ນຖານປຽບທຽບ** | **ຄາດໝາຍ** | | | |
| ຂົງເຂດວຽກງານບູລິມະສິດ 1: ທົບທວນນະໂຍບາຍແຫ່ງຊາດ ແລະ ກົດໝາຍທີ່ສອດຄ່ອງກັບກົດໝາຍສາກົນ ທີ່ ສປປ ລາວ ເປັນພາຄີ | | | | | | |

| | | | | | | |
|---|---|---|---|---|---|---|
| | ມີຂັ້ນຕອນ ແລະ ການຊ່ວຍເຫຼືອສໍາລັບເດັກທີ່ຖືກຕ້ອງຕາມກົດໝາຍ ທີ່ໄດ້ນໍາໃຊ້ເຂົ້າໃນການຊ່ວຍເຫຼືອ ແລະ ສົ່ງມອບເດັກ ໂດຍສອດຄ່ອງຕາມຫຼັກສາກົນ | ບໍ່ມີ | ມີ | ບົດລາຍງານ | ປະຈໍາປີ | ຄະນະກໍາມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| | ມີກົດໝາຍສະບັບປັບປຸງ ເພື່ອສົ່ງເສີມການປູກຈິດສໍານຶກກ່ຽວກັບໄພອັນຕະລາຍ ແລະ ຜົນສະທ້ອນ/ຜົນກະທົບຂອງການຄ້າມະນຸດ | ບໍ່ມີ | ມີ | ບົດລາຍງານ | ປະຈໍາປີ | ຄະນະກໍາມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| **ຂົງເຂດວຽກງານບູລິມະສິດ 2: ການຈັດຕັ້ງປະຕິບັດຄໍາໝັ້ນສັນຍາທີ່ໃຫ້ໄວ້ກັບສາກົນ** | | | | | | |
| | ມີບົດລາຍງານສະບັບທີ 7 ຂອງລັດພາຄີ ກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາ ວ່າດ້ວຍສິດທິເດັກ ໃນປີ 2023 | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | ໄດ້ສົ່ງບົດລາຍງານ | ບົດລາຍງານ | ປະຈໍາປີ | ຄະນະກໍາມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| | ມີກົດໝາຍທີ່ຄໍານຶງເຖິງສິດຂອງເດັກໃນການຖືກຮັບຟັງໃນຂະບວນການດໍາເນີນຄະດີແພ່ງ ແລະ ຄະດີປົກຄອງທີ່ມີຜົນຕໍ່ເຂົາເຈົ້າ (ສອດຄ່ອງກັບມາດຕາ 12 ຂອງ ສົນທິສັນຍາ ວ່າດ້ວຍສິດທິເດັກ) | ບໍ່ມີ | ມີ | ບົດລາຍງານ | | ຄະນະກໍາມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| | ມີບົດລາຍງານກ່ຍວກັບການເຊື່ອມສານເອົາຄໍາແນະນໍາຂອງສະຫະປະຊາຊາດເຂົ້າໃນບົດລາຍງານຂອງລັດພາຄີ ກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາ ວ່າດ້ວຍສິດທິເດັກ ແລະ ສອງອະນຸສັນຍາເພີ່ມເຕີມ ໃນການສ້າງກົດໝາຍ, ຍຸດທະສາດ, ແຜນດໍາເນີນງານ, ແຜນງານຂອງຂະແໜງການ ແລະ ທ້ອງຖິ່ນ | ບໍ່ມີ | ມີ | ບົດລາຍງານ | | ຄະນະກໍາມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| **ຂົງເຂດວຽກງານບູລິມະສິດ 3: ການຈັດຕັ້ງປະຕິບັດຄໍາໝັ້ນສັນຍາທີ່ໃຫ້ໄວ້ກັບອາຊຽນ** | | | | | | |
| | ມີບົດລາຍງານການຈັດຕັ້ງປະຕິບັດ ຖະແຫຼງການ ອາຊຽນ ກ່ຽວກັບສິດທິເດັກ. | ບໍ່ມີ | ມີ | | | |
| | ມີລະບົບຕິດຕາມ ເພື່ອຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ບັນດາພັນທະຜູກພັນຂອງລັດຖະບານຕໍ່ສົນທິສັນຍາ, ຖະແຫຼງການ ອາຊຽນ ທີ່ພົວພັນເຖິງສິດທິເດັກ. | ບໍ່ມີ | ມີ | | | ຄະນະກໍາມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| | ຈໍານວນຄັ້ງຂອງງານ/ເຫດການທີ່ເດັກມີສ່ວນຮ່ວມໃນກອບວຽກຂອງ ອາຊຽນ ສໍາລັບຄະນະກໍາມະການ ສົ່ງເສີມສິດຂອງແມ່ຍິງ ແລະ ເດັກ | 0 | 2ຄັ້ງ/ປີ | | | |
| **ຂົງເຂດວຽກງານບູລິມະສິດ 4: ການຮ່ວມມືກັບບັນດາປະເທດໃນພາກພື້ນອາຊີ-ປາຊີຟິກ** | | | | | | |
| | ຈໍານວນຄັ້ງຂອງການຢ້ຽມຢາມ ໂດຍຕອບສະໜອງຕາມຂອບການຮ່ວມມື ໃຕ້-ໃຕ້ ຂອງບັນດາປະເທດອາຊີ-ປາຊີຟິກ ໃນດ້ານ:<br>(i) ການຫລຸດຜ່ອນຄວາມສ່ຽງຈາກໄພພິບັດ;<br>(ii) ການປົກປ້ອງເດັກ ແລະ ລະບົບສະຫວັດດີການຕ່າງໆ; ແລະ<br>(iii) ຮັບປະກັນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີຄວາມສະເໝີພາບ ແລະ ເຂົ້າເຖິງເດັກທຸກຄົນ | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | 2ຄັ້ງ/ປີ | ບົດລາຍງານ | ປະຈໍາປີ | ຄະນະກໍາມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |

**ຜົນໄດ້ຮັບທີ 4: ສ້າງຄວາມເຂັ້ມແຂງໃຫ້ແກ່ໂຄງຮ່າງການຈັດຕັ້ງ ແລະ ບຸກຄະລາກອນທີ່ເຮັດວຽກດ້ານສິດທິເດັກ.**

| ວຽກບູລິມະສິດ ແລະ ຜົນການຈັດຕັ້ງປະຕິບັດ | ຕົວຊີ້ວັດ | ພື້ນຖານປຽບທຽບ | ຄາດໝາຍ | | | |
|---|---|---|---|---|---|---|
| **ຂົງເຂດວຽກງານບູລິມະສິດ 1: ສ້າງຄວາມເຂັ້ມແຂງ ໃຫ້ແກ່ໂຄງຮ່າງການຈັດຕັ້ງ ຂອງຄະນະກໍາມະການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຢູ່ແຕ່ລະຂັ້ນ** | | | | | | |
| | ມີໂຄງຮ່າງການຈັດຕັ້ງທີ່ເປັນລະບົບຄົບຊຸດ ສໍາລັບຄະນະກໍາມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ແລະ ໜ່ວຍງານຊ່ວຍວຽກຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ. | ບໍ່ມີ | ມີ | ບົດລາຍງານ | | ຄະນະກໍາມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| | ຈໍານວນຄັ້ງຂອງການຈັດຝຶກອົບຮົມກ່ຽວກັບສິດທິເດັກ ໃຫ້ແກ່ພະນັກງານຂອງຄະນະກໍາມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ແລະ ພະນັກງານໃນໜ່ວຍງານຊ່ວຍວຽກຂັ້ນສູນກາງ ແລະ ທ້ອງຖິ່ນ | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | 3 times/year | ບົດລາຍງານ | ປະຈໍາປີ | ຄະນະກໍາມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| | ອັດຕາການເພີ່ມຂຶ້ນຂອງງົບປະມານສໍາລັບການພັດທະນາຊັບພະຍາກອນມະນຸດຂອງຄະນະກໍາມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຢູ່ແຕ່ລະຂັ້ນ (ຢ່າງໜ້ອຍ 8  10% ຂອງງົບປະມານສໍາລັບການພັດທະນາເດັກຂອງຂະແໜງການທັງໝົດ | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | 10% | ລາຍງານງົບປະມານ | ປະຈໍາປີ | ກະຊວງການເງິນ/ຄະນະກໍາມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |

| | | | | | | |
|---|---|---|---|---|---|---|
| **ຂົງເຂດວຽກງານບູລິມະສິດ 2: ປັບປຸງກົນໄກ ແລະ ຂັ້ນຕອນການປະສານງານ ເພື່ອຮັບປະກັນຄວາມເປັນເອກະພາບ ແລະ ອັນໜຶ່ງອັນດຽວກັນລະຫວ່າງພາກສ່ວນຕ່າງໆທີ່ເຮັດວຽກດ້ານສິດທິເດັກ** | | | | | | |
| | ມີກົນໄກການປະສານງານ, ກົນໄກການຈັດຕັ້ງປະຕິບັດ ແລະ ກົນໄກການລາຍງານກ່ຽວກັບວຽກງານດ້ານສິດທິເດັກ. | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | 90% | ບົດລາຍງານ | ປະຈຳປີ | ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| **ຂົງເຂດວຽກງານບູລິມະສິດ 3: ບຸກຄະລາກອນທີ່ເຮັດວຽກດ້ານສິດທິເດັກ** | | | | | | |
| | ມີບົດລາຍງານປະຈຳປີ ກ່ຽວກັບຜົນການຈັດຕັ້ງປະຕິບັດຄຳໝັ້ນສັນຍາຂອງລັດພາຄີ | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | ປະຈຳປີ | ບົດລາຍງານ | ປະຈຳປີ | ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| | ຈຳນວນພະນັກງານດ້ານສິດທິເດັກທີ່ຮັບເຂົ້າໃໝ່ | 0 | 15 | | | |
| **ຜົນໄດ້ຮັບທີ 5: ຫຼຸດຜ່ອນຈຳນວນເດັກທີ່ທຸກຍາກ ແລະ ດ້ອຍໂອກາດໃນຫຼາຍໆດ້ານ ຫຼື ເດັກທີ່ຢູ່ໃນຄົວເຮືອນທຸກຍາກ ຢູ່ ສປປ ລາວ** | | | | | | |
| **ວຽກບູລິມະສິດ ແລະ ຜົນການຈັດຕັ້ງປະຕິບັດ** | **ຕົວຊີ້ວັດ** | **ພື້ນຖານປຽບທຽບ** | **ຄາດໝາຍ** | | | |
| **ຂົງເຂດວຽກງານບູລິມະສິດ 1: ສ້າງຄວາມອາດສາມາດໃຫ້ແກ່ລັດຖະບານ ແລະ ອຳນາດການປົກຄອງທຸກຂັ້ນ ເພື່ອຫລຸດຜ່ອນຄວາມທຸກຍາກຂອງເດັກໃນທຸກໆດ້ານ.** | | | | | | |
| | ອັດຕາຄວາມທຸກຍາກຂອງເດັກຢູ່ແຕ່ລະແຂວງທີ່ທຸກຍາກ ຫຼື ດ້ອຍໂອກາດຢ່າງໜ້ອຍ 3 ດ້ານ | 50%(ສະເລ່ຍທົ່ວປະເທດ)) | ໃຫ້ຫລຸດລົງ 25% ຕໍ່ແຂວງ | ບົດລາຍງານ MODA | ທຸກໆ 5 ປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ) |
| | ເປີເຊັນ ຫຼື ອັດຕາສ່ວນຂອງພາກເອກະຊົນທີ່ປະຕິບັດຕາມຫຼັກການດຳເນີນທຸລະກິດ ແລະ ຫຼັກການດ້ານສິດທິເດັກ | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | 50% | ບົດລາຍງານ | ປະຈຳປີ | ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| | ຈຳນວນອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ເພື່ອປະຕິບັດ 5 ຫຼັກການຂອງສົນທິສັນຍາວ່າດ້ວຍສິດທິເດັກ (ດ້ານສຸຂະພາບ, ການສຶກສາ, ການປົກປ້ອງເດັກ, ສະພາບແວດລ້ອມທີ່ສະອາດ ແລະ ປອດໄພກວ່າສຳລັບເດັກ ແລະ ການມີສ່ວນຮ່ວມຂອງເດັກ) | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | 50 | ບົດລາຍງານ | ປະຈຳປີ | ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| | ມາດຕະຖານຂອງລັດຖະບານເພື່ອວັດແທກຄວາມທຸກຍາກຂອງເດັກ ໂດຍໃຊ້ມາດຕະຖານວັດແທກທີ່ຄິດໄລ່ເປັນເງິນ ແລະ ມາດຕະຖານດ້ານເງື່ອນໄຂໃນການເຂົ້າເຖິງຄວາມຈຳເປັນພື້ນຖານໃນການດຳລົງຊີວິດ ແລະ ການບໍລິການຕ່າງໆ | MDCP only | MDCP & monetary poverty | MODA and LECS6 analysis | ທຸກໆ 5 ປີ | MPI/LSB |
| | ມີການສະໜັບສະໜູນ ແລະ ການຖືເອົາບັນຫາຄວາມທຸກຍາກຂອງເດັກ ໃຫ້ເປັນວຽກງານບູລິມະສິດລະດັບຊາດ | ບໍ່ມີ | ມີ | ບົດລາຍງານ | ປະຈຳປີ | ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ |
| **ຂົງເຂດວຽກງານບູລິມະສິດ 2: ປັບປຸງກົນໄກການປະສານງານ ແລະ ລະບົບປົກປ້ອງສັງຄົມເພື່ອແມ່ ແລະ ເດັກ ຢູ່ ສປປ ລາວ** | | | | | | |

| | | | | | | |
|---|---|---|---|---|---|---|
| | ຈຳນວນເດັກໃນຊ່ວງອາຍຸ 1.000 ມື້ທຳອິດ ທີ່ໄດ້ຮັບເງິນອຸດໜູນ. | 0 | 1.400 | ບົດລາຍງານໂຄງການ | | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| | ມີກົນໄກການປະສານງານລະດັບຊາດ ແລະ ລະດັບທ້ອງຖິ່ນສຳລັບວຽກງານປົກປ້ອງສັງຄົມ. | ບໍ່ມີ | ມີ | ບົດລາຍງານ | | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| | ຈຳນວນແມ່ຍິງຈາກບັນດາບ້ານທີ່ທຸກຍາກທີ່ສຸດ ທີ່ໄດ້ຮັບການຊ່ວຍເຫຼືອ/ສະໜັບສະໜູນດ້ານທຶນຮອນ ແລະ ທັກສະໃນການບໍລິການທຸລະກິດ | | | | | |
| | ອັດຕາສ່ວນຕໍ່ປະຊາກອນທັງໝົດຂອງເດັກ ອາຍຸລະຫວ່າງ 5-17 ປີ ທີ່ເຂົ້າເຖິງລະບົບປະກັນສຸຂະພາບ<br><br>ສຳລັບເດັກລຸ່ມ 5 ປີທີ່ເຂົ້າເຖິງລະບົບປະກັນສຸຂະພາບ | 10%<br><br>13.7% | 95% | LSIS | ທຸກໆ 5 ປີ | ກະຊວງແຜນການ ແລະ ການລົງທຶນ(ສູນສະຖິຕິແຫ່ງຊາດ) |
| | ງົບປະມານທີ່ລັດຖະບານຈັດສັນ ໃຫ້ວຽກງານປົກປ້ອງສັງຄົມ, % ຂອງງົບປະມານທັງໝົດ | 1<br><br>>1% | 2 -5% | ບົດລາຍງານແຜນງົບປະມານ | ປະຈຳປີ | ກະຊວງການເງິນ |
| | ຈຳນວນແມ່ຍິງຖືພາທີ່ໄດ້ຮັບຜົນປະໂຫຍດຈາກການບໍລິການຮັກສາສຸຂະພາບໂດຍບໍ່ເສຍຄ່າ | ຕົວເລກລະອຽດຈະລະບຸຕາມພາຍຫຼັງ | 100 | ບົດລາຍງານ/ DHIS2 | ປະຈຳປີ | ກະຊວງສາທາລະນະສຸກ |

**Acronyms:** DHS = Demographic and Health Survey, LSIS = Lao Social Indicator Survey, LSB = Lao Statistics Bureau, MODA = Multiple Overlapping Deprivation Analysis, MoES = Ministry of Education and Sport, MoF = Ministry of Finance, MoH = Ministry of Health, MoLSW = Ministry of Labour and Social Welfare, MPI = Ministry of Planning and Investment, NCAWMC = National Commission for the Advancement of Women, Mothers and Children, UXO = unexploded ordnances, WASH = Water, Sanitation and Hygiene



ຄຊກມດ
NCAWMC

unicef
ເພື່ອເດັກທຸກໆຄົນ